ພະແນກແຜນການ ແລະ ການລົງທຶນ

ສູນສະຖິຕິປະຈຳ ແຂວງ



# ປື້ມຂໍ້ມູນສະຖິຕິຂັ້ນທ້ອງຖິ່ນປະຈຳປີ 2018

# ແຂວງ ບໍ່ແກ້ວ

ຕຸລາ 2020

# ຄຳນຳ

ການມີສະຖິຕິທີ່ຄົບຖ້ວນ, ຊັດເຈນ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ ແມ່ນມີຄວາມສຳຄັນ ແລະ ຈຳເປັນໃນການວາງແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ, ສາມາດເປັນບ່ອນອີງໃຫ້ແກ່ການກຳນົດທິດທາງ ສຳລັບການຕັດສິນໃຈ ແລະ ວາງນະໂຍບາຍໃນການແກ້ໄຂບັນຫາຕ່າງໆ ແລະ ສາມາດເປັນບ່ອນອີງໃຫ້ແກ່ການຕິດຕາມ , ການສ້າງແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ໃນແຕ່ລະໄລຍະ, ແລະ ເພື່ອຕອບສະໜອງບັນດາຕົວຊີ້ບອກ ຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ ຕາມກອບຄວາມຕ້ອງການໃນຍຸດທະສາດວ່າດ້ວຍການພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025 ແລະ ວິໄສທັດ ຮອດ ປີ 2030, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ເປົ້າໝາຍການພັດທະນາແບບຍືນຍົງ (SDGs).

ແຂວງ ບໍ່ແກ້ວ ກໍ່ເປັນແຂວງໜຶ່ງ ທີ່ໄດ້ຈັດຕັ້ງປະຕິບັດ ໃນການ ເກັບກຳ ແລະ ລາຍງານຂໍ້ມູນສະຖິຕິທ້ອງຖິ່ນ ທີ່ຕິດພັນກັບວຽກງານສາມສ້າງຂອງແຂວງ. ດັ່ງນັ້ນ ສູນສະຖິຕິປະຈຳແຂວງ ຈຶ່ງໄດ້ອີງໃສ່ຂໍ້ມູນສະຖິຕິທີ່ໄດ້ເກັບກຳທົ່ວ ທົ່ວແຂວງ ບໍ່ແກ້ວ ໃນຕົ້ນປີ 2018 ມາສ້າງເປັນປຶ້ມສະຖິຕິປະຈຳປີຂອງແຂວງບໍ່ແກ້ວ (ວາລະສານສະຖິຕິປະຈຳປີ ແຂວງບໍ່ແກ້ວ) ເຊິ່ງໄດ້ສ້າງ ແລະ ຈັດພິມ ໂດຍການຮ່ວມມືລະຫວ່າງ ສູນສະຖິຕິປະຈຳແຂວງ ແລະ ສູນສະຖິຕິແຫ່ງຊາດ. ປຶ້ມສະຖິຕິປະຈຳປີສະບັບນີ້ ໄດ້ສັງລວມເອົາບັນດາຂໍ້ມູນພື້ນຖານຈາກການເກັບກຳຂໍ້ມູນຂັ້ນບ້ານ, ແລະ ຂໍ້ມູນທີ່ກ່ຽວຂ້ອງຈາກບັນດາຫ້ອງການອ້ອມຂ້າງຫ້າເມືອງ ແລະ ຂະແໜງການອ້ອມຂ້າງແຂວງ ເພື່ອເປັນຂໍ້ມູນອ້າງອີງໃຫ້ແກ່ການສຶກສາຄົ້ນຄວ້າ ແລະ ນຳໃຊ້ຂໍ້ມູນຢູ່ໃນຂັ້ນແຂວງ.

ນະໂອກາດນີ້ ສູນສະຖິຕິປະຈຳແຂວງ ບໍ່ແກ້ວ, ຂໍສະແດງຄວາມຂອບໃຈນຳທຸກພາກສ່ວນທີ່ໄດ້ປະກອບສ່ວນສະໜອງຂໍ້ມູນ ແລະ ບັນດາທ່ານຜູ້ນຳໃຊ້ຂໍ້ມູນ ຊ່ວຍໃຫ້ຄຳແນະນຳຕິຊົມຕໍ່ກັບປຶ້ມສະຖິຕິປະຈຳປີຂອງແຂວງ ບໍ່ແກ້ວ ພວກເຮົາ. ຫວັງຢ່າງຍິ່ງວ່າຈະໄດ້ຮັບການປະກອບສ່ວນ ແລະ ຄວາມຄິດຄວາມເຫັນທີ່ດີຈາກບັນດາທ່ານ ເພື່ອປັບປຸງປຶ້ມສະຖິຕິປະຈຳປີສະບັບຕໍ່ໄປ ແລະ ທຸກພາກສ່ວນ ເພື່ອສະໜອງຂໍ້ມູນໃຫ້ແທດເໝາະກັບຄວາມຕ້ອງການຂອງຜູ້ນຳໃຊ້ທັງພາຍໃນ ແລະ ຕ່າງປະເທດ.

ຫົວໜ້າສູນສະຖິຕິປະຈຳແຂວງ

ສິງຄຳ ສີລີປັນຍາ

# ສະຫຼຸບຫຍໍ້

**ຄຸນລັກສະນະຂອງບ້ານ**

- ໃນປີ 2018, ແຂວງ ບໍ່ແກ້ວ ມີບ້ານທັງໝົດ 248 ບ້ານ ເມື່ອທຽບກັບຈໍານວນບ້ານໃນປີ 2015 (256) ເຫັນວ່າຫຼຸດລົງ 8 ບ້ານ. ໃນນີ້, ຈໍານວນບ້ານຕົວເມືອງ ຈາກ 54 ບ້ານ ໃນປີ 2015, ມາຮອດປີ 2018 ມາເປັນ 45 ບ້ານ ແມ່ນຫຼຸດລົງ 9 ບ້ານ; ສ່ວນບ້ານຊົນນະບົດທີ່ມີເສັ້ນທາງເຂົ້າເຖິງ ໃນປີ 2015 ມີ 175 ບ້ານ ມາເປັນ 190 ບ້ານ ເພີ່ມຂຶ້ນ 15 ບ້ານ ໃນປີ 2018 ແລະ ບ້ານຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງແມ່ນ ໄດ້ຫຼຸດລົງ 82 ຈາກ 27 ບ້ານ ໃນປີ 2015 ມາເປັນ 13 ບ້ານ ໃນປີ 2018.

**ລັກສະນະທີ່ຕັ້ງພູມສັນຖານຂອງບ້ານ**

- ຈາກການເກັບກໍາຂໍ້ມູນສະຖິຕິຂັ້ນທ້ອງຖິ່ນ ໃນ ປີ 2018 ແຂວງ ບໍ່ແກ້ວ ບ້ານສ່ວຍຫຼາຍແມ່ນຕັ້ງຢູ່ໃນເຂດທົ່ງພຽງ ມີຈໍານວນ 107 ບ້ານ ກວມເອົາ 43.15 ສ່ວນຮ້ອຍ, ເຂດພູພຽງ 106 ບ້ານ ກວມອັດຕາສ່ວນ 42.74 ສ່ວນຮ້ອຍ ແລະ ເຂດທົ່ງພຽງ ຈໍານວນ 35 ບ້ານ ກວມເອົາ 14.11 ສ່ວນຮ້ອຍ.

**ລັກສະນະພື້ນຖານໂຄງລ່າງບ້ານ**

- ທົ່ວແຂວງ ບໍ່ແກ້ວ ມີຈໍານວນບ້ານທັງໝົດ 248 ບ້ານ ໃນນີ້:
- ລົດໃຫຍ່ສາມາດເຂົ້າເຖິງໄດ້ ໃນລະດູແລ້ງ ຈໍານວນ 237 ບ້ານ (95.56 ສ່ວນຮ້ອຍ)
- ລົດໃຫຍ່ສາມາດເຂົ້າເຖິງໄດ້ໃນລະດູຝົນ ຈໍານວນ 234 ບ້ານ (94.35 ສ່ວນຮ້ອຍ)
- ມີໄຟຟ້າຕາຂ່າຍຂອງລັດໃຊ້ຈໍານວນ 239 ບ້ານ (96.37 ສ່ວນຮ້ອຍ).
- ມີນໍ້າປະປາໃຊ້ 32 ບ້ານ ( 12.90 ສ່ວນຮ້ອຍ)
- ມີຕະຫຼາດຖາວອນຕັ້ງຢູ່ໃນບ້ານທີ່ມີການຊື້ຂາຍແລກປ່ຽນທຸກວັນ ຈໍານວນ 22 ບ້ານ(8.87 ສ່ວນຮ້ອຍ) ແລະ ມີຕະຫຼາດຕັ້ງຢູ່ໃກ້ ຈໍານວນ 74 ບ້ານ(29.84 ສ່ວນຮ້ອຍ)
- ບ້ານທີ່ມີລົດໂດຍສານແລ່ນຜ່ານ ແລະ ຈອດຮັບຄົນໂດຍສານ ຈໍານວນ 133 ບ້ານ(53.63 ສ່ວນຮ້ອຍ)
- ບ້ານທີ່ມີຮ້ານຄ້າຂາຍ,ຮ້ານຂາຍຕ່າງໆ ຈໍານວນ 238 ບ້ານ (95.97 ສ່ວນຮ້ອຍ)
- ບ້ານໄດ້ຮັບໂຄງການພັດທະນາໃດໜຶ່ງ ຈໍານວນ 95 ບ້ານ (38.3 ສ່ວນຮ້ອຍ)
- ມີກອງທຶນໃດໜຶ່ງໃນບ້ານ ຈໍານວນ 154 ບ້ານ (62.1 ສ່ວນຮ້ອຍ)
- ບ້ານໄດ້ຮັບໃບຢັ້ງຢືນດ້ານການພັດທະນາ ຈໍານວນ 115 ບ້ານ ( 46.37 ສ່ວນຮ້ອຍ)
- ບ້ານໄດ້ຮັບໃບຢັ້ງຢືນດ້ານສາທາລະນະສຸກແບບຢ່າງ ຈໍານວນ 205 ບ້ານ (82.66 ສ່ວນຮ້ອຍ)
- ບ້ານໄດ້ຮັບໃບຢັ້ງຢືນເປັນບ້ານສໍາເລັດການສຶກສາພາກບັງຄັບ 247 ບ້ານ (99.60 ສ່ວນຮ້ອຍ)
- ບ້ານມີໂຮງໝໍຕັ້ງຢູ່ໃນບ້ານ 8 ບ້ານ ( 3.23 ສ່ວນຮ້ອຍ) ແລະ ຕັ້ງຢູ່ໃກ້ບ້ານ 51 ບ້ານ(20.56 ສ່ວນຮ້ອຍ)
- ບ້ານມີສຸກສາລາຕັ້ງຢູ່ໃນບ້ານ 39 ບ້ານ(15.73 ສ່ວນຮ້ອຍ) ແລະ ຕັ້ງຢູ່ໃກ້ບ້ານ 113 ບ້ານ (45.56 ສ່ວນຮ້ອຍ)
- ບ້ານມີແຜນຜັງ ແລະ ມີການປະຕິບັດແຜນຜັງ ຈໍານວນ 72 ບ້ານ (29.03 ສ່ວນຮ້ອຍ)
- ບ້ານທີ່ໄດ້ປະສົບໄພພິບັດທາງທໍາມະຊາດ, ໄພແລ້ງ 15 ບ້ານ (6.05 ສ່ວນຮ້ອຍ), ນໍ້າຖ້ວມ 30 ບ້ານ (12.10 ສ່ວນຮ້ອຍ), ດິນເຈື່ອນ 29 ບ້ານ ( 11.69 ສ່ວນຮ້ອຍ), ພະຍຸ 4 ບ້ານ(1.61 ສ່ວນຮ້ອຍ), ໄຟໄໝ້ 8 ບ້ານ ( 3.23 ສ່ວນຮ້ອຍ ແລະ ໄພທໍາມະຊາດອື່ນໆ 6 ບ້ານ(2.42 ສ່ວນຮ້ອຍ).

- ມີຈຳນວນໂຮງໝໍແຂວງ 1 ແຫ່ງ, ໂຮງໝໍເມືອງ 4 ແຫ່ງ, ຄິຣນິກ 14 ແຫ່ງ ແລະ ຮ້ານຂາຍຢາ 85 ແຫ່ງ ແລະ ຖົງຢາປະຈຳບ້ານ 106 ຖົງ.
- ມີໝໍຢາຕຳແຍ 107 ຄົນ ແລະ ໝໍຢາພື້ນເມືອງ 80 ຄົນ

**ຄຸນລັກສະນະຂອງອາຄານ/ຫຼັງຄາເຮືອນ**

- ໃນປີ 2018 ທົ່ວແຂວງ ບໍ່ແກ້ວ ມີອາຄານ/ຫຼັງຄາເຮືອນທັງໝົດ 34,503 ອາຄານ/ຫຼັງຄາເຮືອນ ໃນນີ້ ຈຳນວນ ອາຄານ/ຫຼັງຄາເຮືອນທີ່ຢູ່ໃນເຂດບ້ານຊົນນະບົດທີ່ມີເສັ້ນທາງເຂົ້າເຖິງກວມເອົາຈຳນວນຫຼາຍກວ່າໝູ່ມີເຖິງ 23,732 ອາຄານ/ຫຼັງຄາເຮືອນ ກວມເອົາ 69 ສ່ວນຮ້ອຍ, ສ່ວນຈານວນອາຄານຢູ່ເຂດຕົວເມືອງ ມີ 9.566 ອາຄານ/ຫຼັງຄາເຮືອນ ກວມເອົາພຽງແຕ່ 28 ສ່ວນຮ້ອຍ. ສຳລັບບ້ານ ຊົນນະບົດບໍ່ມີເສັ້ນທາງ ມີພຽງແຕ່ 1,205 ອາຄານ/ຫຼັງຄາເຮືອນ ກວມເອົາ 3 ສ່ວນຮ້ອຍ.

**ຄຸນລັກສະນະຂອງຄົວເຮືອນ**

- ຈາກການເກັບກຳຂໍ້ມູນສະຖິຕິຂັ້ນທ້ອງຖິ່ນ ໃນ ປີ 2018 ແຂວງ ບໍ່ແກ້ວ ມີຈຳນວນຄົວເຮືອນທັງໝົດ 34,503 ຄົວເຮືອນ. ເຫັນວ່າເພີ່ມຂຶ້ນ 511 ຄົວເຮືອນ ເມື່ອທຽບໃສ່ກັບຄົວເຮືອນໃນປີ 2015 (33,992 ຄົວເຮືອນ).
- ຄົວເຮືອນສ່ວນຫຼາຍແມ່ນອາໃສຢູ່ໃນເຂດຊົນນະບົດມີເສັ້ນທາງເຂົ້າເຖິງ ຈຳນວນ 23.567 ຄົວເຮືອນ ກວມເອົາ 69.25 ສ່ວນຮ້ອຍ, ສຳລັບເຂດຕົວເມືອງ ມີຈຳນວນ 9.263 ຄົວເຮືອນ ກວມເອົາ 27.22 ສ່ວນຮ້ອຍ ແລະ ເຂດຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ ຈຳນວນ 1.204 ຄົວເຮືອນ ກວມເອົາ 3,54 ສ່ວນຮ້ອຍເທົ່ານັ້ນ.
- ຄົວເຮືອນທີ່ມີປື້ມສຳມະໂນຄົວ ມີຈຳນວນ 32,193 ຄົວເຮືອນ ແລະ ຄົວເຮືອນບໍ່ມີປື້ມສຳມະໂນຄົວ ຈຳນວນ 1,841 ຄົວເຮືອນ.
- ຈຳນວນຄົວເຮືອນທີ່ເຮັດສະເພາະທຸລະກິດ 955 ຄົວເຮືອນ, ກວມເອົາ 2.81 ສ່ວນຮ້ອຍ, ເຮັດສະເພາະກະສິກຳ 27,199 ຄົວເຮືອນ, ກວມເອົາ 79,90 ສ່ວນຮ້ອຍ, ເຮັດທັງທຸລະກິດ ແລະ ເຮັດທັງກະສິກຳ 1622 ຄົວເຮືອນ, ກວມເອົາ 4,76 ສ່ວນຮ້ອຍ ແລະ ບໍ່ໄດ້ເຮັດທຸລະກິດ ແລະ ບໍ່ໄດ້ເຮັດກະສິກຳ 4,258 ຄົວເຮືອນ, ກວມເອົາ 12.53 ສ່ວນຮ້ອຍ.

**ພົນລະເມືອງ ແລະ ຄຸນລັກສະນະພົນລະເມືອງ**

- ໃນປີ 2018, ທົ່ວແຂວງ ບໍ່ແກ້ວ ມີພົນລະເມືອງທັງໝົດປະມານ 191,525 ຄົນ ເພີ່ມຂຶ້ນ 12,343 ຄົນ ເມື່ອທຽບໃສ່ກັບພົນລະເມືອງ ປີ 2015 (179,243 ຄົນ).
- ໃນປີ 2018, ແຂວງ ບໍ່ແກ້ວ ມີພົນລະເມືອງຊາຍ ແລະ ພົນລະເມືອງຍິງ ແມ່ນເພີ່ມຂຶ້ນໃນຈຳນວນພົນລະເມືອງທັງໝົດ 12,343 ຄົນ, ໃນນີ້ພົນລະເມືອງ ຊາຍ ກວມເອົາ 50.28 ສ່ວນຮ້ອຍ (96,304ຄົນ) ແລະ ພົນລະເມືອງ ຍິງ ກວມເອົາ 49,72 ສ່ວນຮ້ອຍ (95,221 ຄົນ) ເທົ່ານັ້ນ.

# ສາລະບານ


**ຄຳນຳ**......................................................a

**ສະຫຼຸບຫຍໍ້**......................................................b

**ສາລະບານຕາຕະລາງ** ...................................................... iv

**ສາລະບານຮູບສະແດງ**...................................................... vi

**ພາກທີ I. ພາກສະເໜີ**...................................................... 1

1.1ຂອບເຂດ ແລະ ທີ່ຕັ້ງພູມສັນຖານ ...................................................... 1

1.2 ປະຫວັດ ແລະ ຄວາມເປັນມາການເກັບກຳຂໍ້ມູນສະຖິຕິຂັ້ນທ້ອງຖິ່ນ......................................................2

1.3 ຈຸດປະສົງຂອງການເກັບກຳຂໍ້ມູນສະຖິຕິຂັ້ນທ້ອງຖິ່ນ......................................................2

1.4 ໂຄງຮ່າງການຈັດຕັ້ງປະຕິບັດ ......................................................3

1.5 ຂອບເຂດການເກັບກຳຂໍ້ມູນສະຖິຕິຂັ້ນທ້ອງຖິ່ນ ......................................................4

**ພາກທີ II. ຂໍ້ມູນພື້ນຖານຂອງບ້ານ** ......................................................5

2.1 ປະເພດບ້ານ......................................................5

2.2 ການປ່ຽນແປງຈຳນວນບ້ານຂອງແຂວງບໍ່ແກ້ວແຕ່ປີ 2015 ຫາປີ 2018 ......................................................8

2.3 ຂອບເຂດທີ່ຕັ້ງແບ່ງຕາມພູມສັນຖານ......................................................9

2.4ຂໍ້ມູນພື້ນຖານໂຄງລ່າງຂອງບ້ານ ...................................................... 11

2.5ການຈັດສັນເນື້ອທີ່ດິນ......................................................13

2.6 ການບໍລິການດ້ານການຜະລິດ ແລະ ໜ່ວຍບໍລິການ ......................................................14

2.7ໂຄງການພັດທະນາ ແລະ ແຫຼ່ງທຶນຊ່ວຍເຫຼືອ ......................................................15

2.8 ປະເພດໃບຢັ້ງຢືນບ້ານທີ່ໄດ້ຮັບ ......................................................17

2.9 ສະພາບໄພພິບັດຂອງບ້ານ ......................................................18

2.10 ຂໍ້ມູນດ້ານສາທາລະນະສຸກຂອງບ້ານ ......................................................19

2.11 ສະພາບຄວາມບໍ່ສະຫງົບພາຍໃນບ້ານ ......................................................21

**ພາກທີ III. ຂໍ້ມູນອາຄານ/ຫຼັງຄາເຮືອນ** .......... 22

3.1 ອາຄານ/ຫຼັງຄາເຮືອນແບ່ງຕາມປະເພດບ້ານ .......... 22

3.2 ອາຄານ/ຫຼັງຄາເຮືອນແບ່ງຕາມ ທີ່ຕັ້ງພູມສັນຖານບ້ານ .......... 23

**ພາກທີ IV. ຂໍ້ມູນຄົວເຮືອນ** .......... 24

4.1ປະເພດຄົວເຮືອນ .......... 24

4.2 ຈຳນວນຄົວເຮືອນແບ່ງຕາມປະເພດບ້ານ .......... 27

4.3 ຈຳນວນຄົວເຮືອນແບ່ງຕາມທີ່ຕັ້ງພູມສັນຖານບ້ານ .......... 28

4.4 ການຖືປື້ມສາມະໂນຄົວຂອງຄົວເຮືອນ .......... 29

4.5 ກິດຈະການຂອງຄົວເຮືອນ .......... 29

**ພາກທີ V: ຂໍ້ມູນດ້ານພື້ນລະເມືອງ** .......... 30

5.1ການປ່ຽນແປງຂະໜາດພື້ນລະເມືອງ ປີ 2018 ທຽບໃສ່ປີ 2015 ແບ່ງຕາມ ເມືອງ .......... 30

5.2 ຈານວນພື້ນລະເມືອງສະເລ່ຍຕໍ່ບ້ານ ແບ່ງຕາມເມືອງ .......... 33

5.3 ຈານວນພື້ນລະເມືອງແບ່ງຕາມປະເພດບ້ານ ແລະ ເມືອງ .......... 33

5.4 ຈານວນພື້ນລະເມືອງແບ່ງຕາມທີ່ຕັ້ງພູມສັນຖານ ແລະ ເມືອງ .......... 34

5.5ຂະໜາດຂອງພື້ນລະເມືອງ ຕໍ່ຄົວເຮືອນ ແບ່ງຕາມເມືອງ .......... 35

**ພາກທີ VI. ຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ** .......... 36

6.1 ຈານວນຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານແບ່ງຕາມເມືອງ .......... 36

6.2 ຈານວນຫົວໜ່ວຍວິສາຫະກິດແບ່ງຕາມປະເພດບ້ານ ແລະ ເມືອງ .......... 37

6.3 ຈານວນຫົວໜ່ວຍວິສາຫະກິດແບ່ງຕາມທີ່ຕັ້ງພູມສັນຖານ ແລະ ເມືອງ .......... 38

6.4 ເພດເຈົ້າຂອງຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ .......... 39

6.5 ທະບຽນ ແລະ ອາກອນຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ .......... 39

6.6 ຮູບແບບການດາເນີນທຸລະກິດ .......... 41

6.7 ແຮງງານຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ .......... 41

**ພາກທີ VII. ຂໍ້ມູນຈາກບັນດາຂະແໜງການຂັ້ນເມືອງ ແລະ ຂັ້ນແຂວງ** .......... 42

7.1 ການຂຶ້ນທະບຽນພົນລະເມືອງ......42
7.2 ຂະແໜງດ້ານສາທາລະນະສຸກ......44
7.3 ຂະແໜງດ້ານການສຶກສາ ແລະ ກິລາ......46
7.4 ຂະແໜງດ້ານແຮງງານ ແລະ ສະຫວັດດີການສັງຄົມ......48
7.5 ຂະແໜງດ້ານວັດທະນະທຳ ແລະ ທ່ອງທ່ຽວ......48
7.6 ຂະແໜງອຸດສາຫະກຳ ແລະ ຫັດຖະກຳ......49
7.7 ຂະແໜງພະລັງງານ ແລະ ບໍ່ແຮ່......52
7.8 ຂະແໜງໂຍທາທິການ ແລະ ຂົນສົ່ງ......53
7.9 ຂະແໜງແຜນການ ແລະ ການລົງທຶນ......54
7.10 ຂະແໜງການເງິນ......55
7.11 ຂະແໜງປ້ອງກັນຄວາມສະຫງົບ......56
7.12 ຂະແໜງຍຸດຕິທຳ......56
7.13 ຂະແໜງສະຖິຕິຂັ້ນແຂວງ......57
7.14 ຂະແໜງໄປສະນີ ໂທລະຄົມມະນາຄົມ ແລະ ໄປສະນີຂັ້ນແຂວງ......58
7.15 ຂະແໜງການຕ່າງປະເທດຂັ້ນແຂວງ......59

# ສາລະບານຕາຕະລາງ

ຕາຕະລາງທີ 1: ຈຳນວນບ້ານແບ່ງຕາມປະເພດບ້ານ ແລະ ເມືອງ ປີ 2018 ........ 6
ຕາຕະລາງທີ 2: ຈຳນວນບ້ານປີ 2018 ທຽບໃສ່ ປີ 2015 ແບ່ງຕາມປະເພດບ້ານ ແລະ ເມືອງ ........ 8
ຕາຕະລາງທີ 3: ຈຳນວນບ້ານ ແບ່ງຕາມ ທີ່ຕັ້ງພູມສັນຖານ ປີ 2018 ........ 10
ຕາຕະລາງທີ 4: ຈຳນວນ ແລະ ສ່ວນຮ້ອຍຂໍ້ມູນພື້ນຖານບ້ານ ແບ່ງຕາມເມືອງ ........ 11
ຕາຕະລາງທີ 5: ຈຳນວນ ແລະ ສ່ວນຮ້ອຍ ເນື້ອທີ່ດິນ ແບ່ງຕາມປະເພດດິນ ແລະ ແບ່ງຕາມເມືອງ ........ 13
ຕາຕະລາງທີ 6: ການບໍລິການດ້ານການຜະລິດ ແລະ ໜ່ວຍບໍລິການຂອງ ບ້ານ ແບ່ງຕາມເມືອງ ປີ 2018........ 14
ຕາຕະລາງທີ 7: ໂຄງການພັດທະນາຢູ່ບ້ານ ແລະ ແຫຼ່ງການຊ່ວຍເຫລືອ ແບ່ງຕາມເມືອງ ........ 15
ຕາຕະລາງທີ 8: ຈຳນວນ ແລະ ອັດຕາສ່ວນຮ້ອຍ ປະເພດໃບຢັ້ງຢືນທີ່ບ້ານໄດ້ຮັບ ແບ່ງຕາມເມືອງ........ 17
ຕາຕະລາງທີ 9: ຈຳນວນ ແລະ ອັດຕາສ່ວນຮ້ອຍ ສະພາບໄພພິບັດທີ່ບ້ານປະສົບ ແບ່ງຕາມເມືອງ........ 18
ຕາຕະລາງທີ 10: ບ້ານທີ່ມີໂຮງໝໍ ແລະ ສຸກສາລາ ຕັ້ງຢູ່ບ້ານ ແລະ ຢູ່ໃກ້ບ້ານ ແບ່ງຕາມເມືອງ ........ 19
ຕາຕະລາງທີ 11: ຈຳນວນ ຄຣີນິກ, ຮ້ານຂາຍຢາ ແລະ ຖົງຢາປະຈຳບ້ານ ແບ່ງຕາມເມືອງ........ 20
ຕາຕະລາງທີ 12: ຈຳນວນໝໍຢາຕຳແຍ ແລະ ໝໍຢາພື້ນເມືອງ ແບ່ງຕາມເມືອງ ........ 20
ຕາຕະລາງທີ 13: ສະພາບຄວາມບໍ່ສະຫງົບພາຍໃນບ້ານ ແບ່ງຕາມເມືອງ ........ 21
ຕາຕະລາງທີ 14: ຈຳນວນອາຄານ/ຫຼັງຄາເຮືອນ ແບ່ງຕາມປະເພດບ້ານ ແລະ ເມືອງ ປີ 2018 ........ 22
ຕາຕະລາງທີ 15: ຈຳນວນອາຄານ/ຫຼັງຄາເຮືອນ ແບ່ງຕາມທີ່ຕັ້ງພູມສັນຖານ ແລະ ເມືອງ ປີ 2018 ........ 23
ຕາຕະລາງທີ 16:ຈຳນວນຄົວເຮືອນ ແລະ ອັດຕາສ່ວນຄົວເຮືອນແບ່ງຕາມປະເພດຄົວເຮືອນ ແລະ ເມືອງ ປີ 2018... 26
ຕາຕະລາງທີ 17: ຈຳນວນຄົວເຮືອນແບ່ງຕາມປະເພດບ້ານ ແລະ ເມືອງ ປີ 2018 ........ 27
ຕາຕະລາງທີ 18:ຈຳນວນຄົວເຮືອນ ແບ່ງຕາມທີ່ຕັ້ງພູມສັນຖານບ້ານ ແລະ ແບ່ງຕາມເມືອງ ປີ 2018 ........ 28
ຕາຕະລາງທີ 19: ຈຳນວນ ຄົວເຮືອນ ມີ ແລະ ບໍ່ມີ ປື້ມສຳມະໂນຄົວແບ່ງຕາມ ເມືອງ........ 29
ຕາຕະລາງທີ 20: ຈຳນວນຄົວເຮືອນ ແບ່ງຕາມກິດຈະກຳຂອງຄົວເຮືອນ ແລະ ແບ່ງຕາມເມືອງ ........ 29
ຕາຕະລາງທີ 21: ຈຳນວນພົນລະເມືອງ ແລະ ການປ່ຽນແປງຂອງພົນລະເມືອງໃນປີ 2018 ທຽບໃສ່ ປີ 2015 ........ 31
ຕາຕະລາງທີ 22: ການປ່ຽນແປງຈຳນວນພົນລະເມືອງສະເລ່ຍຕໍ່ບ້ານ ແບ່ງຕາມເມືອງ........ 33
ຕາຕະລາງທີ 23: ຈຳນວນພົນລະເມືອງແບ່ງຕາມປະເພດບ້ານ ແລະແບ່ງຕາມເມືອງ........ 33
ຕາຕະລາງທີ 24: ຈຳນວນພົນລະເມືອງ ແບ່ງຕາມທີ່ຕັ້ງພູມສັນຖານ ແລະ ແບ່ງຕາມເມືອງ........ 34
ຕາຕະລາງທີ 25: ຂະໜາດຂອງພົນລະເມືອງຕໍ່ຄົວເຮືອນ ແບ່ງຕາມເມືອງ ປີ 2018........ 35
ຕາຕະລາງທີ 26ຈຳນວນຫົວໜ່ວຍວິສາຫະກິດແບ່ງຕາມ ເມືອງ ........ 36
ຕາຕະລາງທີ 27: ຈຳນວນຫົວໜ່ວຍວິສາຫະກິດແບ່ງຕາມປະເພດບ້ານ ແລະ ແບ່ງຕາມເມືອງ ........ 37
ຕາຕະລາງທີ 28ຈຳນວນຫົວໜ່ວຍວິສາຫະກິດແບ່ງຕາມທີ່ຕັ້ງພູມສັນຖານ ແລະ ເມືອງ ປີ 2018........ 38

ຕາຕະລາງທີ 29: ເຈົ້າຂອງຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານແບ່ງຕາມເພດ ແລະເມືອງ ................................ 39
ຕາຕະລາງທີ 30: ໃບທະບຽນ ແລະ ອາກອນ ຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ ແບ່ງຕາມເມືອງ .................. 39
ຕາຕະລາງທີ 31ຂັ້ນອະນຸມັດຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ ແບ່ງຕາມເມືອງ.......................................... 40
ຕາຕະລາງທີ 32: ຂັ້ນຄຸ້ມຄອງອາກອນຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານທີ່ ແບ່ງຕາມເມືອງ...................... 40
ຕາຕະລາງທີ 33: ຮູບແບບການຈັດຕັ້ງຫົວໜ່ວຍວິສາຫະກິດ ແບ່ງຕາມເມືອງ ................................................ 41
ຕາຕະລາງທີ 34: ຈຳນວນ ແລະ ແຮງງານຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ ແບ່ງຕາມເມືອງ ......................... 41
ຕາຕະລາງທີ 35: ແຮງງານຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ ແບ່ງຕາມຂະໜາດ ແຮງງານ ............................ 41
ຕາຕະລາງທີ 36: ຈຳນວນຂໍ້ມູນການຂຶ້ນທະບຽນພົນລະເມືອງ ແບ່ງຕາມເມືອງ ............................................... 42
ຕາຕະລາງທີ 37: ຈຳານວນໂຮງໝໍ, ສຸກສາລາ, ຫ້ອງກວດພະຍາດ ແບ່ງຕາມເມືອງ .......................................... 44
ຕາຕະລາງທີ 38: ຈຳນວນໝໍຢາຕຳແຍ ແລະ ໝໍຢາພື້ນເມືອງ ແບ່ງຕາມເມືອງ.................................................. 44
ຕາຕະລາງທີ 39: ຈຳນວນພະນັກງານແພດໝໍ ແບ່ງຕາມເພດ ແບ່ງຕາມເມືອງ ................................................. 45
ຕາຕະລາງທີ 40: ຈຳນວນນັກຮຽນ, ຄູ ແລະ ຫ້ອງຮຽນ ແບ່ງຕາມຊັ້ນຮຽນ ..................................................... 46
ຕາຕະລາງທີ 41: ອັດຕາສ່ວນຮ້ອຍຂອງການສຶກສາ ແບ່ງຕາມຊັ້ນຮຽນ ........................................................... 47
ຕາຕະລາງທີ 42:ຂໍ້ມູນດ້ານກິລາພາຍໃນແຂວງ........................................................................................... 47
ຕາຕະລາງທີ 43: ຈຳນວນແຮງງານພາຍໃນ ແບ່ງຕາມຂະແໜງເສດຖະກິດ...................................................... 48
ຕາຕະລາງທີ 44: ຂໍ້ມູນທາງດ້ານວັດທະນະທຳ ແລະ ທ່ອງທ່ຽວ.................................................................. 48
ຕາຕະລາງທີ 45: ຂໍ້ມູນ ອຸດສາຫະກຳ ແລະ ການຜະລິດອຸດສາຫະກຳ ແລະ ຫັດຖະກຳ .................................... 49
ຕາຕະລາງທີ 46: ຂໍ້ມູນຜະລິດຕະພັນແຮ່ທາດ ແລະ ພະລັງງານໄຟຟ້າ.......................................................... 52
ຕາຕະລາງທີ 47: ຂໍ້ມູນດ້ານໂຍທາທິການ ແລະ ຂົນສົ່ງ ພາຍໃນແຂວງ.......................................................... 53
ຕາຕະລາງທີ 48: ຂໍ້ມູນສະຖິຕິການລົງທຶນ ຂັ້ນແຂວງ.................................................................................. 54
ຕາຕະລາງທີ 49: ຂໍ້ມູນສະຖິຕິງົບປະມານແຫ່ງລັດ ຂັ້ນແຂວງ ...................................................................... 55
ຕາຕະລາງທີ 50: ມູນດ້ານອຸບັດຕິເຫດ ........................................................................................................ 56
ຕາຕະລາງທີ 51: ຂໍ້ມູນຄະດີ...................................................................................................................... 56
ຕາຕະລາງທີ 52: ລາຄາສະເລ່ຍຂອງສິນຄ້າປະເພດສະບຽງອາຫານ ແບ່ງຕາມເດືອນ ແລະ ປີ .............................. 57
ຕາຕະລາງທີ 53: ຂໍ້ມູນການບັນຊີແຫ່ງຊາດ ຂັ້ນແຂວງ.................................................................................. 58
ຕາຕະລາງທີ 54: ຂໍ້ມູນໄປສະນີ ຂັ້ນແຂວງ.................................................................................................. 58
ຕາຕະລາງທີ 55: ຂໍ້ມູນສະຖິຕິດ້ານໂທລະຄົມມະນາຄົມ................................................................................ 58
ຕາຕະລາງທີ 56: ຈຳນວນຊຸ່ງວຊານ ແລະ ອົງການຈັດຕັ້ງສາກົນ ................................................................. 59

## ສາລະບານຮູບສະແດງ


ຮູບສະແດງທີ 1: ແຜນທີ ແລະ ຈຸດທີ່ຕັ້ງ ແຂວງ ບໍ່ແກ້ວ ........ 1

ຮູບສະແດງທີ 2: ອັດຕາສ່ວນຮ້ອຍ ປະເພດບ້ານປີ 2018 ........ 7

ຮູບສະແດງທີ 3: ການປ່ຽນແປງຈຳນວນບ້ານປີ  2018 ທຽບໃສ່ປີ 2015 ແບ່ງຕາມປະເພດບ້ານ ແລະ ເມືອງ ........ 9

ຮູບສະແດງທີ 4: ອັດຕາສ່ວນຂອງບ້ານ ແບ່ງຕາມທີ່ຕັ້ງພູມສັນຖານ ປີ 2018 ........ 10

ຮູບສະແດງທີ 5: ອັດຕາສ່ວນຮ້ອຍ ເນື້ອທີ່ດິນ ແບ່ງ ຕາມປະເພດດິນ ........ 14

ຮູບສະແດງທີ 6: ຈຳນວນສ່ວນຮ້ອຍ ຂອງອາຄານ/ຫຼັງຄາເຮືອນ ແບ່ງຕາມປະເພດບ້ານ ປີ 2018 ........ 23

ຮູບສະແດງທີ 7: ຈຳນວນສ່ວນຮ້ອຍຂອງອາຄານ/ຫຼັງຄາເຮືອນ ແບ່ງຕາມທີ່ຕັ້ງພູມສັນຖານ ປີ 2018 ........ 24

ຮູບສະແດງທີ 8: ອັດຕາສ່ວນຄົວເຮືອນທັງໝົດ ແບ່ງຕາມປະເພດບ້ານ ປີ 2018 ........ 27

ຮູບສະແດງທີ 9: ອັດຕາສ່ວນຄົວເຮືອນທັງໝົດ ແບ່ງຕາມພູມສັນຖານ ປີ 2018 ........ 28

ຮູບສະແດງທີ 10: ອັດຕາສ່ວນຄົວເຮືອນ ແບ່ງຕາມກິດຈະກຳຂອງຄົວເຮືອນ ປີ 2018 ........ 30

ຮູບສະແດງທີ 11: ອັດຕາສ່ວນຮ້ອຍ ຂອງພົນລະເມືອງແບ່ງຕາມເພດ ........ 32

ຮູບສະແດງທີ 12: ການປ່ຽນແປງອັດຕາສ່ວນຂອງເພດຊາຍທຽບໃສ່ເພດຍິງ ໃນປີ 2018 ........ 32

ຮູບສະແດງທີ 13: ອັດຕາສ່ວນຮ້ອຍ ຈຳນວນພົນລະເມືອງ ແບ່ງຕາມປະເພດບ້ານ ແລະ ເມືອງ ໃນປີ 2018 ........ 34

ຮູບສະແດງທີ 14: ອັດຕາສ່ວນຮ້ອຍ ຈຳນວນພົນລະເມືອງ ແບ່ງຕາມທີ່ຕັ້ງພູສັນຖານບ້ານ  ໃນປີ 2018 ........ 35

ຮູບສະແດງທີ 15: ອັດຕາສ່ວນຮ້ອຍຂອງຫົວໜ່ວຍວິສາຫະກິດແບ່ງຕາມປະເພດບ້ານ ........ 37

ຮູບສະແດງທີ 16: ອັດຕາສ່ວນຂອງຫົວໜ່ວຍວິສາຫະກິດແບ່ງຕາມທີ່ຕັ້ງພູມສັນຖານ ປີ 2018 ........ 38

ເອກະສານຊ້ອນທ້າຍ 1: ຄະນະຮັບຜິດຊອບຂຽນປື້ມບົດລາຍງານສະຖິຕິຂັ້ນທ້ອງຖິ່ນຂັ້ນແຂວງ ປີ 2018 ........ 60

ເອກະສານຊ້ອນທ້າຍ 2: ແບບສອບຖາມເກັບກຳຂໍ້ມູນສະຖິຕິຂັ້ນທ້ອງຖິ່ນ ປີ 2018 ........ 61

## ພາກທີ I. ພາກສະເໜີ

ການເກັບກຳ ແລະ ລາຍງານຂໍ້ມູນສະຖິຕິຂັ້ນທ້ອງຖິ່ນ ຕາມທິດທາງສາມສ້າງ ແມ່ນໂຄງການໜຶ່ງຂອງລັດຖະບານ ເຊິ່ງຈັດຕັ້ງປະຕິບັດ ໂດຍກົມສະຖິຕິສັງຄົມສູນສະຖິຕິແຫ່ງຊາດ ,, ກະຊວງແຜນການ ແລະ ການລົງທຶນພາຍໃຕ້ການຮ່ວມມືກັບບັນດາສູນສະຖິຕິປະຈຳແຂວງ, ເມືອງ, ບ້ານ ແລະ ບັນດາຂະແໜງການໃນຂັ້ນທ້ອງຖິ່ນ ໂດຍມີຈຸດປະສົງເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ອຳນາດການປົກທ້ອງຖິ່ນ ໃນການເກັບກຳ ການສ້າງຖານຂໍ້ມູນ ,ແລະ ການລາຍງານຂໍ້ມູນສະຖິຕິທາງການຈາກບັນດາຂະແໜງການຂັ້ນທ້ອງຖິ່ນ ແລະ ຂັ້ນບ້ານ ໃຫ້ເປັນລະບົບຕໍ່ເນື່ອງ, ເຮັດໃຫ້ບ້ານມີປື້ມສະຖິຕິປະຈຳບ້ານທີ່ເປັນເອກກະພາບ, ເມືອງມີລະບົບຖານຂໍ້ມູນທີ່ລວມສູນ ແລະ ສາມາດເຊື່ອມໂຍງກັບຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນສູນກາງ, ເພື່ອແນໃສ່ຕອບສະໜອງຄວາມຕ້ອງການຂໍ້ມູນພື້ນຖານທີ່ຈຳເປັນ ສຳລັບຂະບວນການສ້າງແຜນການ, ການຕິດຕາມ ແລະ ການປະເມີນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນຂັ້ນທ້ອງຖິ່ນ ກໍ່ຄືການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ) SDGs).

### 1.1ຂອບເຂດ ແລະ ທີ່ຕັ້ງພູມສັນຖານ

ແຂວງ ບໍ່ແກ້ວ ເປັນແຂວງໜຶ່ງ ທີ່ຕັ້ງຢູ່ທາງພາກເໜືອຂອງ ສປປ ລາວ ປະກອບມີ 5 ເມືອງ, ຂອບເຂດຊາຍແດນທີ່ຕິດກັບບັນດາແຂວງອ້ອມຂ້າງ ແລະ ປະເທດໃກ້ຄຽງປະກອບມີ: ທິດເໜືອຕິດກັບແຂວງຫຼວງນໍ້າທາ, ທິດໃຕ້ຕິດກັບຈັງວັດຊຽງຣາຍ ປະເທດໄທ, ທິດຕາເວັນອອກຕິດກັບ ແຂວງ ໄຊຍະບູລີ ແລະ ອຸດົມໄຊ, ທິດຕາເວັນຕົກຕິດກັບແຂວງລັດຊານປະເທດມຽນມາ.

ຮູບສະແດງທີ 1: ແຜນທີ ແລະ ຈຸດທີ່ຕັ້ງ ແຂວງ ບໍ່ແກ້ວ




*ແຫຼ່ງຂໍ້ມູນ: WWW.Lao DECIDE info (ແຜນທີ່ລະດັບເມືອງແລະ ຈຸດທີ່ຕັ້ງຂອງ ແຂວງ ຜົ້ງສາລີ )*

1.2 ປະຫວັດ ແລະ ຄວາມເປັນມາການເກັບກຳຂໍ້ມູນສະຖິຕິຂັ້ນທ້ອງຖິ່ນ

ສູນສະຖິຕິແຫ່ງຊາດ, ກະຊວງ ຜທ ໄດ້ເລີ່ມຈັດຕັ້ງປະຕິບັດວຽກງານສະຖິຕິຂັ້ນທ້ອງຖິ່ນມາແຕ່ປີ 1996 ເປັນຕົ້ນມາ ໂດຍກຳນົດເອົາ 10% ຂອງຈຳນວນບ້ານທັງໝົດໃນຂອບເຂດທົ່ວປະເທດ ແລະ ໄດ້ມອບໃຫ້ອຳນາດການປົກຄອງທ້ອງຖິ່ນເປັນຜູ້ຈັດຕັ້ງປະຕິບັດ.

ໃນປີ 2012 ໄດ້ມີການປັບປຸງ ແລະ ນຳໃຊ້ເຄື່ອງມືດັ່ງກ່າວ ເຂົ້າໃນຂະບວນການສາມສ້າງຢູ່ 109 ບ້ານ ແລະ ໄດ້ສ້າງປື້ມສະຖິຕິຂັ້ນບ້ານ ແລະ ແບບຟອມເກັບກຳຂໍ້ມູນຄົວເຮືອນ ສຳລັບປີ 2012-2015 ມອບໃຫ້ພະແນກແຜນການ ແລະ ການລົງທຶນຂັ້ນແຂວງ ສົມທົບກັບອຳນາດການປົກຄອງທ້ອງຖິ່ນເປັນຜູ້ປະຕິບັດໃນຂອບເຂດທົ່ວປະເທດ. ໂດຍມີຈຸດປະສົງ ປັບປຸງລະບົບການເກັບກຳຂໍ້ມູນສະຖິຕິຂັ້ນທ້ອງຖິ່ນ ໂດຍສະເພາະແມ່ນສະຖິຕິຂັ້ນບ້ານ, ເພື່ອໃຫ້ບ້ານມີຂໍ້ມູນປະຈຳບ້ານ ສາມາດຕອບສະໜອງຄວາມຕ້ອງການທີ່ຈຳເປັນສຳລັບການສ້າງແຜນພັດທະນາເສດຖະກິດ-ສັງຄົມ ໃນຂັ້ນທ້ອງຖິ່ນ.

ໂດຍປະຕິບັດຕາມກົດໝາຍ ແລະ ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016-2025 ແລະ ວິໄສທັດຮອດ 2030, ໃນໄລຍະຜ່ານມາ ກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ ສົມທົບກັບບັນດາຂະແໜງການໃນຂັ້ນສູນກາງ ແລະ ທ້ອງຖິ່ນ ໄດ້ສຸມໃສ່ກຳນົດກອບຄວາມຕ້ອງການຂໍ້ມູນ ຈາກລະບົບການລາຍງານບໍລິຫານຂອງບັນດາຂະແໜງການທ້ອງຖິ່ນ ແລະ ຂັ້ນບ້ານ ແລະ ໄດ້ປັບປຸງເຄື່ອງມືໃນການເກັບກຳ ແລະ ລາຍງານຂໍ້ມູນ, ສ້າງລະບົບຖານຂໍ້ມູນ ແລະ ຝຶກອົບຮົມວິທີການເກັບກຳຂໍ້ມູນ ໃຫ້ແກ່ພະນັກງານຂັ້ນທ້ອງຖິ່ນ ແລະຂັ້ນບ້ານໃນຂອບເຂດທົ່ວປະເທດ. ໃນປີ 2016-2017 ໄດ້ດຳເນີນການເກັບກຳຂໍ້ມູນ ເພື່ອສ້າງ ຕົວແບບຢູ່ນະຄອນຫຼວງວຽງຈັນ ແລະ ທົດລອງເກັບກຳຂໍ້ມູນໃນຂອບເຂດທົ່ວປະເທດ ໃນ ປີ 2017-2018. ເພື່ອປະຕິບັດຕາມແຜນຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດ ສູນສະຖິຕິແຂວງ ບໍ່ແກ້ວໄດ້ຈັດຕັ້ງປະຕິບັດຂະບວນການເກັບກຳຂໍ້ມູນຂັ້ນບ້ານໃນຂອບເຂດທົ່ວແຂວງ ແລະ ໄດ້ມີການປ້ອນຂໍ້ມູນ, ການປຸງແຕ່ງ, ການຂຽນບົດລາຍງານສະຖິຕິຂັ້ນແຂວງ ເພື່ອຕອບສະໜອງຂໍ້ມູນທີ່ຈຳເປັນພື້ນຖານໃຫ້ການວາງແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ບໍ່ແກ້ວ.

1.3 ຈຸດປະສົງຂອງການເກັບກຳຂໍ້ມູນສະຖິຕິຂັ້ນທ້ອງຖິ່ນ

ສ້າງລະບົບຖານຂໍ້ມູນພົນລະເມືອງ, ບັນຊີຄົວເຮືອນ, ບັນຊີບ້ານ ແລະ ບັນຊີຫົວໜ່ວຍວິສະຫະກິດ ແລະ ຫ້າງຮ້ານ ໃນຂອບເຂດທົ່ວປະເທດ ໃຫ້ເປັນຖານຂໍ້ມູນທີ່ມີຄວາມເປັນເອກກະພາບ, ລວມສູນ ທີ່ສາມາດເຂົ້າເຖິງໄດ້ສະດວກ ແລະ ສາມາດຕອບສະໜອງຂໍ້ມູນ ສຳລັບການຄຸ້ມຄອງພົນລະເມືອງ, ການຂຶ້ນທະບຽນພົນລະເມືອງ (Population database) ແລະ ການຄຸ້ມຄອງເສດຖະກິດ ເພື່ອຮັບໃຊ້ໃຫ້ແກ່ການວາງແຜນພັດທະນາເສດຖະກິດ-ສັງຄົມຂັ້ນທ້ອງຖິ່ນໃນຂອບເຂດທົ່ວປະເທດ;

ສ້າງຄວາມເຂັ້ມແຂງທາງດ້ານສະຖິຕິ ໃຫ້ແກ່ພະນັກງານຂັ້ນທ້ອງຖິ່ນ, ໂດຍສະເພາະ ແມ່ນຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານໃນການການເກັບກໍາ ແລະ ລາຍງານຂໍ້ມູນສະຖິຕິທີ່ຈໍາເປັນພື້ນຖານໃຫ້ແກ່ການຕິດຕາມ ແລະ ການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນແຕ່ລະໄລຍະ ຕາມທິດຊີ້ນໍາສາມສ້າງ.

ສ້າງໃຫ້ບ້ານມີປຶ້ມສະຖິຕິປະຈໍາບ້ານທີ່ເປັນເອກກະພາບ, ເມືອງມີວາລະສານສະຖິຕິປະຈໍາເມືອງ, ມີລະບົບຖານຂໍ້ມູນສະຖິຕິລວມສູນໃນຂັ້ນເມືອງ ທີ່ສາມາດປ້ອນຂໍ້ມູນ ແລະ ສາມາດເຊື່ອມໂຍງກັບແຂວງ ແລະ ສູນກາງໄດ້, ແຂວງ ມີຄວາມສາມາດໃນການວິໄຈຂໍ້ມູນ, ມີວາລະສານສະຖິຕິປະຈໍາແຂວງ, ມີລະບົບຖານຂໍ້ມູນສະຖິຕິລວມສູນ ໃນຂັ້ນແຂວງ ແລະ ສາມາດເຊື່ອມໂຍງກັບເມືອງ ແລະ ສູນກາງໄດ້.

## 1.4 ໂຄງຮ່າງການຈັດຕັ້ງປະຕິບັດ

- ໂຄງຮ່າງຈັດຕັ້ງຄະນະຮັບຜິດຊອບການຈັດຕັ້ງປະຕິບັດວຽກງານສະຖິຕິຂັ້ນທ້ອງຖິ່ນ ປີ 2018



➢ ໂຄງຮ່າງຈັດຕັ້ງການແບ່ງຄວາມຮັບຜິດຊອບໃນແຕ່ລະຂັ້ນ




1.5 ຂອບເຂດການເກັບກຳຂໍ້ມູນສະຖິຕິຂັ້ນທ້ອງຖິ່ນ

ການຈັດຕັ້ງປະຕິບັດຢູ່ທີ່ວແຂວງ ບໍ່ແກ້ວ ທັງໝົດ 5 ເມືອງ, ໂດຍນາໃຊ້ແບບຟອມໃນການເກັບກາຂໍ້ມູນປະກອບມີ 3 ລະດັບຄື: ລະດັບບ້ານ, ເມືອງ ແລະ ແຂວງ.

ເກັບກໍາຂໍ້ມູນລະດັບບ້ານປະກອບມີ: ຂໍ້ມູນພື້ນຖານຂອງບ້ານ (ແບບຟອມ F1), ການຂຶ້ນບັນຊີຄົວເຮືອນ (ແບບຟອມ F2), ບັນຊີຫົວໜ່ວຍວິສະຫະກິດ ແລະ ຫ້າງຮ້ານ (ແບບຟອມ F3), ໂດຍແມ່ນພະນັກງງານຂັ້ນບ້ານ (ຈຸງານສະຖິຕິປະຈໍາບ້ານ) ເປັນຜູ້ຮັບຜິດຊອບ;

ເກັບຈາກຂະແໜງການຂັ້ນເມືອງ ແລະ ຂັ້ນແຂວງ (ແບບຟອມ D ແລະ ແບບຟອມ P) ຂໍ້ມູນຕົ້ນຕໍປະກອບມີ: ຂໍ້ມູນສາທາລະນະສຸກ, ສຶກສາທິການ ແລະ ກິລາ, ແຮງງານ ແລະ ສະຫວັດດີການສັງຄົມ, ສະຖິຕິພົນລະເມືອງ, ວັດທະນະທຳ-ທ່ອງທ່ຽວ, ອົງການຈັດຕັ້ງສາກົນ, ປກສ, ສະຖິຕິລາຄາ ແລະ ດັດຊະນີລາຄາ, ອຸດສາຫະກໍາ ແລະ ການຄ້າ , ໂຍທາທິການ ແລະ ຂົນສົ່ງ, ກະສິກໍາ ແລະ ປ່າໄມ້, ໄປສະນີ, ໂທລະຄົມມະນາຄົມ-ການສື່ສານ ແລະ ເທັກໂນໂລຊີ, ສະຖິຕິການລົງທຶນ, ການຄ້າພາຍໃນ ແລະ ການບໍລິການ, ພະລັງງານ ແລະ ບໍ່ແຮ່, ສະຖິຕິງົບປະມານແຫ່ງລັດ (ພະແນກການເງິນ).

➢ ການປຸງແຕ່ງ, ການວິໄຈ ຂໍ້ມູນສະຖິຕິຂັ້ນທ້ອງຖິ່ນຂອງແຂວງ ບໍ່ແກ້ວ

ການປຸງແຕ່ງຂໍ້ມູນ ແມ່ນໄດ້ຂຽນເງື່ອນໄຂ ຫຼື ຄໍາສັ່ງ ແລະ ວິທີການກວດ ຄວາມສອດຄ່ອງ ສອດຄ່ອງ ຂອງຂໍ້ມູນແຕ່ລະຄໍາຖາມ ແລະ ໄດ້ຝຶກອົບຮົມໃຫ້ສູນສະຖິຕິປະຈາແຂວງ ບໍ່ແກ້ວ. ຈາກນັ້ນສູນສະຖິຕິແຂວງແມ່ນໄດ້ຝຶກອົບຮົມໃຫ້ສູນສະຖິຕິປະຈໍາເມືອງ. ນອກນັ້ນ, ສູນສະຖິຕິແຂວງ ແລະ ເມືອງ ຍັງເປັນຜູ້ກວດແກ້ປຸງແຕ່ງຂໍ້ມູນ, ການວິໄຈຂໍ້ມູນສະຖິຕິຂັ້ນທ້ອງຖິ່ນ ປີ 2018 ໂດຍການນໍາໃຊ້ໂປແກຣມ STATA ແລະ ໂປຣແກຣມ Excel ໃນການວິເຄາະຂໍ້ມູນ.

## ພາກທີ II. ຂໍ້ມູນພື້ນຖານຂອງບ້ານ

2.1 ປະເພດບ້ານ

ບ້ານ ແມ່ນເຂດການປົກຄອງທ້ອງຖິ່ນຂັ້ນຮາກຖານທີ່ຂຶ້ນກັບເມືອງ, ເທດສະບານ, ນະຄອນ. ບ້ານໜຶ່ງປະກອບດ້ວຍຫຼາຍຄອບຄົວ ມີເຂດນໍ້າດິນແດນທີ່ລັດໄດ້ມອບສິດໃຫ້ປົກປັກຮັກສາ, ນໍາໃຊ້ ແລະ ພັດທະນາ. (ຄັດຈາກ ປຶ້ມກົດໝາຍວ່າດ້ວຍການປົກຄອງຂັ້ນທ້ອງຖິ່ນ ສະບັບປັບປຸງ , ເລກທີ68/ສພຊ ລົງວັນທີ 14 ທັນວາ 2015, ໜ້າທີ 26)

ການຈັດແບ່ງບ້ານ ໄດ້ແບ່ງອອກເປັນ ສາມປະເພດຄື: ບ້ານຕົວເມືອງ, ບ້ານຊົນນະບົດມີເສັ້ນທາງເຂົ້າເຖິງ ແລະ ບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ ໂດຍອີງໃສ່ຄຸນລັກສະນະຂອງແຕ່ລະຂົງເຂດ. ການກໍານົດມາດຖານບ້ານ ແມ່ນໄດ້ອີງໃສ່ມາດຖານທີ່ກໍານົດໄວ້ຕາມເງື່ອນໄຂລຸ່ມນີ້:

❖ ເງື່ອນໄຂມາດຖານການກໍານົດປະເພດບ້ານ:

1. ບ້ານຕັ້ງຢູ່ເທດສະບານແຂວງ/ເມືອງ;
2. ຫຼາຍກວ່າ 70% ຂອງຄົວເຮືອນໃນບ້ານໄດ້ນໍາໃຊ້ໄຟຟ້າ;
3. ຫຼາຍກວ່າ 70% ຂອງຄົວເຮືອນໃນບ້ານໄດ້ນາໃຊ້ນ້ໍາປະປາ;
4. ບ້ານທີ່ມີເສັ້ນທາງເຂົ້າເຖິງບ້ານໄດ້ທັງສອງລະດູ;
5. ບ້ານມີຕະຫຼາດຖາວອນທີ່ມີການຊື້-ຂາຍຕະຫຼອດວັນ.

- **ບ້ານຕົວເມືອງ:** ແມ່ນບ້ານທີ່ມີຄົບຢ່າງໜ້ອຍ 3 ໃນ 5 ເງື່ອນໄຂມາດຖານການການົດປະເພດບ້ານຂ້າງເທິງ;
- **ບ້ານຊົນນະບົດມີເສັ້ນທາງເຂົ້າເຖິງ:** ແມ່ນບ້ານທີ່ມີບໍ່ຮອດ 3 ເງື່ອນໄຂມາດຖານການົດປະເພດບ້ານຂ້າງເທິງ, ແຕ່ມີເສັ້ນທາງທີ່ລົດໃຫຍ່ສາມາດທຽວທາງໄດ້ຕະຫຼອດປີ (ທຽວທາງໄດ້ສອງລະດູ) ແລະ ເສັ້ນທາງດັ່ງກ່າວແມ່ນຈະຕ້ອງຢູ່ຫ່າງຈາກບ້ານບໍ່ເກີນ 100 ແມັດ;

- **ບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ:** ແມ່ນບ້ານທີ່ມີບໍ່ຮອດ 3 ເງື່ອນໄຂມາດຖານກໍານົດປະເພດບ້ານຂ້າງເທິງ ແລະ ບໍ່ມີເສັ້ນທາງທີ່ລົດໃຫຍ່ສາມາດທຽວທາງໄດ້ຕະຫຼອດປີ (ທຽວທາງໄດ້ສອງລະດູ) ຫຼື ມີເສັ້ນທາງຢູ່ຫ່າງຈາກບ້ານເກີນ 100 ແມັດຂຶ້ນໄປ.

ແຂວງ ບໍ່ແກ້ວ ມີລະຫັດແຂວງແມ່ນ “05”ແລະ ໃນປີ 2018 ໄດ້ຈັດແບ່ງເຂດການປົກຄອງ ອອກເປັນ 5 ເມືອງ ປະກອບມີ: ເມືອງ ຫ້ວຍຊາຍ ລະຫັດເມືອງແມ່ນ “0501”, ເມືອງ ຕົ້ນເຜິ້ງ ລະຫັດເມືອງແມ່ນ “0502”, ເມືອງ ເມິງ ລະຫັດເມືອງແມ່ນ “0503”, ເມືອງ ຜາອຸດົມ ລະຫັດເມືອງແມ່ນ “0504” ແລະ ເມືອງ ປາກທາ ລະຫັດເມືອງແມ່ນ “0505”. ຈາກຕາຕາລາງທີ 1 ແລະ ຮູບສະແດງທີ 2 ສະແດງໃຫ້ເຫັນວ່າ ແຂວງບໍ່ແກ້ວມີບ້ານທັງໝົດ 248 ບ້ານ, ໃນນັ້ນ ມີບ້ານຕົວເມືອງ 45 ບ້ານ ກວມເອົາ 18.15 ສ່ວນຮ້ອຍ, ບ້ານຊົນນະບົດມີເສັ້ນທາງເຂົ້າເຖິງ 190 ບ້ານ ກວມເອົາ 76.61 ສ່ວນຮ້ອຍ ແລະ ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ 13 ບ້ານ ກວມເອົາ 5.41 ສ່ວນຮ້ອຍ. ເມືອງທີ່ມີຈໍານວນບ້ານຫຼາຍກວ່າໝູ່ແມ່ນເມືອງ ຫ້ວຍຊາຍມີບ້ານທັງໝົດຈໍານວນ 82 ບ້ານ ເຊິ່ງປະກອບມີບ້ານຕົວເມືອງ ຈໍານວນ 18 ບ້ານ, ບ້ານຊົນນະບົດມີເສັ້ນທາງເຂົ້າເຖິງມີຈໍານວນ 59 ບ້ານ ແລະ ບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງມີຈໍານວນ 5 ບ້ານ; ຮອງລົງມາແມ່ນເມືອງ ຜາອຸດົມ ມີບ້ານທັງໝົດຈໍານວນ 66 ບ້ານ ເຊິ່ງປະກອບມີບ້ານຕົວເມືອງຈໍານວນ 7 ບ້ານ, ບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງມີຈໍານວນ 51 ບ້ານ, ແລະ ບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງແມ່ນມີຈໍານວນ 8 ບ້ານ; ເມືອງ ຕົ້ນເຜິ້ງ ມີບ້ານທັງໝົດຈໍານວນ 38 ບ້ານ, ປະກອບມີບ້ານຕົວເມືອງຈໍານວນ 11 ບ້ານ, ບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງມີຈໍານວນ 27 ບ້ານ, ສ່ວນບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງແມ່ນບໍ່ມີ; ເມືອງ ປາກທາມີບ້ານທັງ

ຕາຕະລາງທີ 1: ຈໍານວນບ້ານແບ່ງຕາມປະເພດບ້ານ ແລະ ເມືອງ ປີ 2018

| ລະຫັດເມືອງ | ຊື່ເມືອງ | ປະເພດບ້ານ | | | ລວມ |
|---|---|---|---|---|---|
| | | ຕົວເມືອງ | ຊົນນະບົດມີເສັ້ນທາງເຂົ້າເຖິງ | ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ | |
| 0501 | ຫ້ວຍຊາຍ | 18 | 59 | 5 | 82 |
| 0502 | ຕົ້ນເຜິ້ງ | 11 | 27 | 0 | 38 |
| 0503 | ເມິງ | 4 | 24 | 0 | 28 |
| 0504 | ຜາອຸດົມ | 7 | 51 | 8 | 66 |
| 0505 | ປາກທາ | 5 | 29 | 0 | 34 |
| **ລວມ** | | **45** | **190** | **13** | **248** |

*ແຫຼ່ງຂໍ້ມູນ: ຈາກການເກັບກໍາຂໍ້ມູນ ສະຖິຕິຂັ້ນທ້ອງຖິ່ນ ແຂວງບໍ່ແກ້ວ ປີ 2018*

ຮູບສະແດງທີ 2: ອັດຕາສ່ວນຮ້ອຍ ປະເພດບ້ານປີ 2018




ໝົດຈຳນວນ 34 ບ້ານ, ປະກອບມີບ້ານຕົວເມືອງ ຈຳນວນ 5 ບ້ານ, ບ້ານຊົນນະບົດມີເສັ້ນທາງເຂົ້າເຖິງ ຈຳນວນ 29 ບ້ານ, ບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງແມ່ນບໍ່ມີ; ແລະ ເມືອງທີ່ມີຈຳນວນບ້ານໜ້ອຍກວ່າໝູ່ແມ່ນເມືອງ ເມິງ ມີບ້ານທັງໝົດຈຳນວນ 28 ບ້ານ, ປະກອບມີບ້ານຕົວເມືອງຈຳນວນ 4 ບ້ານ, ບ້ານຊົນນະບົດມີເສັ້ນທາງເຂົ້າເຖິງມີຈຳນວນ 24 ບ້ານ ແລະ ບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງແມ່ນບໍ່ມີ.

2.2 ການປ່ຽນແປງຈຳນວນບ້ານຂອງແຂວງບໍ່ແກ້ວແຕ່ປີ 2015 ຫາປີ 2018

ຕາຕະລາງທີ 2: ຈຳນວນບ້ານປີ 2018 ທຽບໃສ່ ປີ 2015 ແບ່ງຕາມປະເພດບ້ານ ແລະ ເມືອງ

| ລະຫັດ ເມືອງ | ຊື່ເມືອງ | ປະເພດບ້ານ ປີ 2015 | | | | ປະເພດບ້ານ ປີ 2018 | | | |
|---|---|---|---|---|---|---|---|---|---|
| | | ຕົວເມືອງ | ຊົນນະບົດມີ ເສັ້ນທາງເຂົ້າເຖິງ | ຊົນນະບົດບໍ່ມີ ເສັ້ນທາງເຂົ້າເຖິງ | ຈຳນວນລວມ | ຕົວເມືອງ | ຊົນນະບົດມີ ເສັ້ນທາງເຂົ້າເຖິງ | ຊົນນະບົດບໍ່ມີ ເສັ້ນທາງເຂົ້າເຖິງ | ຈຳນວນລວມ |
| 0501 | ຫ້ວຍຊາຍ | 24 | 57 | 1 | 82 | 18 | 59 | 5 | 82 |
| 0502 | ຕົ້ນເຜິ້ງ | 10 | 29 | 0 | 39 | 11 | 27 | 0 | 38 |
| 0503 | ເມິງ | 4 | 24 | 0 | 28 | 4 | 24 | 0 | 28 |
| 0504 | ຜາອຸດົມ | 11 | 47 | 15 | 73 | 7 | 51 | 8 | 66 |
| 0505 | ປາກທາ | 5 | 18 | 11 | 34 | 5 | 29 | 0 | 34 |
| **ລວມ** | | **54** | **175** | **27** | **256** | **45** | **190** | **13** | **248** |

*ແຫຼ່ງຂໍ້ມູນ: ເກັບກຳຂໍ້ມູນສະຖິຕິຂັ້ນທ້ອງຖິ່ນ  ແຂວງ ບໍ່ແກ້ວ ປີ 2018 ແລະ ສຳຫຼວດພົນລະເມືອງ ລາວ ປີ 2015*

ຮູບສະແດງທີ 3: ການປ່ຽນແປງຈຳນວນບ້ານປີ  2018 ທຽບໃສ່ປີ 2015 ແບ່ງຕາມປະເພດບ້ານ ແລະ ເມືອງ




ຈາກຕາຕາລາງທີ 2 ສະແດງໃຫ້ເຫັນວ່າ ໃນປີ 2015 ແຂວງບໍ່ແກ້ວມີບ້ານທັງໝົດ 256 ບ້ານ, ໃນນັ້ນ ບ້ານຕົວເມືອງ ມີ 54 ບ້ານ, ບ້ານຊົນນະບົດມີເສັ້ນທາງເຂົ້າເຖິງ 175 ບ້ານ ແລະ ບ້ານ ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງແມ່ນມີ 27 ບ້ານ. ສ່ວນໃນປີ 2018 ຈຳນວນບ້ານທັງໝົດແຂວງບໍ່ແກ້ວແມ່ນ 248 ບ້ານ, ໃນນັ້ນ ບ້ານຕົວເມືອງມີ 45 ບ້ານ, ບ້ານຊົນນະບົດມີເສັ້ນທາງເຂົ້າເຖິງ 190 ບ້ານ ແລະ ບ້ານ ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ 13 ບ້ານ ແລະ ຈາກຮູບສະແດງທີ 3 ແລະ 4 ສະແດງໃຫ້ເຫັນການປ່ຽນແປງຈານວນບ້ານ ແລະ ສ່ວນຮ້ອຍໃນປີ 2018 ທຽບໃສ່ປີ 2015 ເຫັນໄດ້ວ່າ ການປ່ຽນແປງຈຳນວນບ້ານທັງໝົດຂອງແຂວງ ບໍ່ແກ້ວ ໄດ້ຫຼຸດລົງ 8 ບ້ານ, ໃນນັ້ນ ບ້ານຕົວເມືອງ ມີຈຳນວນຫຼຸດລົງ 9 ບ້ານ ຄິດເປັນສ່ວນຮ້ອຍແມ່ນມີການປ່ຽນແປງແມ່ນຫຼຸດລົງ 2.95 ສ່ວນຮ້ອຍ, ບ້ານຊົນນະບົດມີເສັ້ນທາງເຂົ້າເຖິງ ມີຈຳນວນເພີ່ມຂຶ້ນ 15 ບ້ານ ຄິດເປັນສ່ວນຮ້ອຍແມ່ນມີການປ່ຽນແປງເພີ່ມຂຶ້ນ 8.25 ສ່ວນຮ້ອຍ ແລະ ບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ ແມ່ນມີຈຳນວນຫຼຸດລົງ 14 ບ້ານ ຄິດເປັນສ່ວນຮ້ອຍແມ່ນມີການປ່ຽນແປງຫຼຸດລົງ 5.30 ສ່ວນຮ້ອຍ.

2.3 ຂອບເຂດທີ່ຕັ້ງແບ່ງຕາມພູມສັນຖານ

ການຈັດແບ່ງຂອບເຂດທີ່ຕັ້ງຕາມພູມສັນຖານແມ່ນແບ່ງອອກເປັນ 3 ເຂດຕົ້ນຕໍຄື: ເຂດທົ່ງພຽງ, ເຂດພູດອຍ ແລະ ເຂດທົ່ງພຽງ.

**ເຂດທົ່ງພຽງ:** ແມ່ນເຂດພື້ນທີ່ດິນຮາບພຽງ ຫຼື ຫຼຸບໂນນໂດຍມີລະດັບຄວາມສູງທີ່ແຕກຕ່າງກັນລະພື້ນທີ່ຕ່ຳ ແລະ ສູງ ເຊິ່ງແຕ່ລະເຂດບໍ່ແຕກຕ່າງກັນຫຼາຍ ແລະ ສູງກວ່າລະດັບໜ້ານ້ຳທະເລບໍ່ເກີນ 100 ແມັດ;

**ເຂດພູດອຍ:** ແມ່ນເຂດພື້ນທີ່ດິນ ທີ່ມີລະດັບສູງຂຶ້ນກວ່າບໍລິເວນອ້ອມຮອບ ເຊິ່ງປະກອບມີພູຜາ ແລະ ເນີນພູ, ມີລັກສະນະພູມີປະເທດໂດຍທົ່ວໄປຄືກັນ ແຕ່ລະດັບ ແລະ ຄວາມຄ້ອຍຊັນແຕກຕ່າງກັນ, ພູຜາ ຈະມີຄວາມສູງເກີນ 500 ແມັດ, ສ່ວນເນີນພູມີຄວາສູງລະຫວ່າງ 100-500 ແມັດ;

**ເຂດທົ່ງພຽງ:** ແມ່ນເຂດພື້ນທີ່ຮາບພຽງ, ມີລະດັບສູງຂຶ້ນກວ່າບໍລິເວນທີ່ຢູ່ອ້ອມຮອບໂດຍສ່ວນໃຫຍ່ເປັນບໍລິເວນທີ່ມີເນື້ອທີ່ກວ້າງ, ພື້ນທີ່ຕໍ່າ ແລະ ສູງມີລັກສະນະແຕກຕ່າງກັນຫຼາຍກວ່າ 150 ແມັດ ແລະ ສູງກວ່າລະດັບນໍ້າທະເລແຕ່ 100-500 ແມັດ, ມີຂອບສູງຊັນ ຫຼື ຜາຊັນຢູ່ຢ່າງໜ້ອຍໜຶ່ງດ້ານ ຫຼື ມີສາຍພູກັ້ນເປັນຂອບຢູ່ດ້ານໃດໜຶ່ງ.

ຕາຕະລາງທີ 3: ຈຳນວນບ້ານ ແບ່ງຕາມ ທີ່ຕັ້ງພູມສັນຖານ ປີ 2018

| ລະຫັດເມືອງ | ຊື່ເມືອງ | ທີ່ຕັ້ງພູມສັນຖານບ້ານ | | | ຈຳນວນລວມ |
|---|---|---|---|---|---|
| | | ທົ່ງພຽງ | ພູດອຍ | ພູພຽງ | |
| 0501 | ຫ້ວຍຊາຍ | 21 | 0 | 61 | 21 |
| 0502 | ຕົ້ນເຜີ້ງ | 30 | 3 | 5 | 30 |
| 0503 | ເມິງ | 9 | 4 | 15 | 9 |
| 0504 | ຜາອຸດົມ | 35 | 23 | 8 | 35 |
| 0505 | ປາກທາ | 12 | 5 | 17 | 12 |
| **ລວມ** | | **107** | **35** | **106** | **248** |

ຮູບສະແດງທີ 4: ອັດຕາສ່ວນຂອງບ້ານ ແບ່ງຕາມທີ່ຕັ້ງພູມສັນຖານ ປີ 2018




ຈາກຕາຕາລາງທີ 3 ແລະ ຮູບສະແດງທີ 4 ສະແດງໃຫ້ເຫັນວ່າ ແຂວງ ບໍ່ແກ້ວ ມີຈຳນວນບ້ານທີ່ຕັ້ງຢູ່ເຂດທົ່ງພຽງ ແມ່ນມີ 107 ບ້ານ ຄິດສ່ວນເປັນສ່ວນຮ້ອຍເທົ່າກັບ 42.74 ສ່ວນຮ້ອຍ, ບ້ານທີ່ຕັ້ງຢູ່ເຂດພູດອຍ ມີ 35 ບ້ານ ຄິດເປັນສ່ວນຮ້ອຍເທົ່າກັບ 14.11% ແລະ ບ້ານທີ່ຕັ້ງຢູ່ເຂດທົ່ງພຽງແມ່ນມີ 106 ບ້ານ ຄິດເປັນສ່ວນຮ້ອຍເທົ່າກັບ 43.15 ສ່ວນຮ້ອຍ. ໝາຍວ່າຄວາມປະຊາຊົນແຂວງບໍ່ແກ້ວ ສ່ວນໃຫຍ່ແມ່ນຕັ້ງຖິ່ນຖານອາໄສຢູ່ເຂດພູພຽງ ແລະ ເຂດທົ່ງພຽງ ກວມເອົາເຖິງ 87 ສ່ວນຮ້ອຍ. ຈຳນວນບ້ານແບ່ງຕາມທີ່ຕັ້ງພູມສັນຖານຂອງເມືອງ ຫ້ວຍຊາຍ ແມ່ນມີບ້ານທີ່ຕັ້ງຢູ່ເຂດທົ່ງພຽງ 21 ບ້ານ ແລພ ບ້ານທີ່ຕັ້ງຢູ່ເຂດພູພຽງມີ 61 ບ້ານ, ສ່ວນບ້ານທີ່ຕັ້ງຢູ່ເຂດພູດອຍແມ່ນບໍ່ມີ; ເມືອງ ຕົ້ນເຜີ້ງ ມີບ້ານທີ່ຕັ້ງຢູ່ເຂດທົ່ງພຽງແມ່ນ 30 ບ້ານ, ບ້ານທີ່ຕັ້ງຢູ່ເຂດພູດອຍແມ່ນມີ 3 ບ້ານ ແລະ ບ້ານທີ່ຕັ້ງຢູ່ເຂດພູພຽງມີ 5 ບ້ານ; ເມືອງ ເມິງ ມີບ້ານທີ່ຕັ້ງຢູ່ເຂດທົ່ງພຽງແມ່ນ

9 ບ້ານ, ບ້ານທີ່ຕັ້ງຢູ່ເຂດພູດອຍແມ່ນມີ 4 ບ້ານ ແລະ ບ້ານທີ່ຕັ້ງຢູ່ເຂດພູພຽງມີ 15 ບ້ານ; ເມືອງ ຜາອຸດົມ ມີບ້ານທີ່ຕັ້ງຢູ່ເຂດທົ່ງພຽງແມ່ນ 35 ບ້ານ, ບ້ານທີ່ຕັ້ງຢູ່ເຂດພູດອຍແມ່ນມີ 23 ບ້ານ ແລະ ບ້ານທີ່ຕັ້ງຢູ່ເຂດພູພຽງມີ 8 ບ້ານ; ເມືອງ ປາກທາ ມີບ້ານທີ່ຕັ້ງຢູ່ເຂດທົ່ງພຽງແມ່ນ 12 ບ້ານ, ບ້ານທີ່ຕັ້ງຢູ່ເຂດພູດອຍແມ່ນມີ 5 ບ້ານ ແລະ ບ້ານທີ່ຕັ້ງຢູ່ເຂດພູພຽງມີ 17 ບ້ານ.

2.4ຂໍ້ມູນພື້ນຖານໂຄງລ່າງຂອງບ້ານ

ການເກັບກຳຂໍ້ມູນສະຖິຕິຂັ້ນທ້ອງຖິ່ນ ປີ 2018 ຂອງແຂວງ ບໍ່ແກ້ວ ໄດ້ມີການເກັບກຳຂໍ້ມູນແຕ່ລະບ້ານກ່ຽວກັບຄຸນລັກສະນະຂໍ້ມູນພື້ນຖານໂຄງລ່າງບ້ານເຊັ່ນ: ບ້ານມີຖະໜົນຫົນທາງເຂົ້າເຖິງ, ມີໂຮງຮຽນ, ມີສຸກສາລາ, ການນຳໃຊ້ໄຟຟ້າ, ການນຳໃຊ້ນ້ຳປະປາ, ນອກຈາກນັ້ນກໍຍັງມີ ເນື້ອທີ່ດິນຄຸ້ມຄອງການນຳໃຊ້ທຳການຜະລິດ, ໂຄງການພັດທະນາໃດໜຶ່ງທີ່ບ້ານໄດ້ຮັບ, ສະພາບໄພພິບັດທີ່ເກີດຂຶ້ນ ແລະ ສະພາບຄວາມບໍ່ສະຫງົບພາຍໃນບ້ານ. ເຊິ່ງຂໍ້ມູນດັ່ງກ່າວແມ່ນມີຄວາມສຳຄັນໂດຍສະເພາະແມ່ນການສ້າງຖານຂໍ້ມູນຂອງບ້ານໃນຂອບເຂດທົ່ວປະເທດ ໂດຍສະເພາະແຂວງ ຈຳປາສັກ, ເຊິ່ງມີຄວາມສຳຄັນໃນການວາງແຜນທາງດ້ານການພັດທະນາຕ່າງໆ ແລະ ການປະເມີນມາດຕະຖານບ້ານພົ້ນທຸກ ແລະ ເມືອງພົ້ນທຸກ ຕາມທິດສາມສ້າງຂອງລັດຖະບ້ານວາງອອກ.

ຕາຕະລາງທີ 4: ຈຳນວນ ແລະ ສ່ວນຮ້ອຍຂໍ້ມູນພື້ນຖານບ້ານ ແບ່ງຕາມເມືອງ

| ລາຍການ | ຫົວໜ່ວຍ | ສ່ວນຮ້ອຍ | ລວມ | ເມືອງ | | | | |
|---|---|---|---|---|---|---|---|---|
| | | | | ຫ້ວຍຊາຍ | ຕົ້ນເຜິ້ງ | ເມິງ | ຜາອຸດົມ | ປາກທາ |
| ບ້ານມີເສັ້ນທາງເຂົ້າເຖິງບ້ານ | ບ້ານ | 96.77 | 240 | 82 | 38 | 28 | 58 | 34 |
| ບ້ານທີ່ລົດສາມາດເຂົ້າເຖິງລະດູແລ້ງ | ບ້ານ | 95.56 | 237 | 79 | 38 | 28 | 58 | 34 |
| ບ້ານທີ່ລົດສາມາດເຂົ້າເຖິງລະດູຝົນ | ບ້ານ | 94.35 | 234 | 76 | 38 | 28 | 58 | 34 |
| ບ້ານທີ່ມີແຜນຜັງ ແລະ ມີການປະຕິບັດແຜນຜັງ | ບ້ານ | 29.03 | 72 | 0 | 16 | 28 | 26 | 2 |
| ບ້ານທີ່ມີລົດໂດຍສານແລ່ນຜ່ານ ແລະ ຈອດຮັບຄົນໂດຍສານ | ບ້ານ | 53.63 | 133 | 66 | 19 | 15 | 28 | 5 |
| ບ້ານມີນ້ຳປະປາໃຊ້ | ບ້ານ | 12.90 | 32 | 12 | 9 | 2 | 7 | 2 |
| ບ້ານມີຕະຫຼາດຂາຍປະຈຳ | ບ້ານ | 8.87 | 22 | 12 | 3 | 0 | 4 | 3 |
| ບ້ານມີຕະຫຼາດໄກ້ບ້ານ | ບ້ານ | 29.84 | 74 | 42 | 15 | 0 | 7 | 10 |
| ບ້ານມີໄຟຟ້າໃຊ້ | ບ້ານ | 96.37 | 239 | 82 | 38 | 28 | 57 | 34 |
| ບ້ານທີ່ມີແຫຼ່ງໄຟຟ້າຕົ້ນຕໍຂອງບ້ານທີ່ແມ່ນຕາຂ່າຍໄຟຟ້າຂອງລັດ | ບ້ານ | 96.37 | 239 | 82 | 38 | 28 | 57 | 34 |

| | | | | | | | | |
|---|---|---|---|---|---|---|---|---|
| ບ້ານທີ່ມີແຫຼ່ງໄຟຟ້າຕົ້ນຕໍຂອງບ້ານທີ່ແມ່ນຈັກໄຟຟ້າຂອງລັດ | ບ້ານ | 0 | 0 | 0 | 0 | 0 | 0 | 0 |
| ບ້ານທີ່ມີແຫຼ່ງໄຟຟ້າຕົ້ນຕໍຂອງບ້ານທີ່ແມ່ນຈັກໄຟຟ້າຂອງເອກະຊົນ | ບ້ານ | 0 | 0 | 0 | 0 | 0 | 0 | 0 |
| ບ້ານທີ່ມີແຫຼ່ງໄຟຟ້າຕົ້ນຕໍຂອງບ້ານທີ່ແມ່ນໝໍ້ໄຟ/ໄດ | ບ້ານ | 0 | 0 | 0 | 0 | 0 | 0 | 0 |

ຈາກຕາລາງທີ 4 ສະແດງໃຫ້ເຫັນວ່າ ບ້ານທີ່ມີເສັ້ນທາງເຂົ້າເຖິງມີຈຳນວນ 240 ບ້ານ ກວມເອົາ 96.77 ສ່ວນຮ້ອຍຂອງບ້ານທັງໝົດ ແລະ ເມືອງທີ່ມີເສັ້ນທາງເຂົ້າເຖິງຫຼາຍກວ່າໝູ່ແມ່ນເມືອງ ຫ້ວຍຊາຍ 82 ບ້ານ, ຮອງລົງມາແມ່ນເມືອງ ຜາອຸດົມ 58 ບ້ານ, ເມືອງ ຕົ້ນເຜິ້ງ 38 ບ້ານ, ເມືອງ ປາກທາ 34 ບ້ານ ແລະ ເມືອງ ເມິງ 28 ບ້ານ; ບ້ານທີ່ລົດສາມາດເຂົ້າເຖິງແຕ່ລະດູແລ້ງ ມີທັງໝົດ 237 ບ້ານ ກວມເອົາ 95.56 ສ່ວນຮ້ອຍຂອງບ້ານທັງໝົດ, ເມືອງ ທີ່ມີເສັ້ນທາງເຂົ້າເຖິງລະດູແລ້ງຫຼາຍກວ່າໝູ່ແມ່ນ ເມືອງ ຫ້ວຍຊາຍ 79 ບ້ານ ແລະ ໜ້ອຍກວ່າໝູ່ແມ່ນເມືອງ ເມິງ; ບ້ານທີ່ລົດສາມາດເຂົ້າເຖິງແຕ່ລະດູຝົນແມ່ນທັງໝົດ 234 ບ້ານ ກວມເອົາ 94.35 ສ່ວນຮ້ອຍ ແລະ ເມືອງທີ່ມີລົດສາມາດເຂົ້າເຖິງໃນລະດູຝົນຫຼາຍກວ່າໝູ່ແມ່ນເມືອງ ຫ້ວຍຊາຍ 79 ບ້ານ ແລະ ໜ້ອຍກວ່າໝູ່ແມ່ນເມືອງ ເມິງ; ບ້ານທີ່ມີແຜນຜັງ ແລະປະຕິບັດແຜນຜັງ ມີທັງໝົດ 72 ບ້ານ ກວມເອົາ 29.03 ສ່ວນຮ້ອຍຂອງບ້ານທັງໝົດ ແລະ ເມືອງທີ່ມີແຜນຜັງມີ 28 ບ້ານ ແລະ ໜ້ອຍກວ່າໝູ່ກັບແມ່ນເມືອງຫ້ວຍຊາຍທີ່ບໍ່ແຜນຜັງ ແລະ ປະຕິບັດແຜນຜັງເລີຍ; ບ້ານທີ່ມີລົດໂດຍສານແລ່ນຜ່ານ ແລະ ຈອດຮັບຄົນໂດຍສານມີທັງໝົດ 133 ບ້ານ ກວມເອົາ 3.63 ສ່ວນຮ້ອຍ ແລະ ເມືອງ ທີ່ມີລົດໂດຍສານຜ່ານຫຼາຍກວ່າໝູ່ແມ່ນຫ້ວຍຊາຍມີ 66 ບ້ານ ແລະ ໜ້ອຍກວ່າໝູ່ແມ່ນເມືອງ ປາກທາ ມີ 5 ບ້ານເທົ່ານັ້ນ; ບ້ານທີ່ມີນ້ຳປະປາໃຊ້ ມີທັງໝົດພຽງ 32 ບ້ານ ກວມເອົາ 12.90 ສ່ວນຮ້ອຍ (ຮູບສະແດງທີ 6), ບ້ານທີ່ມີຕະຫຼາດຂາຍປະຈາແມ່ນມີພຽງ 22 ບ້ານ ກວມເອົາ 8.87 ສ່ວນຮ້ອຍ, ບ້ານທີ່ຕະຫຼາດໃກ້ບ້ານມີ 74 ບ້ານ ກວມເອົາ 29.84 ສ່ວນຮ້ອຍ, ບ້ານທີ່ມີໄຟຟ້າໃຊ້ແມ່ນມີ 239 ບ້ານ ກວມເອົາ 96.37 ສ່ວນຮ້ອຍ ແລະ ບ້ານນຳໃຊ້ໄຟຟ້າຂອງລັດເປັນແຫຼ່ງຕົ້ນຕໍແມ່ນມີ 239 ບ້ານ ກວມເອົາ 96.37 ສ່ວນຮ້ອຍ. ສ່ວນເມືອງທີ່ນຳໃຊ້ນ້ຳປະປາ, ມີຕະຫຼາດຂາຍປະຈຳ, ມີຕະຫຼາດໃກ້ບ້ານ, ມີໄຟຟ້າໃຊ້ ແລະ ມີນຳໃຊ້ໄຟຟ້າຂອງລັດເປັນແຫຼ່ງຕົ້ນຕໍແມ່ນ ຫຼາຍວ່າໝູ່ແມ່ນ ເມືອງ ຫ້ວຍຊາຍ ແລະ ໜ້ອຍກວ່າໝູ່ແມ່ນເມືອງເມິງ. ຈາກຕາລາງຍັງສະແດງໃຫ້ເຫັນຕື່ມວ່າ ໃນທົ່ວແຂວງ ບໍ່ແກ້ວຍັງມີ 8 ບ້ານທີ່ບໍ່ມີເສັ້ນທາງເຂົ້າເຖິງ ແລະ ມີ 9 ບ້ານທີ່ບໍ່ມີໄຟຟ້າເຂົ້າເຖິງ ກວມເອົາ 3.63 ສ່ວນຮ້ອຍ (ຮູບສະແດງທີ 7), ບ້ານສ່ວນໃຫຍ່ແມ່ນບໍ່ມີແຜນຜັງ ຫຼື ປະຕິບັດແຜນຜັງ, ການນຳໃຊ້ນ້ຳປະປາ, ຕະລາດຄ້າຂາຍແລກປ່ຽນແມ່ນຂ້ອຍຍັງມີໜ້ອຍ.

2.5ການຈັດສັນເນື້ອທີ່ດິນ

ຕາຕະລາງທີ 5: ຈໍານວນ ແລະ ສ່ວນຮ້ອຍ ເນື້ອທີ່ດິນ ແບ່ງຕາມປະເພດດິນ ແລະ ແບ່ງຕາມເມືອງ

| ລາຍການ | ຫົວໜ່ວຍ | ສ່ວນ ຮ້ອຍ | ລວມ | ເມືອງ | | | | |
|---|---|---|---|---|---|---|---|---|
| | | | | ຫ້ວຍຊາຍ | ຕົ້ນເຜີ້ງ | ເມິງ | ຜາອຸດົມ | ປາກທາ |
| ເນື້ອທີ່ດິນລວມ | ເຮັກຕ່າ | 100.0 | 4,108,907 | 150,420 | 15,455 | 2,815 | 106,576 | 2,969,059 |
| ເນື້ອທີ່ສໍາລັບທໍາການຜະລິດກະສິກໍາ | ເຮັກຕ່າ | 19.5 | 801,634 | 17,446 | 6,141 | 473 | 27,231 | 750,343 |
| ເນື້ອທີ່ດິນນາ | ເຮັກຕ່າ | 26.1 | 1,071,772 | 5,153 | 4,638 | 85 | 2,495 | 1,059,401 |
| ເນື້ອທີ່ດິນຮັບນໍ້າຊົນລະປະທານ | ເຮັກຕ່າ | 0.1 | 2,873 | 1,291 | 542 | 15 | 758 | 267 |
| ເນື້ອທີ່ດິນປຸກສ້າງ | ເຮັກຕ່າ | 2.9 | 117,205 | 52,290 | 545 | 469 | 2,793 | 61,108 |
| ເນື້ອທີ່ດິນອຸດສາຫະກໍາ | ເຮັກຕ່າ | 0.3 | 12,775 | 3,136 | 860 | 4,126 | 2,054 | 2,599 |
| ເນື້ອທີ່ດິນທົ່ງຫຍ້າ | ເຮັກຕ່າ | 0.2 | 7,149 | 1,268 | 56 | - | 3,859 | 1,966 |
| ເນື້ອທີ່ດິນປປ່າຜະລິດ | ເຮັກຕ່າ | 2.4 | 99,505 | 5,496 | 208 | 59,328 | 27,082 | 7,391 |
| ເນື້ອທີ່ດິນປ່າປ້ອງກັນ | ເຮັກຕ່າ | 4.0 | 165,287 | 54,208 | 482 | 6,453 | 17,237 | 86,907 |
| ເນື້ອທີ່ດິນປ່າສະຫງວນ | ເຮັກຕ່າ | 5.1 | 207,799 | 5,387 | 977 | 56,563 | 11,538 | 133,334 |
| ເນື້ອທີ່ດິນອື່ນໆ | ເຮັກຕ່າ | 39.5 | 1,622,908 | 4,745 | 1,005 | 739,885 | 11,530 | 865,743 |

ຈາກຕາຕາລາງທີ 5 ແລະ ຮູບສະແດງທີ 8 ສະແດງໃຫ້ເຫັນວ່າ ໃນປີ 2018 ແຂວງ ບໍ່ແກ້ວ ມີເນື້ອທີ່ດິນລວມທັງໝົດແມ່ນມີ 4,108,907 ເຮັກຕ້າ, ໃນນັ້ນ ເນື້ອທີ່ດິນ ອື່ນໆ ກວມອັດຕາສ່ວນຫຼາຍກວ່າໝູ່ ມີຈໍານວນ 1,622,908 ເຮັກຕ່າ ກວມເອົາ 39.5 ສ່ວນຮ້ອຍ, ຈາກນັ້ນແມ່ນເນື້ອທີ່ດິນນາ 1,071,772 ເຮັກຕ່າ ກວມເອົາ 26.1 ສ່ວນຮ້ອຍ, ເນື້ອທີ່ດິນຜະລິດກະສິກໍາ 801,634 ກວມເອົາ 19.5 ສ່ວນຮ້ອຍ ແລະ ເຫັນວ່າເນື້ອທີ່ດິນ ທີ່ກວມອັດຕາສ່ວນໜ້ອຍ ແມ່ນ ດິນ ທົ່ງຫຍ້າ ກວມເອົາ 0.2 ສ່ວນຮ້ອຍ, ດິນ ອຸດສາຫະກໍາ ກວມເອົາ 0.3 ສ່ວນຮ້ອຍ ແລະ ດິນທີ່ໄດ້ຮັບນໍ້າຊົນລະປະທານ ມີແຕ່ 0.1 ສ່ວນຮ້ອຍເທົ່ານັ້ນ.

ຮູບສະແດງທີ 5: ອັດຕາສ່ວນຮ້ອຍ ເນື້ອທີ່ດິນ ແບ່ງ ຕາມປະເພດດິນ




## 2.6 ການບໍລິການດ້ານການຜະລິດ ແລະ ໜ່ວຍບໍລິການ

ຕາຕະລາງທີ 6: ການບໍລິການດ້ານການຜະລິດ ແລະ ໜ່ວຍບໍລິການຂອງ ບ້ານ ແບ່ງຕາມເມືອງ ປີ 2018

| ລາຍການ | ຫົວໜ່ວຍ | ສ່ວນຮ້ອຍ | ລວມ | ເມືອງ | | | | |
|---|---|---|---|---|---|---|---|---|
| | | | | ຫ້ວຍຊາຍ | ຕົ້ນເຜິ້ງ | ເມິງ | ຜາອຸດົມ | ປາກທາ |
| ບ້ານມີຮ້ານຄ້າຕ່າງໆ | ບ້ານ | 95.97 | 238 | 82 | 38 | 28 | 56 | 34 |
| ບ້ານມີທະນາຄານເຂົ້າ | ບ້ານ | 18.95 | 47 | 16 | 3 | 0 | 12 | 16 |
| ບ້ານມີທະນາຄານສັດ | ບ້ານ | 8.07 | 20 | 2 | 1 | 1 | 16 | 0 |
| ບ້ານມີສະຖາບັນການເງິນ-ສິນເຊື່ອ | ບ້ານ | 21.77 | 54 | 6 | 5 | 28 | 10 | 5 |
| ບ້ານມີກອງທຶນໃດໜຶ່ງໃນບ້ານ | ບ້ານ | 62.1 | 154 | 38 | 17 | 28 | 44 | 27 |
| ບ້ານມີກຸ່ມການຜະລິດ ແລະບໍລິການໃດໜຶ່ງ | ບ້ານ | 15.73 | 39 | 16 | 5 | 0 | 9 | 9 |
| ບ້ານມີກຸ່ມເກັບຊື້ໃດໜຶ່ງໃນບ້ານ | ບ້ານ | 18.95 | 47 | 16 | 4 | 8 | 13 | 6 |

ຈາກຕາຕາລາງທີ 6 ສະແດງໃຫ້ເຫັນວ່າ ແຂວງບໍ່ແກ້ວ ມີບ້ານທີ່ມີຮ້ານຄ້າຕ່າງໆແມ່ນມີຈຳນວນ 238 ບ້ານ ກວມເອົາ 95.97 ສ່ວນຮ້ອຍ, ເມືອງທີ່ຮ້ານຄ້າຕ່າງໆໆຫຼາຍກວ່າໝູ່ແມ່ນ ເມືອງຫວ້ຍຊາຍ 82 ບ້ານ; ບ້ານທີ່ມີທະນາຄານເຂົ້າແມ່ນມີຈຳນວນ  47 ບ້ານ ກວມເອົາ 18.95 ຂອງບ້ານທັງໝົດ, ໃນນັ້ນ ເມືອງຫ້ວຍຊາຍ ແລະ ເມືອງ ປາກທາ ມີທະນາຄານເຂົ້າທັງໝົດ 16 ບ້ານຫຼາຍກວ່າເມືອງອື່ນໆ; ບ້ານທີ່ມີທະນາຄານສັດມີທັງໝົດ 20 ບ້ານ ກວມເອົາ 8.07 ສ່ວນຮ້ອຍ, ເມືອງ ຜາອຸດົມມີບ້ານທີ່ມີທະນາຄານສັດຫຼາຍກວ່າໝູ່ຄື 16 ບ້ານ; ບ້ານທີ່ມີສະຖາບັນການເງິນ-ສິນເຊື່ອມີທັງໝົດ 54 ບ້ານ ກວມເອົາ 21.77 ຂອງຈານວນບ້ານທັງໝົດ ແລະ ເມືອງ ເມິງ ແມ່ນມີບ້ານທີ່ມີສະຖານບັນການເງິນ-ສິນເຊື່ອຫຼາຍກວ່າໝູ່ຄື 28 ບ້ານ; ບ້ານທີ່ມີກອງທຶນໃດໜຶ່ງ ແມ່ນມີທັງໝົດ 154 ບ້ານ ກວມເອົາ 62.73 ສ່ວນຮ້ອຍຂອງບ້ານທັງໝົດ ແລະ ເມືອງ ຫ້ວຍຊາຍ ແມ່ນມີບ້ານທີ່ມີກອງທຶນໃດໜຶ່ງໃນບ້ານຫລາຍກວ່າໝູ່ຄື 38 ບ້ານ; ບ້ານມີກຸ່ມຜະລິດ ແລະ ບໍລິການໃດໜຶ່ງ ແມ່ນມີທັງໝົດ 39 ບ້ານ ກວມເອົາ 15.73 ສ່ວນຮ້ອຍ ແລະ ເມືອງ ຫ້ວຍຊາຍມີ 16 ບ້ານ ທີ່ມີກຸ່ມຜີລິດ ແລະ ບໍລິການໃດໜຶ່ງຫຼາຍກວ່າເມືອງອື່ນໆ; ບ້ານທີ່ມີການເກັບຊື້ອັນໃດໜຶ່ງ ມີທັງໝົດ 47 ບ້ານ ກວມເອົາ 18.95 ສ່ວນຮ້ອຍ ແລະ ເມືອງ ຫ້ວຍຊາຍມີ 16 ບ້ານ ທີ່ມີການຊື້ຂາຍໃດໜຶ່ງໃນບ້ານຫຼາຍກວ່າເມືອງອື່ນ.

2.7ໂຄງການພັດທະນາ ແລະ ແຫຼ່ງທຶນຊ່ວຍເຫຼືອ

ຕາຕະລາງທີ 7: ໂຄງການພັດທະນາຢູ່ບ້ານ ແລະ ແຫຼ່ງການຊ່ວຍເຫລືອ ແບ່ງຕາມເມືອງ

| ລາຍການ | ຫົວໜ່ວຍ | ສ່ວນຮ້ອຍ | ລວມ | ເມືອງ | | | | |
|---|---|---|---|---|---|---|---|---|
| | | | | ຫ້ວຍຊາຍ | ຕົ້ນເຜີ້ງ | ເມິງ | ຜາອຸດົມ | ປາກທາ |
| ບ້ານທີ່ມີໂຄງການພັດທະນາໃດໜຶ່ງ | ບ້ານ | 38.31 | 95 | 14 | 12 | 18 | 35 | 16 |
| ບ້ານທີ່ມີໂຄງການພັດທະນາດ້ານການປູກພືດ | ບ້ານ | 11.69 | 29 | 11 | 7 | 2 | 9 | 0 |
| ບ້ານທີ່ມີໂຄງການພັດທະນາດ້ານຊົນລະປະທານ | ບ້ານ | 6.05 | 15 | 4 | 2 | 0 | 8 | 1 |
| ບ້ານທີ່ມີໂຄງການພັດທະນາດ້ານປ່າໄມ້ | ບ້ານ | 7.66 | 19 | 4 | 5 | 7 | 3 | 0 |
| ບ້ານທີ່ມີໂຄງການພັດທະນາດ້ານການຄ້າ | ບ້ານ | 1.21 | 3 | 2 | 0 | 0 | 1 | 0 |
| ບ້ານທີ່ມີໂຄງການພັດທະນາດ້ານຄົມມະນາຄົມ-ຂົນສົ່ງ | ບ້ານ | 4.03 | 10 | 3 | 3 | 0 | 4 | 0 |
| ບ້ານທີ່ມີໂຄງການພັດທະນາດ້ານຫັດຖະກຳ | ບ້ານ | 7.26 | 18 | 6 | 3 | 0 | 9 | 0 |
| ບ້ານທີ່ມີໂຄງການພັດທະນາດ້ານການສຶກສາ | ບ້ານ | 19.76 | 49 | 11 | 6 | 7 | 25 | 0 |
| ບ້ານທີ່ມີໂຄງການພັດທະນາດ້ານສຸຂະພາບ | ບ້ານ | 15.73 | 39 | 12 | 6 | 0 | 21 | 0 |
| ບ້ານທີ່ມີໂຄງການພັດທະນາດ້ານນ້ຳ ແລະ ອະນາໄມ | ບ້ານ | 20.56 | 51 | 11 | 5 | 5 | 15 | 15 |
| ບ້ານທີ່ມີໂຄງການພັດທະນາດ້ານອື່ນໆ | ບ້ານ | 6.05 | 15 | 0 | 0 | 7 | 8 | 0 |
| ບ້ານທີ່ໄດ້ຮັບ ທຶນຊ່ວຍເຫຼືອມາຈາກທຶນຂອງບ້ານ | ບ້ານ | 5.24 | 13 | 10 | 3 | 0 | 0 | 0 |

| | | | | | | | | |
|---|---|---|---|---|---|---|---|---|
| ບ້ານທີ່ໄດ້ຮັບ ທຶນຊ່ວຍເຫຼືອມາຈາກການກູ້ຢືມທະນາຄານ | ບ້ານ | 7.26 | 18 | 5 | 4 | 0 | 9 | 0 |
| ບ້ານທີ່ໄດ້ຮັບ ທຶນຊ່ວຍເຫຼືອມາຈາກທຶນຂອງລັດຖະບານ | ບ້ານ | 13.31 | 33 | 5 | 5 | 0 | 23 | 0 |
| ບ້ານທີ່ໄດ້ຮັບທຶນຊ່ວຍເຫຼືອມາຈາກທຶນຂອງອົງການຈັດຕັ້ງສາກົນ | ບ້ານ | 23.79 | 59 | 2 | 2 | 19 | 19 | 17 |
| ບ້ານທີ່ໄດ້ຮັບ ທຶນຊ່ວຍເຫຼືອມາຈາກແຫຼ່ງທຶນອື່ນໆ | ບ້ານ | 2.82 | 7 | 0 | 0 | 0 | 7 | 0 |

ຈາກຕາຕາລາງທີ 7 ສະແດງໃຫ້ເຫັນວ່າໃນປີ 2018 ແຂວງບໍ່ແກ້ວ ມີ 95 ບ້ານທີ່ມີໂຄງການພັດທະນາໃດໜຶ່ງ ກວມເອົາ 38.31 ສ່ວນຮ້ອຍຂອງຈຳນວນບ້ານທັງໝົດ ແລະ ເມືອງ ຜາອຸດົມ ມີ 35 ບ້ານທີ່ມີໂຄງການພັດທະນາຫຼາຍກວ່າບ້ານອື່ນ; ມີ 29 ບ້ານທີ່ມີໂຄງການພັດທະນາດ້ານການປູກພືດ ກວມເອົາ 11.69 ສ່ວນຮ້ອຍຂອງບ້ານທັງໝົດ ແລະ ເມືອງ ຫ້ວຍຊາຍ ມີ 11 ບ້ານທີ່ມີໂຄງການພັດທະນາດ້ານການປູກພືດຫຼາຍກວ່າເມືອງອື່ນ; ມີ 15 ບ້ານທີ່ມີໂຄງການພັດທະນາດ້ານຊົນລະປະທານ ກວມເອົາ 6.05 ສ່ວນຮ້ອຍ ແລະ ເມືອງ ຜາອຸດົມມີໂຄງການຊົນລະປະທານຫຼາຍກວ່າໝູ່ 8 ບ້ານ; ມີ 19 ບ້ານທີ່ມີໂຄງການພັດທະນາດ້ານປ່າໄມ້ ກວມເອົາ 7.66 ສ່ວນຮ້ອຍຂອງບ້ານທັງໝົດ ແລະ ເມືອງເ ເມິງ ມີ 7 ໂຄງການຫຼາຍກວ່າເມືອງອື່ນ; ມີພຽງ 3 ໂຄງການເທົ່ານັ້ນສຳລັບບ້ານທີ່ມີໂຄງການພັດທະນາການຄ້າ ກວມເອົາ 1.21 ສ່ວນຮ້ອຍເທົ່ານັ້ນຂອງບ້ານທັງໝົດ ແລະ ໂຄງການດັ່ງກ່າວແມ່ນມີແຕ່ຢູ່ເມືອງຫ້ວຍຊາຍ 2 ໂຄງການ ແລະ ເມືອງ ປາກທາ 1 ໂຄງການ; ບ້ານທີ່ມີໂຄງການພັດທະນາດ້ານຄົມມະນາຄົມ-ຂົນສົ່ງ ແມ່ນມີ 10 ບ້ານ ກວມເອົາ 4.03 ສ່ວນຮ້ອຍຂອງບ້ານທັງໝົດ ເຊິ່ງໂຄງດັ່ງກ່າວມີຢູ່ ເມອງ ຜາອຸດົມ 4 ບ້ານ, ເມືອງ ຫ້ວຍຊາຍ ແລະ ຕົ້ນເຜິ້ງ ເມືອງລະ 3 ບ້ານ; ໂຄງການພັດທະນາດ້ານຫັດຖະກຳແມ່ນມີ 18 ບ້ານ ກວມເອົາ 7.26 ສ່ວນຮ້ອຍຂອງບ້ານທັງໝົດ ເຊິ່ງໂຄງການດັ່ງກ່າວມີຢູ່ເມືອງ ຜາອຸດົມ 6 ບ້ານ, ເມືອງ ຫ້ວຍຊາຍ 6 ບ້ານ ແລະ ຕົ້ນເຜິ້ງ 3 ບ້ານ; ໂຄງການພັດທະນາການສຶກສາແມ່ນມີທັງໝົດ 49 ບ້ານ ກວມເອົາ 19.76 ສ່ວນຮ້ອຍຂອງບ້ານທັງໝົດ ແລະ ເມືອງທີ່ມີໂຄງການຫຼາຍກວ່າໝູ່ແມ່ນ ເມືອງ ຜາອຸດົມ ມີ 25 ບ້ານ, ເມືອງ ຫ້ວຍຊາຍ 11 ບ້ານ, ເມືອງ ເມິງ 7 ບ້ານ ແລະ ເມືອງຕົ້ນເຜິ້ງ 6 ບ້ານ; ໂຄງການພັດທະນາທາງດ້ານສຸຂະພາບມີທັງໝົດ 39 ບ້ານ ກວມເອົາ 15.73 ສ່ວນຮ້ອຍ ເຊິ່ງເມືອງທີ່ມີໂຄງການຫຼາຍກວ່າໝູ່ແມ່ນເມືອງ ຜາອຸດົມ ມີ 21 ບ້ານ, ເມືອງ ຫ້ວຍຊາຍ 12 ບ້ານ ແລະ ເມືອງ ຕົ້ນເຜິ້ງ 6 ບ້ານ; ໂຄງການພັດທະນາດ້ານນ້ຳ ແລະ ອະນາໄມມີທັງໝົດ 51 ບ້ານ ກວມເອົາ 20.56 ສ່ວນຮ້ອຍຂອງບ້ານທັງໝົດ, ເມືອງ ຜາອຸດົມ ແລະ ປາກທາ ມີໂຄງການລະ 15 ບ້ານ, ຫວຍຊາຍມີ 11 ບ້ານ, ເມືອງ ຕົ້ນເຜິ້ງ ແລະ ເມືອງ ເມິງ ມີເມືອງລະ 5 ບ້ານ ແລະ ນອກຈາກນັ້ນ ຍັງມີໂຄງການພັດທະນາອື່ນໆທັງໝົດ 15 ບ້ານ ກວມເອົາ 6.05 ສ່ວນຮ້ອຍຂອງບ້ານທັງໝົດ. ສຳລັບທຶນຂອງການຊ່ວຍເຫຼືອເຫັນວ່າ ແຂວງບໍ່ແກ້ວ ໄດ້ຮັບທຶນການຊ່ວຍເຫຼືອຈາກບ້ານ ທັງໝົດ 13 ບ້ານ ກວມເອົາ 5.24 ສ່ວນຮ້ອຍຂອງບ້ານທັງໝົດ ເຊິ່ງເມືອງຫ້ວຍຊາຍແມ່ນໄດ້ຮັບທຶນດັ່ງກ່າວຫລາຍກວ່າໝູ່ 10 ບ້ານ ແລະ ເມືອງ ຕົ້ນເຜິ້ງ 3 ບ້ານ; ໄດ້ຮັບທຶນການຊ່ວຍເຫຼືອຈາກການກູ້ຢືມທະນາຄານ ມີທັງໝົດ 18 ບ້ານ ກວມເອົາ 7.26 ສ່ວນຮ້ອຍຂອງບ້ານທັງໝົດ ແລະ ເມືອງທີ່ໄດ້ຮັບທຶນກູ້ຢືມຈາກທະນາຄານມີ ເມືອງ ຫ້ວຍຊາຍ 4 ບ້ານ ແລະ ເມືອງ ຕົ້ນເຜິ້ງ 4 ບ້ານ; ໄດ້ຮັບທຶນການຊ່ວຍເຫຼືອຈາກລັດຖະບ້ານມີ

33 ບ້ານ ກວມເອົາ 13.31 ສ່ວນຮ້ອຍຂອງບ້ານທັງໝົດ ເຊິ່ງເມືອງ ຜາອຸດົມ ມີ 23 ບ້ານ, ເມືອງ ຫ້ວຍຊາຍ ແລະ ເມືອງ ຕົ້ນເຜີ້ງ ເມືອງລະ 5 ບ້ານ ທີ່ໄດ້ຮັບທຶນຈາກລັດຖະບ້ານ; ໄດ້ຮັບທຶນຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ 59 ບ້ານ ກວມເອົາ 23.79 ສ່ວນຮ້ອຍ, ເມືອງ ເມິງ ແລະ ເມືອງ ຜາອຸດົມ ມີເມືອງລະ 19 ບ້ານ, ເມືອງ ປາກມາ ມີ 17 ບ້ານ, ເມືອງ ຫ້ວຍຊາຍ ແລະ ຕົ້ນເຜີ້ງ ເມືອງລະ 2 ບ້ານ ທີ່ໄດ້ຮັບທຶນການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ ແລະ ໄດ້ຮັບທຶນການຊ່ວຍເຫຼືອຈາກແຫຼ່ງອື່ນໆ ມີ 7 ບ້ານ ກວາມເອົາ 2.82 ສ່ວນຮ້ອຍ ເຊິ່ງມີພຽງເມືອງ ຜາອຸດົມທີ່ໄດ້ຮັບທຶນດັ່ງກ່າວ.

2.8 ປະເພດໃບຢັ້ງຢືນບ້ານທີ່ໄດ້ຮັບ

ການທີ່ບ້ານໄດ້ຮັບໃບຢັ້ງຢືນຕ່າງໆແມ່ນເປົ້າໝາຍຂອງລັດຖະບານ ໃນການມີສ່ວນຮ່ວມຂອງບ້ານໃນການພັດທະນາໃຫ້ກາຍເປັນແບບຢ່າງຫຼາຍດ້ານເຊັ່ນ: ບ້ານປອດຖະດີ, ບ້ານສາທາລະນະສຸກ, ບ້ານປອດຢາເສບຕິດ, ບ້ານຊາວໜຸ່ມ 4 ບຸກ, ບ້ານແມ່ຍິງ 3 ດີ, ບ້ານລຶບລ້າງການກົກໜັງສື ແລະ ລຶບລ້າງການກົກໜັງສື ແລະ ລຶບລ້າງຄອບຄົວທຸກຍາກ. ທັງໝົດນີ້ ເປັນການຢັ້ງຢືນຄວາມຖືກຕ້ອງຂອງແນວທາງພັກ-ລັດຂອງພວກເຮົາ, ບວກໃສ່ການສະໜັບສະໜູນຈາກປະຊາຊົນ, ເຮັດໃຫ້ການພັກທະນາກ້າວຂຶ້ນຢ່າງບໍ່ຢຸດຢັ້ງຕາມແນວທາງຂອງພັກ-ລັດ ເປັນການປະກອບສ່ວນສ້າງຊົນນະບົດໃຫ້ຊີວິດໃໝ່ທີ່ດີຂຶ້ນ, ການພັດທະນາຮອບດ້ານ ກ້າວໄປເຖິງການລຶບລ້າງຄວາມທຸກຍາກເທື່ອລະກ້າວ.

ຕາຕະລາງທີ 8: ຈຳນວນ ແລະ ອັດຕາສ່ວນຮ້ອຍ ປະເພດໃບຢັ້ງຢືນທີ່ບ້ານໄດ້ຮັບ ແບ່ງຕາມເມືອງ

| ລາຍການ | ຫົວໜ່ວຍ | ສ່ວນຮ້ອຍ | ລວມ | ເມືອງ | | | | |
|---|---|---|---|---|---|---|---|---|
| | | | | ຫ້ວຍຊາຍ | ຕົ້ນເຜີ້ງ | ເມິງ | ຜາອຸດົມ | ປາກທາ |
| ໃບຢັ້ງຢືນດ້ານວັດທະນະທຳ | ບ້ານ | 66.53 | 165 | 69 | 26 | 19 | 39 | 12 |
| ໃບຢັ້ງຢືນເປັນບ້ານພັດທະນາ | ບ້ານ | 46.37 | 115 | 50 | 20 | 16 | 19 | 10 |
| ຢັ້ງຢືນເປັນບ້ານປອດຖະດີ | ບ້ານ | 72.18 | 179 | 71 | 27 | 20 | 47 | 14 |
| ຢັ້ງຢືນເປັນບ້ານປ້ອງກັນຄວາມສະຫງົບ | ບ້ານ | 28.23 | 70 | 23 | 9 | 9 | 28 | 1 |
| ເປັນບ້ານແບບຢ່າງດ້ານສາທາລະນະສຸກ | ບ້ານ | 82.66 | 205 | 71 | 32 | 21 | 53 | 28 |
| ເປັນບ້ານສຳເລັດການສຶກສາພາກບັງຄັບ | ບ້ານ | 99.60 | 247 | 82 | 38 | 28 | 65 | 34 |

ຈາກຕາຕາລາງທີ 8 ສະແດງໃຫ້ເຫັນວ່າ ແຂວງ ບໍ່ແກ້ວ ໄດ້ຮັບໃບຢັ້ງຢືນດ້ານວັດທະນະທຳ ທັງໝົດ 165 ບ້ານ ກວມເອົາ 66.53 ສ່ວນຮ້ອຍຂອງບ້ານທັງໝົດ ປະກອບມີ ເມືອງຫ້ວຍຊາຍ 69 ບ້ານ, ເມືອງ ຕົ້ນຜື້ງ 26 ບ້ານ, ເມືອງ ເມິງ 19 ບ້ານ, ເມືອງ ຜາອຸດົມ 39 ບ້ານ ແລະ ເມືອງ ປາກທາ 12 ບ້ານ; ໄດ້ຮັບໃບຢັ້ງເປັນບ້ານພັດທະນາ 115 ບ້ານ ກວມເອົາ 46.37 ສ່ວນຮ້ອຍຂອງບ້ານທັງໝົດ ປະກອບມີ ເມືອງ ຫ້ວຍຊາຍ 69 ບ້ານ, ເມືອງ ຕົ້ນຜື້ງມ 26 ບ້ານ, ເມືອງ ເມິງ 19 ບ້ານ, ເມືອງ ຜາອຸດົມ 39 ບ້ານ ແລະ ເມືອງ ປາກທາ 12 ບ້ານ; ໄດ້ຮັບຢັ້ງຢືນເປັນບ້ານປອດຖະດີ 179 ບ້ານ ກວມເອົາ 72.18 ສ່ວນຮ້ອຍຂອງຂອງບ້ານທັງໝົດ ປະກອບມີ ເມືອງຫ້ວຍຊາຍ 71 ບ້ານ, ເມືອງ ຕົ້ນຜື້ງ 27 ບ້ານ, ເມືອງ ເມິງ

20 ບ້ານ, ເມືອງ ຜາອຸດົມ 47 ບ້ານ ແລະ ເມືອງ ປາກທາ 14 ບ້ານ; ໄດ້ຮັບໃບຢັ້ງຢືນບ້ານປ້ອງກັນຄວາມສະຫງົບ 70 ບ້ານ ກວມເອົາ 28.23 ສ່ວນຮ້ອຍຂອງບ້ານທັງໝົດ ປະກອບມີ ເມືອງ ຫ້ວຍຊາຍ 23 ບ້ານ, ເມືອງ ຕົ້ນຜຶ້ງ 9 ບ້ານ, ເມືອງ ເມິງ 9 ບ້ານ, ເມືອງ ຜາອຸດົມ 28 ບ້ານ ແລະ ເມືອງ ປາກທາ 1 ບ້ານ; ໄດ້ຮັບຢັ້ງຢືນເປັນບ້ານແບບຢ່າງດ້ານສາທາລະນະສຸກ 205 ບ້ານ ກວມເອົາ 82.66 ສ່ວນຮ້ອຍຂອງບ້ານທັງໝົດ ປະກອບມີ ເມືອງ ຫ້ວຍຊາຍ 71 ບ້ານ, ເມືອງ ຕົ້ນຜຶ້ງ 32 ບ້ານ, ເມືອງ ເມິງ 21 ບ້ານ, ເມືອງ ຜາອຸດົມ 53 ບ້ານ ແລະ ເມືອງ ປາກທາ 28 ບ້ານ; ແລະ ບ້ານທີ່ສຳເລັດການສຶກສາພາກບັງຄັບມີ 247 ບ້ານ ກວມເອົາ 99.60 ສ່ວນຮ້ອຍຂອງບ້ານທັງໝົດ ປະກອບມີ ເມືອງ ຫ້ວຍຊາຍ 82 ບ້ານ, ເມືອງ ຕົ້ນຜຶ້ງ 38 ບ້ານ, ເມືອງ ເມິງ 28 ບ້ານ, ເມືອງ ຜາອຸດົມ 65 ບ້ານ ແລະ ເມືອງ ປາກທາ 34 ບ້ານ.

2.9 ສະພາບໄພພິບັດຂອງບ້ານ

ຕາຕະລາງທີ 9: ຈຳນວນ ແລະ ອັດຕາສ່ວນຮ້ອຍ ສະພາບໄພພິບັດທີ່ບ້ານປະສົບ ແບ່ງຕາມເມືອງ

| ບ້ານທີ່ໄດ້ຮັບໄພພິບັດ | ຫົວໜ່ວຍ | ສ່ວນຮ້ອຍ | ລວມ | ເມືອງ | | | | |
|---|---|---|---|---|---|---|---|---|
| | | | | ຫ້ວຍຊາຍ | ຕົ້ນເຜິ້ງ | ເມິງ | ຜາອຸດົມ | ປາກທາ |
| ໄພແຫ້ງແລ້ງ | ບ້ານ | 6.05 | 15 | 10 | 0 | 0 | 5 | 0 |
| ໄພນ້ຳຖ້ວມ | ບ້ານ | 12.10 | 30 | 20 | 2 | 1 | 6 | 1 |
| ດິນເຈື່ອນ | ບ້ານ | 11.69 | 29 | 10 | 1 | 7 | 7 | 4 |
| ພາຍຸ | ບ້ານ | 1.61 | 4 | 3 | 1 | 0 | 0 | 0 |
| ໄຟໄໝ້ | ບ້ານ | 3.23 | 8 | 3 | 2 | 0 | 1 | 2 |
| ໄພທຳມະຊາດອື່ນໆ | ບ້ານ | 2.42 | 6 | 4 | 0 | 0 | 2 | 0 |

ຈາກຕາຕາລາງທີ 9 ສະແດງໃຫ້ເຫັນວ່າ ແຂວງ ບໍ່ແກ້ວ ມີ 15 ບ້ານທີ່ໄດ້ຮັບຜົນກະທົບທາງດ້ານໄພແຫ້ງແລ້ງ ກວມເອົາ 6.05 ສ່ວນຮ້ອຍຂອງບ້ານທັງໝົດ, ມີເມືອງ ຫ້ວຍຊາຍ ໄດ້ຮັບຜົນກະທົບ 10 ບ້ານ ແລະ ເມືອງ ຜາອຸດົມ ໄດ້ຮັບຜົນກາກະທົບ 5 ບ້ານ; ໄດ້ຮັບຜົນກະທົບທາງດ້ານໄພນ້ຳຖ້ວມມີ 30 ບ້ານ ກວມເອົາ 12.10 ສ່ວນຮ້ອຍຂອງບ້ານທັງໝົດ, ເມືອງ ຫ້ວຍຊາຍ ໄດ້ຮັບຜົນກະທົບ 20 ບ້ານ, ເມືອງ ຜາອຸດົມ 6 ບ້ານ, ເມືອງ ຕົ້ນຜຶ້ງ 2 ບ້ານ, ເມືອງ ເມິງ ແລະ ປາກທາ ເມືອງລະ 1 ບ້ານທີ່ໄດ້ຮັບຜົນກະທົບທາງໄພນ້ຳຖ້ວມ; ໄດ້ຮັບຜົນທາງດ້ານດິນເຈື່ອນ ມີ 10 ບ້ານ, ເມືອງ ເມິງ ແລະ ເມືອງ ຜາອຸດົມ ມີເມືອງລະ 7 ບ້ານ, ເມືອງ ປາກທາ 4 ບ້ານ ແລະ ເມືອງ ຕົ້ນເຜິ້ງ 1 ບ້ານທີ່ໄດ້ຮັບຜົນກະທົບທາງດ້ານດິນເຈື່ອນ; ໄດ້ຮັບຜົນກະທົບດ້ານພາຍຸ ມີ 4 ບ້ານ ກວມເອົາ 1.61 ສ່ວນຮ້ອຍຂອງບ້ານທັງໝົດ ເຊິ່ງເມືອງ ຫ້ວຍຊາຍ ມີ 3 ບ້ານ ແລະ ເມືອງ ຕົ້ນເຜິ້ງ 1 ບ້ານທີ່ໄດ້ຮັບຜົນກະທົບດ້ານພາຍຸ; ໄດ້ຮັບຜົນກະທົບທາງດ້ານອັກຄີໄພ ມີ 8 ບ້ານ ກວມເອົາ 3.23 ບ້ານ ກວມເອົາ 3.23 ສ່ວນຮ້ອຍຂອງບ້ານທັງໝົດ, ເມືອງ ຫ້ວຍຊາຍ ມີ 3 ບ້ານ, ເມືອງ ຕົ້ນເຜິ້ງ ແລະ ເມືອງ ປາກທາ ເມືອງລະ 2 ບ້ານ ແລະ ເມືອງ ຜາອຸດົມ 1 ບ້ານທີ່ໄດ້ຮັບຜົນກະທົບດ້ານອັກຄີໄພ; ສ່ວນໄພທາມະ

ຊາດອື່ນໆ ມີ 6 ບ້ານ ກວມເອົາ 2.42 ສ່ວນຮ້ອຍຂອງບ້ານທັງໝົດ ແລະ ເມືອງ ຫ້ວຍຊາຍ ມີ 4 ບ້ານ ແລະ ເມືອງ ຜາອຸດົມ ມີ 2 ບ້ານໄດ້ຮັບຜົນກະທົບ.

2.10 ຂໍ້ມູນດ້ານສາທາລະນະສຸກຂອງບ້ານ

ລັດໄດ້ເອົາໃຈໃສ່ປັບປຸງວຽກງານສາທາລະນະສຸກໃຫ້ມີປະສິດທະພາບ ແລະ ສະໜອງການບໍລິການດ້ານການປິ່ນປົວ ຢ່າງທົ່ວເຖິງ ແລະ ອີງຕາມແຜນປະຕິຮູບລະບົບສາທາລະນະສຸກ ແລະ ຍຸດທະສາດກ່ຽວກັບການປິ່ນປົວໃນແຕ່ລະໄລຍະ, ສົ່ງເສີມການບໍລິການການປິ່ນປົວລະຫວ່າງແພດດສະໄໝໃໝ່ ແລະ ການແພດພື້ນເມືອງແນ່ໃສ່ເຮັດໃຫ້ພົນລະເມືອງທຸກຄົນມີ ສຸຂະພາບດີ, ແຂງແຮງ ໂດຍສະເພາະແມ່ ແລະ ເດັກ, ຜູ້ທຸກຍາກ, ຜູ້ຢູ່ຫ່າງໄກຊອກຫຼີກ, ຜູ້ພິການ ແລະ ຜູ້ສູງອາຍຸ.

ຕາຕະລາງທີ 10: ບ້ານທີ່ມີໂຮງໝໍ ແລະ ສຸກສາລາ ຕັ້ງຢູ່ບ້ານ ແລະ ຢູ່ໃກ້ບ້ານ ແບ່ງຕາມເມືອງ

| ລຳດັບ | ລາຍການ | ຫົວໜ່ວຍ | ສ່ວນຮ້ອຍ | ຈຳນວນ | ເມືອງ | | | | |
|---|---|---|---|---|---|---|---|---|---|
| | | | | | ຫ້ວຍຊາຍ | ຕົ້ນເຜີ້ງ | ເມິງ | ຜາອຸດົມ | ປາກທາ |
| 1 | ບ້ານທີ່ມີໂຮງໝໍຕັ້ງຢູ່ໃນບ້ານ | ບ້ານ | 3.23 | 8 | 4 | 1 | 1 | 1 | 1 |
| 2 | ບ້ານທີ່ມີໂຮງໝໍຕັ້ງຢູ່ໃກ້ບ້ານ | ບ້ານ | 20.56 | 51 | 20 | 9 | 5 | 13 | 4 |
| 3 | ບ້ານທີ່ມີສຸກສາລາຕັ້ງຢູ່ໃນບ້ານ | ບ້ານ | 15.73 | 39 | 13 | 6 | 5 | 10 | 5 |
| 4 | ບ້ານທີ່ມີສຸກສາລາຕັ້ງຢູ່ໃກ້ບ້ານ | ບ້ານ | 45.56 | 113 | 46 | 19 | 17 | 22 | 9 |

ຈາກຕາຕາລາງທີ 10 ສະແດງໃຫ້ເຫັນວ່າ ໃນປີ 2018 ແຂວງ ບໍ່ແກ້ວ ມີໂຮງໝໍຕັ້ງຢູ່ບ້ານ 8 ບ້ານ ກວມເອົາ 3.23 ສ່ວນຮ້ອຍຂອງບ້ານທັງໝົດ, ເມືອງ ຫ້ວຍຊາຍ ມີຫຼາຍກວ່າໝູ່ຄື 4 ບ້ານ, ສ່ວນເມືອງ ຕົ້ນເຜີ້ງ, ເມືອງ ເມິງ, ເມືອງ ຜາອຸດົມ ແລະ ເມືອງ ປາກທາ ແມ່ນມີເມືອງລະ 1 ບ້ານ; ບ້ານທີ່ມີໂຮງໝໍຢູ່ໃກ້ບ້ານມີ 51 ບ້ານ ກວມເອົາ 20.56 ສ່ວນຮ້ອຍຂອງບ້ານທັງໝົດ, ໃນນັ້ນເມືອງ ຫ້ວຍຊາຍມີ 20 ບ້ານ, ເມືອງ ຜາອຸດົມ 13 ບ້ານ, ເມິງ ຕົ້ນເຜີ້ງ 9 ບ້ານ, ເມືອງ ມີ 5 ບ້ານ ແລະ ເມືອງ ປາທາມີ 4 ບ້ານທີ່ມີໂຮງໝໍຢູ່ໃຫ້ບ້ານ; ບ້ານທີ່ມີສຸກສາລາມີທັງໝົດ 39 ບ້ານ ກວມເອົາ 15.73 ສ່ວນຮ້ອຍຂອງບ້ານທັງໝົດ, ເມືອງທີ່ມີສຸກສາລາຫຼາຍກວ່າໝູ່ແມ່ນເມືອງຫ້ວຍຊາຍ 13 ບ້ານ, ເມືອງ ຜາອຸດົມ 10 ບ້ານ, ເມືອງ ຕົ້ນເຜີ້ງ 6 ບ້ານ, ເມືອງ ເມິງ ແລະ ເມືອງ ປາກທາ ແມ່ນມີເມືອງລະ 5 ບ້ານ; ມີສຸກສາລາໃກ້ບ້ານ ແມ່ນມີທັງໝົດ 113 ບ້ານ ກວມເອົສ 45.56 ສ່ວນຮ້ອຍ, ເຊິ່ງ ເມືອງ ຫ້ວຍຊາຍມີ 46 ບ້ານ, ເມືອງ ຜາອຸດົມ 22 ບ້ານ, ເມືອງ ຕົ້ນເຜີ້ງ 19 ບ້ານ, ເມືອງ ເມິງ 17 ບ້ານ ແລະ ເມືອງ ປາທາມີ 9 ບ້ານທີ່ມີສຸກສາລາໃກ້ບ້ານ.

ຕາຕະລາງທີ 11: ຈຳນວນ ຄຣີນິກ, ຮ້ານຂາຍຢາ ແລະ ຖົງຢາປະຈຳບ້ານ ແບ່ງຕາມເມືອງ

| ລາຍການ | ຫົວໜ່ວຍ | ຈຳນວນ | ເມືອງ | | | | |
|---|---|---|---|---|---|---|---|
| | | | ຫ້ວຍຊາຍ | ຕົ້ນເຜີ້ງ | ເມິງ | ຜາອຸດົມ | ປາກທາ |
| ຈຳນວນຄີນິກ | ແຫ່ງ | 14 | 12 | 2 | 0 | 0 | 0 |
| ຈຳນວນຮ້ານຂາຍຢາ | ແຫ່ງ | 85 | 41 | 15 | 3 | 10 | 16 |
| ຈຳນວນຖົງຢາປະຈຳບ້ານ | ຖົງ | 106 | 33 | 21 | 6 | 24 | 22 |

ຈາກຕາຕາລາງທີ 11 ສະແດງໃຫ້ເຫັນວ່າ ໃນປີ 2018 ແຂວງ ບໍ່ແກ້ວ ມີຄີນິກທັງໝົດ 14 ແຫ່ງ, ເຊິ່ງ ເມືອງ ຫ້ວຍຊາຍ ມີ 12 ແຫ່ງ ແລະ ເມືອງ ຕົ້ນເຜີ້ງ ມີ 2 ແຫ່ງ; ຈຳນວນຮ້ານຂາຍຢາມີທັງໝົດ 85 ແຫ່ງ, ເມືອງ ຫ້ວຍຊາຍ ມີ 41 ແຫ່ງ, ເມືອງ ຕົ້ນເຜີ້ງ ມີ 15 ແຫ່ງ, ເມືອງ ເມິງ ມີ 3 ແຫ່ງ, ເມືອງ ຜາອຸດົມ ມີ 10 ແຫ່ງ ແລະ ເມືອງ ປາກທາ ມີ 16 ແຫ່ງ; ຈຳນວນຖົງຢາຈຳບ້ານ ແມ່ນມີ 106 ຖົງ, ເຊິ່ງ ເມືອງ ຫ້ວຍຊາຍ 33 ຖົງ, ເມືອງ ຕົ້ນເຜີ້ງ 21 ຖົງ, ເມືອງ ເມິງ ມີ 6 ຖົງ, ເມືອງ ຜາອຸດົມ 24 ຖົງ ແລະ ເມືອງ ປາທາ ມີ 22 ຖົງ.

ຕາຕະລາງທີ 12: ຈຳນວນໝໍຢາຕຳແຍ ແລະ ໝໍຢາພື້ນເມືອງ ແບ່ງຕາມເມືອງ

| ລະຫັດ ເມືອງ | ຊື່ເມືອງ | ຈຳນວນໝໍຕຳແຍ | | | ໝໍຢາພື້ນເມືອງ | | |
|---|---|---|---|---|---|---|---|
| | | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ |
| 0501 | ຫ້ວຍຊາຍ | 7 | 7 | 0 | 16 | 8 | 8 |
| 0502 | ຕົ້ນເຜີ້ງ | 12 | 6 | 6 | 13 | 2 | 11 |
| 0503 | ເມິງ | 4 | 4 | 0 | 11 | 6 | 5 |
| 0504 | ຜາອຸດົມ | 53 | 30 | 23 | 18 | 5 | 13 |
| 0505 | ປາກທາ | 30 | 11 | 19 | 22 | 5 | 17 |
| | ລວມ | 106 | 58 | 48 | 80 | 26 | 54 |

ຈາກຕາຕາລາງທີ 12 ສະແດງໃຫ້ເຫັນວ່າ ໃນປີ 2018 ແຂວງ ບໍ່ແກ້ວ ມີໝໍຕຳແຍທັງໝົດ 107 ຄົນ, ໃນນັ້ນ ເປັນຍິງ 58 ຄົນ ແລະ ຊາຍ 48 ຄົນ, ເມືອງ ຫ້ວຍຊາຍ ມີໝໍຕຳແຍ 7 ຄົນ ເປັນຍິງ 7 ຄົນ, ເມືອງ ຕົ້ນເຜີ້ງ ມີໝໍຕຳແຍ 13 ຄົນ ເປັນຍິງ 6 ຄົນ, ເມືອວ ເມິງ ມີໝໍຕຳແຍ 4 ຄົນ ເປັນຍິງ 4 ຄົນ, ເມືອງ ຜາອຸດົມ ມີຫຼາຍກວ່າໝູ່ 53 ຄົນ ເປັນຍິງ 30 ຄົນ ແລະ ເມືອງ ປາກທາ 30 ຄົນ ເປັນຍິງ 11 ຄົນ; ຈຳນວນໝໍຢາພື້ນເມືອງ ໃນແຂວງ ບໍ່ແກ້ວ 80 ຄົນ, ໃນນັ້ນ ເປັນຍິງ 26 ຄົນ ແລະ ຊາຍ 54 ຄົນ, ເມືອງ ຫ້ວຍຊາຍ ມີໝໍຢາພື້ນເມືອງ 16 ຄົນ ເປັນຍິງ 8 ຄົນ, ເມືອງ ຕົ້ນເຜີ້ງ ມີ ໝໍຢາພື້ນເມືອງ 13 ຄົນ ເປັນຍິງ 2 ຄົນ, ເມືອງ ເມິງ ມີ 11 ຄົນ ເປັນຍິງ 6 ຄົນ, ເມືອງ ຜາອຸດົມ ມີ 16 ຄົນ ເປັນຍິງ 5 ຄົນ ແລະ ເມືອງ ປາກທາ ມີ 22 ຄົນ ເປັນຍິງ 5 ຄົນ.

2.11 ສະພາບຄວາມບໍ່ສະຫງົບພາຍໃນບ້ານ

ສະພາບຄວາມບໍ່ສະຫງົບ ແມ່ນປະກົດການຫຍໍ້ທໍ້ທີ່ເກີດຂຶ້ນຢູ່ໃນສັງຄົມ, ເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບ , ບໍ່ມີຄວາມເປັນລະບຽບຮຽບຮ້ອຍຢູ່ໃນສັງຄົມ ກໍ່ໃຫ້ເກີດມີຄວາມເສຍຫາຍຕໍ່ບຸກຄົນ, ລວມໝູ່ ຫຼື ຕໍ່ກັບປະເທດຊາດ ເຊັ່ນວ່າ: ປຸ້ນຈີ້ຊັບ, ນັກເລງອັນຕະພານກວນບ້ານກວນເມືອງ, ເສບຢາເສບຕິດ ແລະ ການໃຊ້ຄວາມຮຸນແຮງຕໍ່ຜູ້ອື່ນ ເປັນຕົ້ນ.

ຈາກຕາຕາລາງທີ 13 ສະແດງໃຫ້ເຫັນວ່າ ໃນປີ 2018 ແຂວງ ບໍ່ແກ້ວ ມີຄະດີຂີ້ລັກງັດແງະ, ປຸ້ນຈີ້ 219 ຄະດີ , ເຊິ່ງ ເມືອງ ຫ້ວຍຊາຍ ມີຫຼາຍກວ່າໝູ່ຄື 112 ຄະດີ ແລະ ໜ້ອຍກວ່າໝູ່ແມ່ນ ເມືອງ ຜາອຸດົມ; ມີຄະດີຍາດແຍ່ງຍາດມູນ ມໍລະດົກທັງໝົດ 7 ຄະດີ, ໃນນັ້ນ ເມືອງຫ້ວຍຊາຍ, ຕົ້ນເຜີ້ງ ແລະ ເມືອງ ປາທາ ມີເມືອງລະ 2 ຄະດີ ແລະ ເມືອງ ຜາອຸດົມ ມີ 1 ຄະດີ; ມີຄະດີຢ່າຮ້າງ 189 ຄະດີ, ໃນນັ້ນເມືອງທີ່ມີຄະດີຢ່າຮ້າງຫຼາຍກວ່າໝູ່ແມ່ນ ເມືອງ ຫ້ວຍຊາຍ 85 ຄະດີ ແລະ ເມືອງທີ່ມີຄະດີຢ່າງຮ້າງໜ້ອຍກວ່າໝູ່ແມ່ນເມືອງ ເມິງ ມີ 15 ຄະດີ; ມີການໃຊ້ຄວາມຮຸນແຮງໃນຄົວເຮືອນ ມີ 68 ຄະດີ, ເມືອງ ຫ້ວຍຊາຍ 33 ຄະດີມີຫຼາຍກວ່າໝູ່ ແລະ ເມືອງ ຕົ້ນເຜີ້ງ ແລະ ເມືອງ ເມິງ ມີໜ້ອຍກວ່າໝູ່ຄືເມືອງລະ 6 ຄະດີ; ມີຄະດີຂົ່ມຂືນກໍາທະຊໍາເລົາ 5 ຄະດີ ຄືເມືອງ ຫ້ວຍຊາຍ ແລະ ເມືອງ ຜາອຸດົມ ເມືອງລະ 2 ຄະດີ ແລະ ເມືອງ ປາກທາມີ 1 ຄະນດີ; ຄະດີຄາດຕະກໍາ ມີ 5 ຄະດີ ຄືເມືອງ ຕົ້ນເຜີ້ງ 3 ຄະດີ, ເມືອງ ຫ້ວຍຊາຍ ແລະ ປາກທາ ແມ່ນມີເມືອງລະ 1 ຄະດີ; ຄະດີດານພະນັນມີ 1 ຄະດີ ຢູ່ເມືອງ ຫ້ວຍຊາຍ; ຄະດີນັກເລງອັນຕະພານ, ແກ້ງກວນເມືອງ ແມ່ນມີ 20 ຄະດີ ຄືເມືອງ ຫ້ວຍຊາຍ 20 ຄະດີ; ຄະດີຄົນເສບຢາເສບຕິດ ມີ 1,747 ຄະດີ, ມີຫຼາຍກວ່າໝູ່ແມ່ນຢູ່ເມືອງຫ້ວຍຊາຍ 509 ຄະດີ ແລະ ໜ້ອຍກວ່າໝູ່ແມ່ນ ຜາອຸດົມ ມີ 55 ຄະດີ; ມີຄະດີຄ້າຂາຍຢາເສບຕິດ 183 ຄົນ ຄືເມືອງ ຫ້ວຍຊາຍ 70 ຄະດີຫຼາຍກວ່າໝູ່ ແລະ ເມືອງ ເມິງ ມີໜ້ອຍກວ່າໝູ່ຄື 4 ຄະດີ; ມີຄະດີຄ້າຂາຍປະເວນີທັງໝົດ 3 ຄະດີຄື ເມືອງ ຫ້ວຍຊາຍ 3 ຄະດີ.

ຕາຕະລາງທີ 13: ສະພາບຄວາມບໍ່ສະຫງົບພາຍໃນບ້ານ ແບ່ງຕາມເມືອງ

| ລາຍການ | ຫົວໜ່ວຍ | ຈໍານວນລວມ | ເມືອງ | | | | |
|---|---|---|---|---|---|---|---|
| | | | ຕົ້ນເຜີ້ງ | ປາກທາ | ຜາອຸດົມ | ຫ້ວຍຊາຍ | ເມິງ |
| ຂີ້ລັກງັດແງະ, ປຸ້ນຈີ້ | ຄັ້ງ | 219 | 112 | 30 | 22 | 12 | 43 |
| ຍາດແຍ່ງມູນມໍລະດົກ | ຄັ້ງ | 7 | 2 | 2 | 0 | 1 | 2 |
| ຢ່າຮ້າງ | ຄັ້ງ | 189 | 85 | 35 | 15 | 28 | 26 |
| ການໃຊ້ຄວາມຮຸນແຮງໃນຄົວເຮືອນ | ຄັ້ງ | 68 | 33 | 6 | 6 | 7 | 16 |
| ຂົ່ມຂືນກະທໍາຊໍາເລົາ | ຄັ້ງ | 5 | 2 | 0 | 0 | 2 | 1 |
| ຄາດຕະກໍາ | ຄັ້ງ | 5 | 1 | 3 | 0 | 0 | 1 |
| ຄະດີການພະນັນ | ຄັ້ງ | 1 | 1 | 0 | 0 | 0 | 0 |

| | | | | | | | |
|---|---|---|---|---|---|---|---|
| ນັກເລງອັນຕະພານ, ແກ້ງກວນເມືອງ | ຄົນ | 20 | 20 | 0 | 0 | 0 | 0 |
| ຄົນເສບຢາເສບຕິດ | ຄົນ | 1,747 | 509 | 277 | 509 | 55 | 397 |
| ຄົນຄ້າຂາຍຢາເສບຕິດ | ຄົນ | 183 | 70 | 40 | 4 | 24 | 45 |
| ຄົນຄ້າຂາຍປະເວນີ | ຄົນ | 3 | 3 | 0 | 0 | 0 | 0 |
| ອື່ນໆ (ເວົ້າແຈ້ງ) | ຄັ້ງ/ຄົນ | 0 | 0 | 0 | 0 | 0 | 0 |

*ແຫຼ່ງຂໍ້ມູນ: ການເກັບກຳຂໍ້ມູນ ສະຖິຕິຂັ້ນທ້ອງຖິ່ນ ແຂວງບໍ່ແກ້ວ ປີ 2018*

## ພາກທີ III. ຂໍ້ມູນອາຄານ/ຫຼັງຄາເຮືອນ

ອາຄານ/ຫຼັງຄາເຮືອນ ແມ່ນໝາຍເຖິງອາຄານ/ຫຼັງຄາເຮືອນສຳລັບທີ່ຢູ່ອາໄສຂອງຄົວເຮືອນ ແລະ ອາຄານສຳລັບວິສາຫະກິດ ແລະ ຫ້າງຮ້ານທັງໝົດ ພາຍໃນບ້ານ ຍົກເວັ້ນອາຄານສຳນັກງານຂອງລັດ ແລະ ຫ້ອງການບ້ານ.

3.1 ອາຄານ/ຫຼັງຄາເຮືອນແບ່ງຕາມປະເພດບ້ານ

ຕາຕະລາງທີ 14: ຈຳນວນອາຄານ/ຫຼັງຄາເຮືອນ ແບ່ງຕາມປະເພດບ້ານ ແລະ ເມືອງ ປີ 2018

| ລະຫັດເມືອງ | ຊື່ເມືອງ | ປະເພດບ້ານ | | | ຈຳນວນອາຄານ/ຫຼັງຄາເຮືອນທັງໝົດ | ອັດຕາສ່ວນອາຄານ/ຫຼັງຄາເຮືອນ ແບ່ງຕາມເມືອງ (%) |
|---|---|---|---|---|---|---|
| | | ຕົວເມືອງ | ຊົນນະບົດມີເສັ້ນທາງເຂົ້າເຖິງ | ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ | | |
| 0501 | ຫ້ວຍຊາຍ | 4,298 | 9,310 | 405 | 14,013 | 40.61 |
| 0502 | ຕົ້ນເຜີ້ງ | 2,648 | 3,499 | 0 | 6,147 | 17.82 |
| 0503 | ເມີງ | 599 | 2,222 | 0 | 2,821 | 8.18 |
| 0504 | ຜາອຸດົມ | 1,276 | 5,616 | 800 | 7,692 | 22.29 |
| 0505 | ປາກທາ | 745 | 3,085 | 0 | 3,830 | 11.10 |
| **ລວມ** | | **9,566** | **23,732** | **1,205** | **34,503** | **100.00** |

ຮູບສະແດງທີ 6: ຈຳນວນສ່ວນຮ້ອຍ ຂອງອາຄານ/ຫຼັງຄາເຮືອນ ແບ່ງຕາມປະເພດບ້ານ ປີ 2018




ຈາກຕາຕາລາງທີ 14 ແລະ ຮູບສະແດງທີ 9 ສະແດງໃຫ້ເຫັນວ່າ ໃນປີ 2018 ແຂວງ ບໍ່ແກ້ວ ມີຈຳນວນອາຄານ/ຫຼັງຄາເຮືອນ ແບ່ງຕາມປະເພດບ້ານຕົວເມືອງທັງໝົດ 9,566 ຫຼັງ ກວມເອົາ 28 ສ່ວນຮ້ອຍ, ອາຄານ/ຫຼັງຄາເຮືອນແບ່ງຕາມປະເພດ ບ້ານຊົນນະບົດມີເສັ້ນທາງເຂົ້າເຖິງມີຈຳນວນ 23,732 ຫຼັງ ກວມເອົາ 69 ສ່ວນຮ້ອຍ ແລະ ອາຄານ/ຫຼັງຄາເຮືອນແບ່ງຕາມປະເພດບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງມີຈຳນວນ 1,205 ຫຼັງ ກວມເອົາ 3 ສ່ວນຮ້ອຍ. ໃນນັ້ນ ເມືອງທີ່ມີອາຄານ/ຫຼັງຄາເຮືອນຫຼາຍກວ່າໝູ່ແມ່ນ ເມືອງຫ້ວຍຊາຍ ມີທັງໝົດ 14,013 ຫຼັງ ເທົ່າກັບ 40.61 ສ່ວນຮ້ອຍຂອງຈຳນວນອາຄານ/ຫຼັງຄາເຮືອນທັງໝົດ, ຮອງລົງມາແມ່ນ ເມືອງ ຜາອຸດົມ ມີ 7,692 ຫຼັງ ເທົ່າກັບ 22.29 ສ່ວນຮ້ອຍ, ເມືອງ ຕົ້ນເຜິ້ງ ມີ 6,147 ຫຼັງ ເທົ່າກັບ 17.62 ສ່ວນຮ້ອຍ , ເມືອງ ປາກທາ ມີ 3,830 ຫຼັງ ເທົ່າກັບ 11.10 ສ່ວນຮ້ອຍ ແລະ ເມືອງ ເມິງ ມີ 2,821 ເທົ່າກັບ 8.18 ສ່ວນຮ້ອຍ.

## 3.2 ອາຄານ/ຫຼັງຄາເຮືອນແບ່ງຕາມ ທີ່ຕັ້ງພູມສັນຖານບ້ານ

ຕາຕະລາງທີ 15: ຈຳນວນອາຄານ/ຫຼັງຄາເຮືອນ ແບ່ງຕາມທີ່ຕັ້ງພູມສັນຖານ ແລະ ເມືອງ ປີ 2018

| ລະຫັດເມືອງ | ຊື່ເມືອງ | ທີ່ຕັ້ງພູມສັນຖານບ້ານ | | | ລວມ |
|---|---|---|---|---|---|
| | | ທົ່ງພຽງ | ພູດອຍ | ພູພຽງ | |
| 0501 | ຫ້ວຍຊາຍ | 2,719 | 1,327 | 67 | 14,013 |
| 0502 | ຕົ້ນເຜິ້ງ | 5,442 | 267 | 438 | 6,147 |
| 0503 | ເມິງ | 951 | 334 | 1,536 | 2,821 |
| 0504 | ຜາອຸດົມ | 4,991 | 2,031 | 670 | 7,692 |
| 0505 | ປາກທາ | 745 | 587 | 2,498 | 3,830 |
| ລວມ | | 14,848 | 4,546 | 15,109 | 34,503 |

ຮູບສະແດງທີ 7: ຈຳນວນສ່ວນຮ້ອຍຂອງອາຄານ/ຫຼັງຄາເຮືອນ ແບ່ງຕາມທີ່ຕັ້ງພູມສັນຖານ ປີ 2018




ຈາກຕາຕາລາງທີ 15 ແລະ ຮູບສະແດງທີ 10 ສະແດງໃຫ້ເຫັນວ່າ ແຂວງ ບໍ່ແກ້ວ ມີຈຳນວນອາຄານ/ຫຼັງຄາເຮືອນທີ່ຢູ່ເຂດທົ່ງພຽງ 14,848 ຫຼັງ ກວມເອົາ 43.03 ສ່ວນຮ້ອຍ, ຈຳນວນອາຄານ/ຫຼັງຄາເຮືອນທີ່ຕັ້ງຢູ່ເຂດພູດອຍມີ 4,546 ຫຼັງ ເທົ່າກັບ 13.18 ສ່ວນຮ້ອຍ ແລະ ຈຳນວນ ອາຄານ/ຫຼັງຄາເຮືອນ ທີ່ຕັ້ງຢູ່ເຂດພູພຽງມີ 15,109 ຫຼັງ ກວມເອົາ 43.79 ສ່ວນຮ້ອຍ. ເມືອງ ຫ້ວຍຊາຍ ມີຈຳນວນອາຄານ/ຫຼັງຄາເຮືອນທີ່ຕັ້ງຢູ່ເຂດທົ່ງພຽງ 2,719 ຫຼັງ, ຈຳນວນອາຄານ/ຫຼັງຄາເຮືອນ ທີ່ຕັ້ງຢູ່ເຂດພູດອຍມີ 1,327 ຫຼັງ ແລະ ຈຳນວນອາຄານ/ຫຼັງຄາເຮືອນ ທີ່ຕັ້ງຢູ່ເຂດທົ່ງພຽງແມ່ນມີ 67 ຫຼັງ; ເມືອງ ຕົ້ນເຜີ້ງ ມີຈຳນວນອາຄານ/ຫຼັງຄາເຮືອນ ທີ່ຕັ້ງຢູ່ເຂດທົ່ງພຽງ 5,442 ຫຼັງ, ຈານວນອາຄານ/ຫຼັງຄາເຮືອນ ທີ່ຕັ້ງຢູ່ເຂດພູດອຍມີ 267 ຫຼັງ ແລະ ຈານວນອາຄານ/ຫຼັງຄາເຮືອນ ທີ່ຕັ້ງຢູ່ເຂດທົ່ງພຽງແມ່ນມີ 438 ຫຼັງ; ເມືອງ ເມິງ ມີຈານວນອາຄານ/ຫຼັງຄາເຮືອນ ທີ່ຕັ້ງຢູ່ເຂດທົ່ງພຽງ 951 ຫຼັງ, ຈານວນອາຄານ/ຫຼັງຄາເຮືອນ ທີ່ຕັ້ງຢູ່ເຂດພູດອຍມີ 334 ຫຼັງ ແລະ ຈຳນວນອາຄານ/ຫຼັງຄາເຮືອນ ທີ່ຕັ້ງຢູ່ເຂດທົ່ງພຽງແມ່ນມີ 1,536 ຫຼັງ; ເມືອງ ຜາອຸດົມ ມີຈານວນອາຄານ/ຫຼັງຄາເຮືອນ ທີ່ຕັ້ງຢູ່ເຂດທົ່ງພຽງ 4,991 ຫຼັງ, ຈານວນອາຄານ/ຫຼັງຄາເຮືອນ ທີ່ຕັ້ງຢູ່ເຂດພູດອຍມີ 2,031 ຫຼັງ ແລະ ຈຳນວນອາຄານ/ຫຼັງຄາເຮືອນ ທີ່ຕັ້ງຢູ່ເຂດທົ່ງພຽງແມ່ນມີ 670 ຫຼັງ; ແລະ ເມືອງ ປາກທາ ມີຈຳນວນອາຄານ/ຫຼັງຄາເຮືອນ ທີ່ຕັ້ງຢູ່ເຂດທົ່ງພຽງ 745 ຫຼັງ, ຈຳນວນອາຄານ/ຫຼັງຄາເຮືອນ ທີ່ຕັ້ງຢູ່ເຂດພູດອຍມີ 587 ຫຼັງ ແລະ ຈຳນວນອາຄານ/ຫຼັງຄາເຮືອນ ທີ່ຕັ້ງຢູ່ເຂດທົ່ງພຽງແມ່ນມີ 2,498 ຫຼັງ.

## ພາກທີ IV. ຂໍ້ມູນຄົວເຮືອນ

4.1ປະເພດຄົວເຮືອນ

ຄົວເຮືອນແມ່ນຫົວໜ່ວຍພື້ນຖານຂອງສັງຄົມ ແລະ ກໍ່ເປັນຫົວໜ່ວຍໃນການຈັດນັບຂໍ້ມູນສະຖິຕິຂັ້ນທ້ອງຖິ່ນ, ການວິໄຈໃນຄັ້ງນີ້ ແມ່ນນຳໃຊ້ນິຍາມຄົວເຮືອນດັ່ງນີ້: ຄົວເຮືອນ ແມ່ນບຸກຄົນ ຫຼື ກຸ່ມຄົນທີ່ມີການຢູ່ຮ່ວມກັນ ແລະ ດຳເນີນກິດຈະກຳປະຈຳວັນຂອງຄົວເຮືອນຢ່າງເປັນປະຈຳ, ໂດຍປົກກະຕິແລ້ວຜູ້ທີ່ອາໄສໃນຄົວເຮືອນດຽວກັນ ບໍ່ຈຳເປັນຕ້ອງມີສາຍພົວພັນທາງດ້ານສາຍເລືອດ ຫຼື ແຕ່ງງານກໍ່ໄດ້. ຄົວເຮືອນໜຶ່ງຈະປະກອບມີ: ຜົວ, ເມຍ, ລູກ, ພໍ່ແມ່, ລູກເຂີຍ-ລູກໄພ້, ຫຼານ, ພີ່ນ້ອງ ແລະ ບຸກຄົນອື່ນໆ ທີ່ບໍ່ແມ່ນຍາດພີ່ນ້ອງ, ຄົວເຮືອນແມ່ນມີ 2 ປະເພດຄື: ຄົວເຮືອນສ່ວນບຸກຄົນ ແລະ ຄົວເຮືອນລວມໝູ່.

1) ຄົວເຮືອນສ່ວນບຸກຄົນ: ແມ່ນຄົວເຮືອນດຽວ ຫຼື ຫຼາຍຄົນທີ່ຢູ່ທັງໝົດ ຫຼື ສ່ວນໃດໜຶ່ງຂອງເຮືອນທີ່ມີການກິນຢູ່, ດຳເນີນກິດຈະກຳປະຈຳວັນ ແລະ ນຳໃຊ້ເຄື່ອງສອຍຂອງຄົວເຮືອນຮ່ວມກັນຢ່າງເປັນປະຈຳ, ຄົວເຮືອນສ່ວນບຸກຄົນປະກອບມີ 2 ປະເພດຄື: ຄົວເຮືອນດ່ຽວ ແລະ ຄົວເຮືອນທີ່ມີຫຼາຍຄົນ.

- ຄົວເຮືອນດ່ຽວ: ແມ່ນຄົວເຮືອນທີ່ຄົນຜູ້ໜຶ່ງທີ່ຢູ່ທັງໝົດ ຫຼື ສ່ວນໃດໜຶ່ງຂອງເຮືອນ, ເປັນເອກະລາດຮອບດ້ານ ການດໍາລົງຊີວິດດ້ວຍຕົວຂອງລາວເອງ ໂດຍບໍ່ຂຶ້ນກັບຄົນອື່ນ ເຖິງແມ່ນວ່າລາວຈະມີ ຫຼື ບໍ່ມີປື້ມສໍາມະໂນຄົວເປັນຂອງລາວເອງກໍ່ຕາມ.
- ຄົວເຮືອນທີ່ມີຫຼາຍຄົນ: ເປັນຄົວເຮືອນທີ່ມີກຸ່ມຄົນແຕ່ສອງຄົນ ຫຼື ຫຼາຍກວ່ານັ້ນ ທີ່ຢູ່ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງຂອງເຮືອນ, ທີ່ມີການກິນຢູ່ຮ່ວມກັນ ແລະ ມີການດໍາເນີນກິດຈະກໍາປະຈໍາວັນຂອງຄົວເຮືອນຮ່ວມກັນເປັນປະຈໍາ ແລະ ນໍາໃຊ້ເຄື່ອງໃຊ້ສອຍຂອງຄົວເຮືອນທີ່ມີຄວາມຈໍາເປັນຮ່ວມກັນ. ສະມາຊິກໃນຄົວເຮືອນປະກອບມີບຸກຄົນທີ່ມີສາຍພົວພັນກັນເຊັ່ນ: ຜົວ, ເມຍ, ລູກ, ພໍ່ແມ່, ລູເຂີຍ-ລູກໄພ້, ຫຼານ, ພີ່ນ້ອງ ແລະ ບຸກຄົນອື່ນໆ ທີ່ບໍ່ແມ່ນຍາດພີ່ນ້ອງ ອາໄສຢູ່ນໍາຄົວເຮືອນຮ່ວມກັນເຖິງຈະມີ ຫຼື ບໍ່ມີປື້ມສໍາມະໂນຄົວກໍ່ຕາມ.

2) ຄົວເຮືອນລວມໝູ່: ແມ່ນຄົວເຮືອນທີ່ມີກຸ່ມຄົນທີ່ອາໄສຢູ່ໃນເຮືອນ ຫຼື ອາຄານຮ່ວມກັນທີ່ໄດ້ຂຶ້ນກັບບັນຊີການຄຸ້ມຄອງຂອງອົງການຈັດຕັ້ງໃດໜຶ່ງເຊັ່ນ: ຫໍພັກພະນັກງານ, ຫໍພັກນັກຮຽນ/ນັກສຶກສາ, ຫໍພັກກໍາມະກອນ, ວັດ, ໂບດ ແລະ ອື່ນໆ ເຊິ່ງມີລະບົບການຈັດຕັ້ງຄຸ້ມຄອງຄັກແນ່.

ຈາກຕາຕາລາງທີ 16 ສະແດງໃຫ້ເຫັນວ່າຈໍານວນຄົວເຮືອນທັງໝົດຂອງ ແຂວງ ບໍ່ແກ້ວໃນປີ 2018 ແມ່ນ 34,034 ຄົວເຮືອນ ໂດຍແບ່ງອອກເປັນຄົວເຮືອນສ່ວນບຸກຄົນ 33,892 ຄົວເຮືອນ ເທົ່າກັບ 99,58 ສ່ວນຮ້ອຍ ແລະ ຄົວເຮືອນລວມໝູ່ແມ່ນມີພຽງ 142 ຄົວເຮືອນ ເທົ່າກັບ 0.42 ສ່ວນຮ້ອຍ. ໃນນັ້ນ ເມືອງທີ່ມີຄົວເຮືອນຫຼາຍກວ່າໝູ່ແມ່ນ ເມືອງ ຫ້ວຍຊາຍ ມີຄົວເຮືອນທັງໝົດ 13,915 ຄົວເຮືອນ ກວມເອົາ 40.89 ສ່ວນຮ້ອຍຂອງຄົວເຮືອນທັງໝົດ, ແບ່ງເປັນຄົວເຮືອນສ່ວນບຸກຄົນ 13,875 ຄົວເຮືອນ ເທົ່າກັບ 40.77 ສ່ວນຮ້ອຍ, ຄົວເຮືອນ ລວມໝູ່ 40 ຄົວເຮືອນ ເທົ່າກັບ 0.12 ສ່ວນຮ້ອຍ; ຮອງລົງມາແມ່ນແມ່ນ ເມືອງ ຜາອຸດົມ ມີຄົວເຮືອນທັງໝົດ 7,692 ຄົວເຮືອນ ເທົ່າກັບ 22.60 ສ່ວນຮ້ອຍ, ແບ່ງເປັນຄົວເຮືອນສ່ວນບຸກຄົນ 7,654 ຄົວເຮືອນ ເທົ່າກັບ 22.49 ສ່ວນຮ້ອຍ; ເມືອງ ຕົ້ນເຜີ້ງ ມີ 5,896 ຄົວເຮືອນ ກວມເອົາ 17.32 ສ່ວນຮ້ອຍ, ແບ່ງເປັນ ຄົວເຮືອນສ່ວນບຸກຄົນ 5,872 ຄົວເຮືອນ ເທົ່າກັບ 17.25 ສ່ວນຮ້ອຍ, ຄົວເຮືອນລວມໝູ່ 24 ຄົວເຮືອນ ເທົ່າກັບ 0.07 ສ່ວນຮ້ອຍ; ເມືອງ ປາກທາ ມີ 3,801 ຄົວເຮືອນ ກວມເອົາ 11.17 ສ່ວນຮ້ອຍ, ແບ່ງເປັນຄົວເຮືອນສ່ວນບຸກຄົນ 3,761 ຄົວເຮືອນ ເທົ່າກັບ 11.05 ສ່ວນຮ້ອຍ, ຄວາມເຮືອນລວມໝູ່ ມີ 40 ຄົວເຮືອນ ເທົ່າກັບ 0.12 ສ່ວນຮ້ອຍ ແລະ ເມືອງທີ່ຄົວເຮືອນໜ້ອຍທີ່ສຸດແມ່ນເມືອງ ເມິງ ມີ 2,730 ຄົວເຮືອນ ກວມເອົາພຽງ 8.02 ສ່ວນຮ້ອຍ ແລະ ເປັນເມືອງດຽວໃນຫ້າເມືອງ ທີ່ບໍ່ມີຄົວເຮືອນລວມໝູ່.

ຕາຕະລາງທີ 16:ຈຳນວນຄົວເຮືອນ ແລະ ອັດຕາສ່ວນຄົວເຮືອນແບ່ງຕາມປະເພດຄົວເຮືອນ ແລະ ເມືອງ ປີ 2018

| ລະຫັດ ເມືອງ | ຊື່ເມືອງ | ຈຳນວນຄົວເຮືອນ | | | ອັດຕາສ່ວນຄົວເຮືອນ | | |
|---|---|---|---|---|---|---|---|
| | | ລວມທັງໝົດ | ສ່ວນບຸກຄົນ | ລວມໝູ່ | ລວມທັງໝົດ | ສ່ວນບຸກຄົນ | ລວມໝູ່ |
| 0501 | ຫ້ວຍຊາຍ | 13,915 | 13,875 | 40 | 40.89 | 40.77 | 0.12 |
| 0502 | ຕົ້ນເຜິ້ງ | 5,896 | 5,872 | 24 | 17.32 | 17.25 | 0.07 |
| 0503 | ເມິງ | 2,730 | 2,730 | 0 | 8.02 | 8.02 | 0.00 |
| 0504 | ຜາອຸດົມ | 7,692 | 7,654 | 38 | 22.60 | 22.49 | 0.11 |
| 0505 | ປາກທາ | 3,801 | 3,761 | 40 | 11.17 | 11.05 | 0.12 |
| **ລວມ** | | **34,034** | **33,892** | **142** | **100** | **99.58** | **0.42** |

ຈາກຕາຕາລາງທີ 17 ແລະ ຮູບສະແດງທີ 11 ເຫັນໄດ້ວ່າ ໃນປີ 2018 ແຂວງ ບໍ່ແກ້ວ ມີຈຳນວນຄົວເຮືອນແບ່ງຕາມປະເພດບ້ານຕົວເມືອງ 9,263 ຄົວເຮືອນ ກວມເອົາ 27.22 ສ່ວນຮ້ອຍຂອງຄົວເຮືອນທັງໝົດ, ຈານວນຄົວເຮືອນແບ່ງຕາມ ປະເພດບ້ານຊົນນະບົດມີເສັ້ນທາງເຂົ້າເຖິງ ແມ່ນມີ 23,567 ຄົວເຮືອນ ກວມເອົາ 69,25 ສ່ວນຮ້ອຍ ແລະ ຈຳນວນຄົວເຮືອນແບ່ງຕາມປະເພດບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງມີ 1.204 ຄົວເຮືອນ ກວມເອົາ 3.54 ສ່ວນຮ້ອຍ. ໃນນັ້ນ ເມືອງ ຫ້ວຍຊາຍມີ ຄົວເຮືອນແບ່ງຕາມປະເພດບ້ານຕົວເມິງ 4,209 ຄົວເຮືອນ, ຄົວເຮືອນແບ່ງຕາມປະເພດບ້ານຊົນນະບົດມີເສັ້ນທາງເຂົ້າເຖິງ 9,301 ຄົວເຮືອນ, ຄົວເຮືອນແບ່ງຕາມປະເພດບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງແມ່ນ 405 ຄົວເຮືອນ; ເມືອງ ຕົ້ນເຜິ້ງ ມີຄົວເຮືອນແບ່ງຕາມປະເພດບ້ານຕົວເມືອງ ແມ່ນ 2,481 ຄົວເຮືອນ ແລະ ຄົວເຮືອນແບ່ງຕາປະເພດບ້ານຊົນນະບົດມີເສັ້ນທາງເຂົ້າເຖິງແມ່ນ 3,415 ຄົວເຮືອນ; ເມືອງ ເມິງ ມີຄົວເຮືອນແບ່ງຕາມປະເພດບ້ານຕົວເມືອງ 569 ຄົວເຮືອນ ແລະ ຄົວເຮືອນແບ່ງຕາມປະເພດບ້ານ ຊົນນະບົດມີເສັ້ນທາງເຂົ້າເຖິງ 2,161 ຄົວເຮືອນ; ເມືອງ ຜາອຸດົມ ມີຄົວເຮືອນແບ່ງຕາມປະເພດບ້ານຕົວເມືອງ 1,271 ຄົວເຮືອນ, ຄົວເຮືອນແບ່ງຕາມປະເພດບ້ານຊົນນະບົດມີເສັ້ນທາງເຂົ້າເຖິງ 5,622 ຄົວເຮືອນ ແລະ ຄົວເຮືອນແບ່ງຕາມປະເພດບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງແມ່ນ 799 ຄົວເຮືອນ; ເມືອງ ປາກທາ ມີຄົວເຮືອນແບ່ງຕາມປະເພດບ້ານຕົວເມືອງ 733 ຄົວເຮືອນ ແລະ ຄົວເຮືອນແບ່ງຕາມປະເພດບ້ານຊົນນະບົດມີເສັ້ນທາງເຂົ້າເຖິງ 3,068 ຄົວເຮືອນ. ຈາກຕາຕາລາງຂ້າງເທິງຍັງສະແດງໃຫ້ເຫັນອີກວ່າ ເມືອງ ຕົ້ນເຜີ້ງ, ເມືອງ ເມິງ ແລະ ເມືອງ ປາກທາ ບໍ່ມີຄົວເຮືອນທີ່ອາໄສຢູ່ເຂດຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ.

4.2 ຈຳນວນຄົວເຮືອນແບ່ງຕາມປະເພດບ້ານ

ຕາຕະລາງທີ 17: ຈຳນວນຄົວເຮືອນແບ່ງຕາມປະເພດບ້ານ ແລະ ເມືອງ ປີ 2018

| ລະຫັດເມືອງ | ຊື່ເມືອງ | ປະເພດບ້ານ | | | ລວມ |
|---|---|---|---|---|---|
| | | ຕົວເມືອງ | ຊົນນະບົດມີ ເສັ້ນທາງເຂົ້າເຖິງ | ຊົນນະບົດບໍ່ມີ ເສັ້ນທາງເຂົ້າເຖິງ | |
| 0501 | ຫ້ວຍຊາຍ | 4,209 | 9,301 | 405 | 13,915 |
| 0502 | ຕົ້ນເຜີ້ງ | 2,481 | 3,415 | 0 | 5,896 |
| 0503 | ເມິງ | 569 | 2,161 | 0 | 2,730 |
| 0504 | ຜາອຸດົມ | 1,271 | 5,622 | 799 | 7,692 |
| 0505 | ປາກທາ | 733 | 3,068 | 0 | 3,801 |
| **ລວມ** | | **9,263** | **23,567** | **1,204** | **34,034** |

ຮູບສະແດງທີ 8: ອັດຕາສ່ວນຄົວເຮືອນທັງໝົດ ແບ່ງຕາມປະເພດບ້ານ ປີ 2018




ຈາກຕາຕາລາງທີ 18 ແລະ ຮູບສະແດງທີ 12 ສະແດງໃຫ້ເຫັນວ່າ ຈານວນຄົວເຮືອນແບ່ງຕາມທີ່ຕັ້ງພູມສັນຖານມີທັງໝົດ 34,043 ຄົວເຮືອນ. ໃນນັ້ນ, ຄົວເຮືອນທີ່ຕັ້ງຢູ່ເຂດທົ່ງພຽງແມ່ນ 14,545 ຄົວເຮືອນ ກວມເອົາ 42.74 ສ່ວນຮ້ອຍ, ຄົວເຮືອນທີ່ຕັ້ງຢູ່ເຂດພູດອຍມີ 4,472 ຄົວເຮືອນ ກວມເອົາ 13.14 ສ່ວນຮ້ອຍ ແລະ ຄົວເຮືອນທີ່ຕັ້ງຢູ່ເຂດພູພຽງມີ 15,017 ຄົວເຮືອນ ກວມເອົາ 44.12%. ເມືອງທີ່ມີຈຳນວນຄົວເຮືອນ ທີ່ຕັ້ງຢູ່ເຂດທົ່ງພຽງຫຼາຍກວ່າໝູ່ແມ່ນ ເມືອງຕົ້ນເຜີ້ງມີ 5,191 ຄົວເຮືອນ, ຮອງລົງມາເມືອງ ຜາອຸດົມມີ 4,990 ຄົວເຮືອນ, ເມືອງຫ້ວຍຊາຍມີ 2,718 ຄົວເຮືອນ, ເມືອງ ເມິງ ມີ 913 ຄົວເຮືອນ ແລະ ເມືອງ ປາກທາ 733 ຄົວເຮືອນ; ເມືອງທີ່ມີຈຳນວນຄົວເຮືອນຕັ້ງຢູ່ເຂດພູດອຍຫຼາຍກວ່າໝູ່ແມ່ນເມືອງ ຜາອຸດົມ 2,032 ຄົວເຮືອນ, ຮອງລົງມາແມ່ນເມືອງ ຫວ້ຍຊາຍມີ 1,273 ຄົວເຮືອນ, ເມືອງ ປາກທາ ມີ 586 ຄົວເຮືອນ, ເມືອງ ເມິງ ມີ 316 ຄົວເຮືອນ ແລະ ເມືອງ ຕົ້ນເຜີ້ງ 265 ຄົວເຮືອນ; ເມືອງທີ່ມີຈຳນວນຄົວເຮືອນທີ່ຕັ້ງຢູ່ເຂດພູພຽງຫຼາຍກວ່າໝູ່ແມ່ນເມືອງ ຫ້ວຍຊາຍ ມີ 9,924 ຄົວເຮືອນ, ຮອງລົງມາແມ່ນເມືອງ ປາກທາ ມີ 2,482 ຄົວເຮືອນ, ເມືອງ ເມິງ ມີ 1,501 ຄົວເຮືອນ, ເມືອງ ຜາອຸດົມ ມີ 670 ຄົວເຮືອນ ແລະ ເມືອງ ຕົ້ນເຜີ້ງ 440 ຄົວເຮືອນ.

4.3 ຈຳນວນຄົວເຮືອນແບ່ງຕາມທີ່ຕັ້ງພູມສັນຖານບ້ານ

ຕາຕະລາງທີ 18: ຈຳນວນຄົວເຮືອນ ແບ່ງຕາມທີ່ຕັ້ງພູມສັນຖານບ້ານ ແລະ ແບ່ງຕາມເມືອງປີ 2018

| ລະຫັດເມືອງ | ຊື່ເມືອງ | ທີ່ຕັ້ງພູມສັນຖານບ້ານ | | | ລວມ |
|---|---|---|---|---|---|
| | | ທົ່ງພຽງ | ພູດອຍ | ພູພຽງ | |
| 0501 | ຫ້ວຍຊາຍ | 2,718 | 1,273 | 9,924 | 13,915 |
| 0502 | ຕົ້ນເຜີ້ງ | 5,191 | 265 | 440 | 5,896 |
| 0503 | ເມິງ | 913 | 316 | 1,501 | 2,730 |
| 0504 | ຜາອຸດົມ | 4,990 | 2,032 | 670 | 7,692 |
| 0505 | ປາກທາ | 733 | 586 | 2,482 | 3,801 |
| **ລວມ** | | **14,545** | **4,472** | **15,017** | **34,034** |

ຮູບສະແດງທີ 9: ອັດຕາສ່ວນຄົວເຮືອນທັງໝົດ ແບ່ງຕາມພູມສັນຖານ ປີ 2018




ຈາກຕາຕະຕາລາງທີ 19 ສະແດງໃຫ້ເຫັນວ່າ ຈຳນວນຄົວເຮືອນທັງໝົດ ທີ່ຖືປື້ມສຳມະໂນຄົວ 32,193 ຄົວເຮືອນ ເທົ່າກັບ 94.59 ສ່ວນຮ້ອຍ ແລະ ຄົວເຮືອນທີ່ບໍ່ຖືປື້ມສຳມະໂນຄົວມີ 1,841 ຄົວເຮືອນ ເທົ່າກັບ 5,41 ຄົວເຮືອນ. ເມືອງທີ່ມີຄົວເຮືອນຖືປື້ມສຳມະໂນຄົວຫຼາຍກວ່າໝູ່ແມ່ນ ເມືອງ ຫ້ວຍຊາຍ ມີ 13,667 ຄົວເຮືອນ ເທົ່າກັບ 40.16 ສ່ວນຮ້ອຍ, ຮອງລົງມາແມ່ນເມືອງ ຜາອຸດົມ 6,560 ຄົວເຮືອນ ເທົ່າກັບ 19.27 ສ່ວນຮ້ອຍ, ເມືອງ ຕົ້ນເຜີ້ງມີ 5,726 ຄົວເຮືອນ ເທົ່າກັບ 16.82 ສ່ວນຮ້ອຍ, ເມືອງ ປາກທາ 3,635 ຄົວເຮືອນ ເທົ່າກັບ 10.68 ສ່ວນຮ້ອຍ ແລະ ເມືອງ ເມິງ 2,605 ຄົວເຮືອນ ເທົ່າກັບ 7.65 ສ່ວນຮ້ອຍ; ເມືອງທີ່ຄົວເຮືອນບໍ່ໄດ້ຖືປື້ມສຳມະໂນຄົວຫຼາຍກວ່າໝູ່ແມ່ນ ເມືອງ ຜາອຸດົມ 1.115 ຄົວເຮືອນ ເທົ່າກັບ 3.28 ສ່ວນຮ້ອຍ, ຮອງລົງມາແມ່ນເມືອງ ຫ້ວຍຊາຍມີ 272 ຄົວເຮືອນ ເທົ່າກັບ0.80 ສ່ວນຮ້ອຍ, ເມືອງ ຕົ້ນເຜີ້ງມີ 167 ຄົວເຮືອນ ເທົ່າກັບ 0.49 ສ່ວນຮ້ອຍ, ເມືອງ ປາກທາ ມີ 159 ຄົວເຮືອນ ເທົ່າກັບ 0.47 ສ່ວນຮ້ອຍ ແລະ ເມືອງ ເມິງ ມີ 128 ຄົວເຮືອນ ເທົ່າກັບ 0.38 ສ່ວນຮ້ອຍ.

4.4 ການຖືປື້ມສາມະໂຄຄົວຂອງຄົວເຮືອນ

ຕາຕະລາງທີ 19: ຈໍານວນ ຄົວເຮືອນ ມີ ແລະ ບໍ່ມີ ປື້ມສໍາມະໂນຄົວແບ່ງຕາມ ເມືອງ

| ລະຫັດ ເມືອງ | ຊື່ເມືອງ | ຈໍານວນຄົວເຮືອນ | | |
|---|---|---|---|---|
| | | ລວມທັງໝົດ | ຖຸມີປື້ມສໍາມະໂນຄົວ | ບໍ່ມີປື້ມສໍາມະໂນຄົວ |
| 0501 | ຫ້ວຍຊາຍ | 13,939 | 13,667 | 272 |
| 0502 | ຕົ້ນເຜີ້ງ | 5,893 | 5,726 | 167 |
| 0503 | ເມິງ | 2,733 | 2,605 | 128 |
| 0504 | ຜາອຸດົມ | 7,675 | 6,560 | 1,115 |
| 0505 | ປາກທາ | 3,794 | 3,635 | 159 |
| **ລວມ** | | **34,034** | **32,193** | **1,841** |

ຈາກຕາຕາລາງທີ 20 ແລະ ຮູບສະແດງທີ 10 ສະແດງໃຫ້ເຫັນວ່າ ຈໍານວນຄົວເຮືອນທີ່ເຮັດທຸລະກິດ ແມ່ນມີທັງ ໝົດ 955 ຄົວເຮືອນ ເທົ່າກັບ 2.81 ສ່ວນຮ້ອຍ, ຄົວເຮືອນທີ່ເຮັດກະສິກໍາມີຈໍານວນ 27,199 ຄົວເຮືອນ ເທົ່າກັບ 79.90 ສ່ວນຮ້ອຍ, ຄົວເຮືອນທີ່ເຮັດທັງທຸລະກິດ ແລະ ກະສິກາມີ 1,622 ຄົວເຮືອນ ເທົ່າກັບ 4.76 ສ່ວນຮ້ອຍ ແລະ ຄົວເຮືອນທີ່ບໍ່ເຮັດທັງທຸລະກິດ ແລະ ກະສິກໍາມີ 4,258 ຄົວເຮືອນ ເທົ່າກັບ 12.53 ສ່ວນຮ້ອຍ. ຄົວເຮືອນແບ່ງປະເພດຕາມກິດຈະກໍາຂອງເມືອງ ຫ້ວຍຊາຍ ເຫັນວ່າ ຄົວເຮືອນເຮັດກະສິກໍາມີຫຼາຍກວ່າໝູ່ຄື 10,116 ຄົວເຮືອນ, ຮອງລົງມາແມ່ນຄົວເຮືອນທີບໍ່ເຮັດທັງທຸລະກິດ ແລະ ກະສິກໍາ ມີ 2,621 ຄົວເຮືອນ, ຄົວເຮືອນທີ່ເຮັດທັງທຸລະກິດ ແລະ ກະສິກາ

4.5 ກິດຈະກາຂອງຄົວເຮືອນ

ຕາຕະລາງທີ 20: ຈໍານວນຄົວເຮືອນ ແບ່ງຕາມກິດຈະກໍາຂອງຄົວເຮືອນ ແລະ ແບ່ງຕາມເມືອງ

| ລະຫັດ ເມືອງ | ຊື່ເມືອງ | ຈໍານວນຄົວເຮືອນ | | | | ລວມ |
|---|---|---|---|---|---|---|
| | | ເຮັດທຸລະກິດ | ເຮັດກະສິກໍາ | ເຮັດທັງທຸລະກິດ ແລະ ເຮັດທັງກະສິກໍາ | ບໍ່ເຮັດທັງທຸລະກິດ ແລະເຮັດທັງກະສິກໍາ | |
| 0501 | ຫ້ວຍຊາຍ | 414 | 10,116 | 778 | 2,621 | 13,929 |
| 0502 | ຕົ້ນເຜີ້ງ | 253 | 4,285 | 341 | 1,006 | 5,885 |
| 0503 | ເມິງ | 31 | 2,507 | 139 | 55 | 2,732 |
| 0504 | ຜາອຸດົມ | 189 | 7,062 | 215 | 222 | 7,688 |
| 0505 | ປາກທາ | 68 | 3,229 | 149 | 354 | 3,800 |
| **ລວມ** | | **955** | **27,199** | **1,622** | **4,258** | **34,034** |

ຮູບສະແດງທີ 10: ອັດຕາສ່ວນຄົວເຮືອນ ແບ່ງຕາມກິດຈະກຳຂອງຄົວເຮືອນ ປີ 2018




ແມ່ນມີ 778 ຄົວເຮືອນ ແລະ ຄົວເຮືອນທີ່ເຮັດສະເພາະທຸລະກິດແມ່ນ 414 ຄົວເຮືອນ; ຄົວເຮືອນແບ່ງຕາມປະເພດກິດຈະກຳຂອງຂອງ ເມືອງ ຕົ້ນເຜີ້ງ ເຫັນວ່າ ຄົວເຮືອນທີ່ເຮັດກະສິກຳມີຫຼາຍກວ່າໝູ່ຄື 4,285 ຄົວເຮືອນ , ຮອງລົງມາແມ່ນຄົວເຮືອນທີ່ບໍ່ເຮັດທັງທຸລະກິດ ແລະ ກະສິກຳມີ 1,006 ຄົວເຮືອນ, ຄົວເຮືອນທີ່ເຮັດທັງທຸລະກິດ ແລະ ກະສິກຳ ມີ 341ຄົວເຮືອນ ແລະ ຄົວທີ່ເຮັດສະເພາະທຸລະກິດແມ່ນມີ 253 ຄົວເຮືອນ; ຄົວເຮືອນແບ່ງຕາມປະເພດກິດຈະກຳຂອງຂອງ ເມືອງ ເມິງ ເຫັນວ່າ ຄົວເຮືອນທີ່ເຮັດກະສິກຳມີຫຼາຍກວ່າໝູ່ຄື 2,507 ຄົວເຮືອນ, ຮອງລົງມາແມ່ນ ຄົວເຮືອນທີ່ເຮັດທັງທຸລະກິດ ແລະ ກະສິກຳ ມີ 139 ຄົວເຮືອນ, ຄົວເຮືອນທີ່ບໍ່ເຮັດທັງທຸລະກິດ ແລະ ກະສິກຳມີ 55 ຄົວເຮືອນ, ແລະ ຄົວທີ່ເຮັດສະເພາະທຸລະກິດແມ່ນມີ 31 ຄົວເຮືອນ; ຄົວເຮືອນແບ່ງຕາມປະເພດກິດຈະກຳຂອງຂອງ ເມືອງ ຜາອຸດົມ ເຫັນວ່າ ຄົວເຮືອນທີ່ເຮັດກະສິກຳມີຫຼາຍກວ່າໝູ່ຄື 7,062 ຄົວເຮືອນ, ຮອງລົງມາແມ່ນ ຄົວເຮືອນທີ່ບໍ່ເຮັດທັງທຸລະກິດ ແລະ ກະສິກຳ ມີ 222 ຄົວເຮືອນ, ຄົວເຮືອນທີ່ເຮັດທັງທຸລະກິດ ແລະ ກະສິກຳມີ 149 ຄົວເຮືອນ, ແລະ ຄົວທີ່ເຮັດສະເພາະທຸລະກິດແມ່ນມີ 189 ຄົວເຮືອນ; ຄົວເຮືອນແບ່ງຕາມປະເພດກິດຈະກຳຂອງຂອງ ເມືອງ ປາກທາ ເຫັນວ່າ ຄົວເຮືອນທີ່ເຮັດກະສິກຳມີຫຼາຍກວ່າໝູ່ຄື 3,229 ຄົວເຮືອນ, ຮອງລົງມາແມ່ນ ຄົວເຮືອນທີ່ບໍ່ເຮັດທັງທຸລະກິດ ແລະ ກະສິກຳ ມີ 354 ຄົວເຮືອນ, ຄົວເຮືອນທີ່ບໍ່ເຮັດທັງທຸລະກິດ ແລະ ກະສິກຳມີ 149 ຄົວເຮືອນ, ແລະ ຄົວທີ່ເຮັດສະເພາະທຸລະກິດແມ່ນມີ 68 ຄົວເຮືອນ. ຈາກຕາລາງຂ້າງເທິງຍັງສະແດງໃຫ້ເຫັນວ່າ ແຂວງ ບໍ່ແກ້ວ ຍັງຖືເອົາອາຊີບການເຮັດກະສິກຳ ເປັນສ່ວນໃຫຍ່, ຮອງລົງມາຈຶ່ງເປັນອາຊີບອື່ນທີ່ບໍ່ເຮັດກະສິກຳ ແລະ ທຸລະກິດ.

## ພາກທີ V: ຂໍ້ມູນດ້ານພົນລະເມືອງ

5.1ການປ່ຽນແປງຂະໜາດພົນລະເມືອງ ປີ 2018 ທຽບໃສ່ປີ 2015 ແບ່ງຕາມ ເມືອງ

ຈາກຕາຕາລາງທີ 21 ແລະ ຮູບສະແດງທີ 14 ສະແດງໃຫ້ເຫັນວ່າ ໃນປີ 2018 ຈຳນວນພົນລະເມືອງ ແຂວງ ບໍ່ແກ້ວ ແມ່ນມີທັງໝົດ 191,525 ຄົນ, ເປັນຍິງ 95,221 ຄົນ ແລະ ຊາຍ 96,304 ຄົນ ເມື່ອທຽບກັບຈຳນວນພົນລະເມືອງປີ 2015 ເຫັນວ່າ ຈຳນວນພົນລເມືອງ ແມ່ນໄດ້ເພີ່ມຂຶ້ນ 12,282 ຄົນ. ເມືອງ ຫ້ວຍຊາຍມີຈຳນວນພົນລະເມືອງເພີ່ມຂຶ້ນ 8,601 ຄົນ, ເມືອງ ເມິງ ເພີ່ມຂຶ້ນ 1,268 ຄົນ, ເມືອງ ຜາອຸດົມ ເພີ່ມ 4,196 ຄົນ, ເມືອງ ປາກທາ ເພີ່ມຂຶ້ນ 2,019 ຄົນ. ແຕ່ວ່າເມືອງ ຕົ້ນເຜີ້ງ ກັບມີຈຳນວນພົນລະເມືອງ ຫຼຸດລົງເຖິງ 3,802 ຄົນ ເນື່ອງຈາກວ່າ ໃນປີ

2018 ເມືອງ ຕົ້ນເຜີ້ງ ແມ່ນເມືອງທີ່ມີເຂດພິເສດຫຼາຍ ເຊິ່ງສ້າງຄວາມຫຍຸ້ງຍາກໃນການເກັບກາຂໍ້ມູນສະຖິຕິພົນລະເມືອງ ໃນເຂດດັ່ງກ່າວ ຈຶ່ງເຮັດໃຫ້ເມືອງ ຕົ້ນເຜີ້ງ ມີຈຳນວນພົນລະເມືອງຫຼຸດລົງ.

ຈາກຕາຕາລາງທີ 21 ແລະ ຮູບສະແດງທີ 14 ສະແດງໃຫ້ເຫັນວ່າໃນປີ 2018 ແຂວງ ບໍ່ແກ້ວ ມີພົນລະເມືອງທັງໝົດ 191,525 ຄົນ, ມີພົນລະເມືອງ ເພດຍິງ 95,217 ຄົນ ເທົ່າກັບ 49.72 ສ່ວນຮ້ອຍ, ເພດຊາຍມີ 96,293 ຄົນ ເທົ່າກັບ 50.28 ສ່ວນຮ້ອຍ. ເມືອງທີ່ມີພົນລະເມືອງ ຫຼາຍກວ່າໝູ່ແມ່ນເມືອງ ຫ້ວຍຊາຍ ມີພົນລະເມືອງທັງໝົດ 78,764 ຄົນ, ເປັນເພດຍິງ 39,135 ຄົນ ແລະ ເພດຊາຍ 39,629 ຄົນ; ຮອງລົງມາແມ່ນເມືອງ ຜາອຸດົມ ມີພົນລະເມືອງ45,105 ຄົນ, ເປັນເພດຍິງ 22,668 ຄົນ, ເພດຊາຍ 22,437 ຄົນ; ເມືອງ ຕົ້ນ ເຜີ້ງ ມີພົນລະເມືອງທັງໝົດ 30,674 ຄົນ, ເປັນເພດຍິງ 15,183 ຄົນ, ເພດຊາຍ 15,491 ຄົນ; ເມືອງ ປາກທາ ມີພົນລະເມືອງທັງໝົດ 21,193 ຄົນ, ເປັນເພດຍິງ 10,413 ຄົນ, ເພດຊາຍ 10,780 ຄົນ ແລະ ເມືອງ ເມິງ ມີພົນລະເມືອງທັງໝົດ 15,774 ຄົນ, ເປັນເພດຍິງ 7,818 ຄົນ, ເພດຊາຍ 7,956 ຄົນ. ເມື່ອທຽບກັບຈານວນພົນລະເມືອງປີ 2015 ເຫັນວ່າ ຈານວນພົນລະເມືອງ ແມ່ນ

ຕາຕະລາງທີ 21: ຈຳນວນພົນລະເມືອງ ແລະ ການປ່ຽນແປງຂອງພົນລະເມືອງໃນປີ 2018 ທຽບໃສ່ ປີ 2015

| ລະຫັດ ເມືອງ | ຊື່ເມືອງ | ຈຳນວນພົນລະເມືອງ ປີ 2015 | | | ຈຳນວນພົນລະເມືອງ ປີ 2018 | | | ການປ່ຽນແປງ |
|---|---|---|---|---|---|---|---|---|
| | | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ | |
| 0501 | ຫ້ວຍຊາຍ | 70,170 | 34,680 | 35,490 | 78,771 | 39,135 | 39,636 | 8,601 |
| 0502 | ຕົ້ນເຜີ້ງ | 34,476 | 16,976 | 17,500 | 30,674 | 15,183 | 15,491 | -3,802 |
| 0503 | ເມິງ | 14,506 | 7,200 | 7,306 | 15,774 | 7,818 | 7,956 | 1,268 |
| 0504 | ຜາອຸດົມ | 40,909 | 20,953 | 19,956 | 45,105 | 22,668 | 22,437 | 4,196 |
| 0505 | ປາກທາ | 19,182 | 9,461 | 9,721 | 21,201 | 10,417 | 10,784 | 2,019 |
| | **ລວມ** | **179,243** | **89,270** | **89,973** | **191,525** | **95,221** | **96,304** | **12,282** |

ຮູບສະແດງທີ 11: ອັດຕາສ່ວນຮ້ອຍ ຂອງພົນລະເມືອງແບ່ງຕາມເພດ




ໄດ້ເພີ່ມຂຶ້ນ 12,282 ຄົນ ໂດຍເມືອງ ຫ້ວຍຊາຍມີຈຳນວນພົນລະເມືອງເພີ່ມຂຶ້ນ 8,601 ຄົນ, ເມືອງ ເມິງ ເພີ່ມຂຶ້ນ 1,268 ຄົນ, ເມືອງ ຜາອຸດົມ ເພີ່ມ 4,196 ຄົນ, ເມືອງ ປາກທາ ເພີ່ມຂຶ້ນ 2,019 ຄົນ. ແຕ່ວ່າເມືອງ ຕົ້ນເຜີ້ງ ກັບມີຈຳນວນພົນລະເມືອງ ຫຼຸດລົງເຖິງ 3,802 ຄົນ ເນື່ອງຈາກວ່າ ໃນປີ 2018 ເມືອງ ຕົ້ນເຜີ້ງ ແມ່ນເມືອງທີ່ມີເຂດພິເສດຫຼາຍ ເຊິ່ງສ້າງຄວາມຫຍຸ້ງຍາກໃນການເກັບກຳຂໍ້ມູນສະຖິຕິພົນລະເມືອງໃນເຂດດັ່ງກ່າວ ຈຶ່ງເຮັດໃຫ້ເມືອງ ຕົ້ນເຜີ້ງ ມີຈຳນວນພົນລະເມືອງຫຼຸດລົງ.

ຮູບສະແດງທີ 12: ການປ່ຽນແປງອັດຕາສ່ວນຂອງເພດຊາຍທຽບໃສ່ເພດຍິງ ໃນປີ 2018




ຈາກຮູບສະແດງທີ 15 ສະແດງໃຫ້ເຫັນວ່າ ແຂວງບໍ່ແກ້ວ ມີຈຳນວນລວມຂອງອັດຕາສ່ວນເພດຊາຍທຽບໃສ່ເພດຍິງ ປີ 2018 ແມ່ນຢູ່ທີ່ 101.13 ສ່ວນຮ້ອຍ ໝາຍຄວາມວ່າຈຳນວນພົນລະເມືອງເພດຊາຍແມ່ນມີຫຼາຍກວ່າເພດຍິງ 1.13 ຄົນຕໍ່ຮ້ອຍຄົນ. ໃນນັ້ນ, ເມືອງ ຫ້ວຍຊາຍ ມີອັດຕາສ່ວນເພດຊາຍຢູ່ທີ່ 101.26 ສ່ວນຮ້ອຍ ເທົ່າກັບເພດຊາຍຫຼາຍກວ່າເພດຍິງ1.26 ຄົນຕໍ່ຮ້ອຍຄົນ, ເມືອງ ຕົ້ນເຜີ້ງ ມີອັດສ່ວນຢູ່ທີ່ 102.03 ສ່ວນຮ້ອຍ ເທົ່າກັບເພດຊາຍມີພົນລະເມືອງຫຼາຍກວ່າເພດຍິງ 2.03 ຄົນຕໍ່ຮ້ອຍຄົນ, ເມືອງ ເມິງ ມີອັດສ່ວນຢູ່ທີ່ 101.77 ສ່ວນຮ້ອຍ ເທົ່າກັບເທົ່າກັບເພດຊາຍຫຼາຍກວ່າເພດຍິງ 1.77 ຄົນຕໍ່ຮ້ອຍຄົນ, ເມືອງ ປາກທາ ມີອັດຕາສ່ວນຢູ່ທີ່ 103.52 ສ່ວນຮ້ອຍ ເທົ່າກັບເພດຊາຍມີຫຼາຍກວ່າເພດຍິງ 3.52 ຄົນຕໍ່ຮ້ອຍຄົນ, ສ່ວນເມືອງ ຜາອຸດົມ ແມ່ນມີອັດຕາສ່ວນເພດຢູ່ທີ່ 98.88 ສ່ວນຮ້ອຍ ໝາຍຄວາມວ່າຈະເພດຍິງແມ່ນມີຫຼາຍກວ່າເພດຊາຍ 1.02 ຄົນຕໍ່ຮອ້ຍຄົນ.

5.2 ຈານວນພົນລະເມືອງສະເລ່ຍຕໍ່ບ້ານ ແບ່ງຕາມເມືອງ

ຕາຕະລາງທີ 22: ການປ່ຽນແປງຈຳນວນພົນລະເມືອງສະເລ່ຍຕໍ່ບ້ານ ແບ່ງຕາມເມືອງ

| ລະຫັດເມືອງ | ຊື່ເມືອງ | ປີ 2018 | | |
|---|---|---|---|---|
| | | ຈຳນວນບ້ານ | ພົນລະເມືອງ | ພົນລະເມືອງສະເລ່ຍຕໍ່ບ້ານ |
| 0501 | ຫ້ວຍຊາຍ | 82 | 78,771 | 961 |
| 0502 | ຕົ້ນເຜີ້ງ | 38 | 30,674 | 807 |
| 0503 | ເມິງ | 28 | 15,774 | 563 |
| 0504 | ຜາອຸດົມ | 66 | 45,105 | 683 |
| 0505 | ປາກທາ | 34 | 21,201 | 624 |
| | ລວມ | 248 | 191,525 | 772 |

ຈາກຕາຕາລາງທີ 22 ສະແດງໃຫ້ເຫັນວ່າ ໃນປີ 2018 ແຂວງ ບໍ່ແກ້ວ ມີຈຳນວນພົນລະເມືອງສະເລ່ຍຕໍ່ບ້ານທັງໝົດແມ່ນ 772 ຄົນ. ໃນນັ້ນ, ເມືອງ ຫ້ວຍຊາຍ ມີພົນລະເມືອງສະເລ່ຍຕໍ່ບ້ານແມ່ນ 961 ຄົນ, ເມືອງ ຕົ້ນເຜີ້ງ ມີຈຳນວນພົນລະເມືອງ ສະເລ່ຍຕໍ່ບ້ານ 807 ຄົນ, ເມືອງ ເມິງ ມີຈຳນວນພົນລະເມືອງ ສະເລ່ຍຕໍ່ບ້ານ 563 ຄົນ, ເມືອງ ຜາອຸດົມ ມີພົນລະເມືອງສະເລ່ຍຕໍ່ບ້ານ 683 ຄົນ ແລະ ເມືອງ ປາກທາ ມີຈຳນວນພົນລະເມືອງສະເລ່ຍຕໍ່ບ້ານ 624 ຄົນ.

ຮູບສະແດງທີ 14: ຈຳນວນ, ຂະໜາດພົນລະເມືອງຕໍ່ບ້ານ ປີ 2018 ທຽບໃສ່ປີ 2015

5.3 ຈານວນພົນລະເມືອງແບ່ງຕາມປະເພດບ້ານ ແລະ ເມືອງ

ຕາຕະລາງທີ 23: ຈຳນວນພົນລະເມືອງແບ່ງຕາມປະເພດບ້ານ ແລະແບ່ງຕາມເມືອງ

| ລະຫັດເມືອງ | ຊື່ເມືອງ | ປະເພດບ້ານ | | | ລວມ |
|---|---|---|---|---|---|
| | | ຕົວເມືອງ | ຊົນນະບົດມີເສັ້ນທາງເຂົ້າເຖິງ | ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ | |
| 0501 | ຫ້ວຍຊາຍ | 21,731 | 53,822 | 3,218 | 78,771 |
| 0502 | ຕົ້ນເຜີ້ງ | 12,057 | 18,617 | - | 30,674 |
| 0503 | ເມິງ | 2,814 | 12,960 | - | 15,774 |
| 0504 | ຜາອຸດົມ | 6,790 | 33,772 | 4,543 | 45,105 |
| 0505 | ປາກທາ | 3,534 | 17,667 | - | 21,201 |
| | **ລວມ** | **46,926** | **136,838** | **7,761** | **191,525** |

ຮູບສະແດງທີ 13: ອັດຕາສ່ວນຮ້ອຍ ຈຳນວນພົນລະເມືອງ ແບ່ງຕາມປະເພດບ້ານ ແລະ ເມືອງ ໃນປີ 2018




ຈາກຕາຕາລາງທີ 23 ແລະ ຮູບສະແດງທີ 16 ສະແດງໃຫ້ເຫັນວ່າ ໃນປີ 2018 ແຂວງ ບໍ່ແກ້ວ ມີພົນລະເມືອງ ທີ່ອາໄສຢູ່ເຂດບ້ານຕົວເມືອງທັງໝົດ 46,926 ຄົນ ເທົ່າກັບ 24.50 ສ່ວນຮ້ອຍຂອງພົນລະເມືອງທັງໝົດພາຍໃນແຂວງ, ມີພົນລະເມືອງທີ່ອາໄສຢູ່ບ້ານຊົນນະບົດມີເສັ້ນທາງເຂົ້າເຖິງ 136,838 ຄົນ ເທົ່າກັບ 71.45 ສ່ວນຮ້ອຍຂອງພົນລະເມືອງທັງໝົດພາຍໃນແຂວງ ແລະ ພົນລະເມືອງທີ່ອາໄສຢູ່ບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ ມີ 7,761 ຄົນ ເທົ່າກັບ 4.05 ສ່ວນຮ້ອຍຂອງພົນລະເມືອງທັງໝົດພາຍໃນແຂວງ. ໃນນັ້ນ, ເມືອງ ຫ້ວຍຊາຍ ມີພົນລະເມືອງຢູ່ອາໄສຢູ່ບ້ານຕົວເມືອງ 21,731 ຄົນ, ບ້ານຊົນນະບົດບມີເສັ້ນທາງເຂົ້າເຖິງ 53,822 ຄົນ ແລະ ບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ 3.218 ຄົນ; ເມືອງ ຕົ້ນເຜີ້ງ ມີພົນລະເມືອງ ທີ່ອາໄສຢູ່ບ້ານຕົວເມືອງ 12,057 ຄົນ ແລະ ບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ 3,218 ຄົນ; ເມືອງ ເມິງ ມີພົນລະເມືອງ ທີ່ອາໄສຢູ່ບ້ານຕົວເມືອງ 2,814 ຄົນ ແລະ ບ້ານຊົນນະບົດມີເສັ້ນທາງເຂົ້າເຖິງ 18,617 ຄົນ; ເມືອງ ຜາອຸດົມ ມີພົນລະເມືອງ ທີ່ອາໄສຢູ່ບ້ານຕົວເມືອງ 6,790 ຄົນ, ບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ 33,772 ຄົນ ແລະ ບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ 4,543 ຄົນ; ແລະ ເມືອງ ປາກທາ ມີພົນລະເມືອງທີ່ອາໄສຢູ່ບ້ານຕົວເມືອງ 3,634 ຄົນ ແລະ ບ້ານຊົນນະບົດມີເສັ້ນທາງເຂົ້າເຖິງ 17,667 ຄົນ. ຕາຕາລາງຍັງສະແດງໃຫ້ເຫັນວ່າ ເມືອງ ຕົ້ນເຜີ້ງ, ເມືອງ ເມິງ ແລະ ເມືອງ ປາກທາ ໃນເຂດບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງແມ່ນບໍ່ມີພົນລະເມືອງອາໄສຢູ່ເຂດບ້ານດັ່ງກ່າວ.

5.4 ຈານວນພົນລະເມືອງແບ່ງຕາມທີ່ຕັ້ງພູມສັນຖານ ແລະ ເມືອງ

ຕາຕະລາງທີ 24: ຈຳນວນພົນລະເມືອງ ແບ່ງຕາມທີ່ຕັ້ງພູມສັນຖານ ແລະ ແບ່ງຕາມເມືອງ

| ລະຫັດ ເມືອງ | ຊື່ເມືອງ | ທີ່ຕັ້ງພູມສັນຖານບ້ານ | | | ລວມ |
|---|---|---|---|---|---|
| | | ທົ່ງພຽງ | ພູດອຍ | ພູພຽງ | |
| 0501 | ຫ້ວຍຊາຍ | 13,915 | 7,234 | 57,622 | 78,771 |
| 0502 | ຕົ້ນເຜີ້ງ | 26,743 | 1,278 | 2,653 | 30,674 |
| 0503 | ເມິງ | 4,389 | 2,086 | 9,299 | 15,774 |
| 0504 | ຜາອຸດົມ | 27,582 | 13,792 | 3,731 | 45,105 |
| 0505 | ປາກທາ | 3,534 | 3,957 | 13,710 | 21,201 |
| | ລວມ | 76,163 | 28,347 | 87,015 | 191,525 |

ຮູບສະແດງທີ 14: ອັດຕາສ່ວນຮ້ອຍ ຈຳນວນພົນລະເມືອງ ແບ່ງຕາມທີ່ຕັ້ງພູສັນຖານບ້ານ ໃນປີ 2018




ຈາກຕາຕາລາງທີ 24 ແລະ ຮູບສະແດງທີ 17 ສະແດງໃຫ້ເຫັນວ່າ ໃນປີ 2018 ແຂວງ ບໍ່ແກ້ວ ມີພົນລະເມືອງທີ່ອາໄສຢູ່ເຂດທົ່ງພຽງ ມີຈຳນວນທັງໝົດ 76,163 ຄົນ ເທົ່າກັບ 38.77 ສ່ວນຮ້ອຍຂອງພົນລະເມືອງທັງໝົດພາຍໃນແຂວງ, ພົນລະເມືອງທີ່ອາໄສຢູ່ ເຂດພູດອຍ ມີຈຳນວນທັງໝົດ 28,347 ຄົນ ເທົ່າກັບ 14.80 ສ່ວນຮ້ອຍຂອງພົນລະເມືອງທັງໝົດພາຍໃນແຂວງ ແລະ ພົນລະເມືອງທີ່ອາໄສຢູ່ເຂດພູພຽງ ມີຈຳນວນທັງໝົດ 87,015 ຄົນ ເທົ່າກັບ 45.43 ສ່ວນຮ້ອຍຂອງພົນລະເມືອງທັງໝົດພາຍໃນແຂວງ. ເມືອງ ຫວຍຊາຍມີພົນລະເມືອງ 13,915 ຄົນທີ່ອາໄສຢູ່ເຂດທົ່ງພຽງ , ມີ 7,234 ຄົນທີ່ອາໄສຢູ່ເຂດ ພູດອຍ ແລະ ມີ 57,622 ຄົນທີ່ອາໄສຢູ່ເຂດພູພຽງ; ເມືອງ ຕົ້ນເຜີ້ງ ມີ 26,743 ຄົນ ທີ່ອາໄສຢູ່ເຂດທົ່ງພຽງ, ມີ 1,278 ຄົນທີ່ອາໄສຢູ່ເຂດພູດອຍ ແລະ ມີ 2,653 ຄົນທີ່ອາໄສຢູ່ເຂດພູພຽງ; ເມືອງ ເມິງ ມີ 4,389 ຄົນ ທີ່ອາໄສຢູ່ເຂດທົ່ງພຽງ, ມີ 2,086 ຄົນທີ່ອາໄສຢູ່ເຂດພູດອຍ ແລະ ມີ 9,299 ຄົນທີ່ອາໄສຢູ່ເຂດພູພຽງ; ເມືອງ ຜາອຸດົມ ມີ 27,582 ຄົນ ທີ່ອາໄສຢູ່ເຂດທົ່ງພຽງ, ມີ 13,792 ຄົນທີ່ອາໄສຢູ່ເຂດພູດອຍ ແລະ ມີ 3,731 ຄົນທີ່ອາໄສຢູ່ເຂດພູພຽງ ແລະ ເມືອງ ປາກທາ ມີ 3,534 ຄົນ ທີ່ອາໄສຢູ່ເຂດທົ່ງພຽງ, ມີ 3,957 ຄົນທີ່ອາໄສຢູ່ເຂດພູດອຍ ແລະ ມີ 13,710 ຄົນທີ່ອາໄສຢູ່ເຂດພູພຽງ.

5.5ຂະໜາດຂອງພົນລະເມືອງ ຕໍ່ຄົວເຮືອນ ແບ່ງຕາມເມືອງ

ຕາຕະລາງທີ 25: ຂະໜາດຂອງພົນລະເມືອງຕໍ່ຄົວເຮືອນ ແບ່ງຕາມເມືອງ ປີ 2018

| ລະຫັດ ເມືອງ | ຊື່ເມືອງ | ປີ 2015 | | | ປີ 2018 | | |
|---|---|---|---|---|---|---|---|
| | | ຈຳນວນ ຄົວເຮືອນ | ຈຳນວນ ພົນລະເມືອງ | ພົນລະເມືອງ ສະເລ່ຍຕໍ່ ຄົວເຮືອນ | ຈຳນວນ ຄົວເຮືອນ | ຈຳນວນ ພົນລະເມືອງ | ພົນລະເມືອງ ສະເລ່ຍຕໍ່ ຄົວເຮືອນ |
| 0501 | ຫ້ວຍຊາຍ | 13,115 | 70,170 | 5 | 13,939 | 78,771 | 6 |
| 0502 | ຕົ້ນເຜີ້ງ | 7,399 | 34,476 | 5 | 5,893 | 30,674 | 5 |
| 0503 | ເມິງ | 2,677 | 14,506 | 5 | 2,733 | 15,774 | 6 |
| 0504 | ຜາອຸດົມ | 7,179 | 40,909 | 6 | 7,675 | 45,105 | 6 |
| 0505 | ປາກທາ | 3,622 | 19,182 | 5 | 3,794 | 21,201 | 6 |
| ລວມ | | 33,992 | 179,243 | 5 | 34,034 | 191,525 | 6 |

ຈາກຕາຕາລາງທີ 25 ສະແດງໃຫ້ເຫັນວ່າ ໃນປີ 2018 ແຂວງ ບໍ່ແກ້ວ ຈຳນວນພົນລະເມືອງສະເລ່ຍຕໍ່ຄົວເຮືອນ ແມ່ນ 6 ຄົນຕໍ່ຄົວເຮືອນ ເມື່ອທຽບກັບປີ 2015 ແມ່ນມີພົນລະເມືອງຕໍ່ຄົວເຮືອນແມ່ນ 5 ຄົນຕໍ່ຄົວເຮືອນ ໝາຍຄວາມວ່າຈຳນວນພົນລະເມືອງຕໍ່ຄົວເຮືອນຂອງແຂວງບໍ່ແກ້ວບໍ່ມີການປ່ຽນແປງຫຼາຍ ເຊິ່ງສະແດງຄື ເມືອງ ຫ້ວຍຊາຍ, ເມືອງ ເມິງ ແລະ ເມືອງ ປາກທາ ມີຈຳນວນພົນລະເມືອງໃນປີ 2015 ສະເລ່ຍ 5 ຄົນຕໍ່ຄົວເຮືອນ ແລະ ປີ 2018 ເພີ່ມຂຶ້ນເປັນ 6 ຄົນຕໍ່ຄົວເຮືອນ, ສ່ວນເມືອງ ຕົ້ນເຜິ້ງ ພົນລະເມືອງສະເລ່ຍປີ 2015 ແລະ 2018 ແມ່ນເທົ່າກັນຢູ່ທີ່ 5 ຄົນຕໍ່ຄົວເຮືອນ , ແລະ ເມືອງ ຜາອຸດົມ ປີ 2015 ແລະ 2018 ແມ່ນມີພົນລະເມືອງສະເລ່ຍເທົ່າກັນຢູ່ທີ່ 6 ຄົນຕໍ່ຄົວເຮືອນ.

## ພາກທີ VI. ຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ

ຫົວໜ່ວຍວິສາກະກິດ ແລະ ຫ້າງຮ້ານ ແມ່ນການຈັດນັບ ແລະ ເກັບກຳຂໍ້ມູນພື້ນຖານທີ່ຈຳເປັນຂອງບັນດາຫົວໜ່ວຍເສດຖະກິດພື້ນຖານທຸກຫົວໜ່ວຍ ໃນຂອບເຂດການປົກຄອງຂອງບ້ານ ຊຶ່ງລວມເອົາບັນດາຫົວໜ່ວຍທີ່ຂຶ້ນກັບລັດ, ເອກະຊົນ ແລະ ການລົງທຶນຂອງຕ່າງປະເທດ ໂດຍບໍ່ກຳນົດນົດຂະໜາດ ບໍ່ວ່າຈະເປັນທຸລະກິດຂະໜາດນ້ອຍ, ກາງ ແລະ ໃຫຍ່. ນອກຈາກນີ້ ຍັງໄດ້ລວມເອົາບັນດາຫົວໜ່ວຍການຜະລິດ, ການບໍລິການ ທີ່ເປັນທຸລະກິດຂອງຄົວເຮືອນ.

6.1 ຈານວນຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານແບ່ງຕາມເມືອງ

ຕາຕະລາງທີ 26ຈຳນວນຫົວໜ່ວຍວິສາຫະກິດແບ່ງຕາມ ເມືອງ

| ລະຫັດເມືອງ | ຊື່ເມືອງ | ຈຳນວນຫົວໜ່ວຍວິສາຫະກິດ | ອັດຕາສ່ວນຂອງຫົວໜ່ວຍວິສາຫະກິດ |
|---|---|---|---|
| 0501 | ຫ້ວຍຊາຍ | 1,207 | 46.21 |
| 0502 | ຕົ້ນເຜິ້ງ | 618 | 23.66 |
| 0503 | ເມິງ | 151 | 5.78 |
| 0504 | ຜາອຸດົມ | 387 | 14.82 |
| 0505 | ປາກທາ | 249 | 9.53 |
| ລວມ | | 2,612 | 100.00 |

ຈາກຕາຕາລາງທີ 26 ສະແດງໃຫ້ເຫັນວ່າ ໃນປີ 2018 ແຂວງບໍ່ແກ້ວມີຈຳນວນຫົວໜ່ວຍວິສາຫະກິດທັງໝົດ 2,612 ຫົວໜ່ວຍ. ໃນນັ້ນ ເມືອງທີ່ມີຫົວໜ່ວຍວິສາຫະກິດຫຼາຍກວ່າໝູ່ແມ່ນເມືອງ ຫ້ວຍຊາຍ ມີທັງໝົດ 1,207 ກວມເອົາ 46.21 ສ່ວນຮ້ອຍຂອງຫົວໜ່ວຍທັງໝົດ, ຮອງລົງມາແມ່ນເມືອງ ຕົ້ນເຜິ້ງ ມີ 618 ຫົວໜ່ວຍ ກວມເອົາ 23.66 ສ່ວນຮ້ອຍ, ເມືອງ ຜາອຸດົມ ມີ 387 ຫົວໜ່ວຍ ກວມເອົາ 14.82 ສ່ວນຮ້ອຍ, ເມືອງ ປາກທາ ມີ 249 ຫົວໜ່ວຍ ກວມເອົາ 9.53 ສ່ວນຮ້ອຍ ແລະ ເມືອງ ເມິງ ມີຫົວໜ່ວຍໜ້ອຍທີ່ສຸດຄື 151 ຫົວໜ່ວຍ ກວມເອົາ 5.78 ສ່ວນຮ້ອຍ.

6.2 ຈານວນຫົວໜ່ວຍວິສາຫະກິດແບ່ງຕາມປະເພດບ້ານ ແລະ ເມືອງ

ຕາຕະລາງທີ 27: ຈຳນວນຫົວໜ່ວຍວິສາຫະກິດແບ່ງຕາມປະເພດບ້ານ ແລະ ແບ່ງຕາມເມືອງ

| ລະຫັດເມືອງ | ຊື່ເມືອງ | ຫົວໜ່ວຍວິສາຫະກິດແບ່ງຕາມປະເພດບ້ານ | | |
|---|---|---|---|---|
| | | ຕົວເມືອງ | ຊົນນະບົດ ມີເສັ້ນທາງເຂົ້າເຖິງ | ຊົນນະບົດ ບໍ່ມີເສັ້ນທາງເຂົ້າເຖິງ |
| 0501 | ຫ້ວຍຊາຍ | 527 | 657 | 23 |
| 0502 | ຕົ້ນເຜິ້ງ | 380 | 238 | 0 |
| 0503 | ເມິງ | 44 | 107 | 0 |
| 0504 | ຜາອຸດົມ | 130 | 234 | 23 |
| 0505 | ປາກທາ | 64 | 183 | 2 |
| ລວມ | | 1,145 | 1,419 | 48 |

ຈາກຕາຕາລາງທີ 27 ແລະ ຮູບສະແດງທີ 18 ສະແດງໃຫ້ເຫັນວ່າ ໃນປີ 2018 ແຂວງ ບໍ່ແກ້ວ ມີຈຳນວນຫົວໜ່ວຍວິສາຫະກິດແບ່ງຕາມປະເພດບ້ານຕົວເມືອງ ແມ່ນມີ 1,145 ຫົວໜ່ວຍ ກວມເອົາ 43.84 ສ່ວນຮ້ອຍ, ແບ່ງຕາມປະເພດ

ຮູບສະແດງທີ 15: ອັດຕາສ່ວນຮ້ອຍຂອງຫົວໜ່ວຍວິສາຫະກິດແບ່ງຕາມປະເພດບ້ານ




ບ້ານຊົນນະບົດມີເສັ້ນທາງເຂົ້າເຖິງ ແມ່ນມີ 1,419 ຫົວໜ່ວຍ ກວມເອົາ 54.33 ສ່ວນຮ້ອຍ ແລະ ແບ່ງຕາມປະເພດບ້ານຊົນນະບົດບໍ່ມີເສັ້ນ ທາງເຂົ້າເຖິງ ແມ່ນມີ 48 ຫົວໜ່ວຍ ກວມເອົາ 1.84 ສ່ວນຮ້ອຍ. ເຊິ່ງໃນນັ້ນ ເມືອງ ຫ້ວຍຊາຍ ມີຫົວໜ່ວຍແບ່ງຕາມປະເພດບ້ານຕົວເມືອງ 527 ຫົວໜ່ວຍ, ບ້ານຊົນນະບົດມີເສັ້ນທາງເຂົ້າເຖິງ 657 ຫົວໜ່ວຍ ແລະ ຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ 23 ຫົວໜ່ວຍ; ເມືອງ ຕົ້ນເຜິ້ງມີຫົວໜ່ວຍແບ່ງຕາມປະເພດບ້ານຕົວເມືອງ 380 ຫົວໜ່ວຍ ແລະ ບ້ານຊົນນະບົດມີເສັ້ນທາງເຂົ້າເຖິງ 238 ຫົວໜ່ວຍ; ເມືອງ ເມິງ ມີຫົວໜ່ວຍແບ່ງຕາມບ້ານຕົວເມືອງ 44 ຫົວໜ່ວຍ ແລະ ບ້ານຊົນນະບົດມີເສັ້ນທາງເຂົ້າເຖິງ 107 ຫົວໜ່ວຍ; ເມືອງ ຜາອຸດົມ ມີຫົວໜ່ວຍແບ່ງຕາມບ້ານຕົວເມືອງ 130 ຫົວໜ່ວຍ , ບ້ານຊົນນະບົດມີເສັ້ນທາງເຂົ້າເຖິງ 234 ຫົວໜ່ວຍ ແລະ ບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ 23 ຫົວໜ່ວຍ ແລະ ເມືອງ ປາກທາ ມີຫົວໜ່ວຍແບ່ງຕາມບ້ານຕົວເມືອງ 64 ຫົວໜ່ວຍ, ບ້ານຊົນນະບົດມີເສັ້ນທາງເຂົ້າເຖິງ 183 ຫົວໜ່ວຍ ແລະ ບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ 2 ຫົວໜ່ວຍ.

6.3 ຈານວນທົວໜ່ວຍວິສາຫະກິດແບ່ງຕາມທີ່ຕັ້ງພູມສັນຖານ ແລະ ເມືອງ

ຕາຕະລາງທີ 28ຈຳນວນຫົວໜ່ວຍວິສາຫະກິດແບ່ງຕາມທີ່ຕັ້ງພູມສັນຖານ ແລະ ເມືອງ ປີ 2018

| ລະຫັດເມືອງ | ຊື່ເມືອງ | ຫົວໜ່ວຍວິສາຫະກິດແບ່ງຕາມທີ່ຕັ້ງພູມສັນຖານ | | |
|---|---|---|---|---|
| | | ທົ່ງພຽງ | ພູດອຍ | ພູພຽງ |
| 0501 | ຫ້ວຍຊາຍ | 238 | 7 | 962 |
| 0502 | ຕົ້ນເຜີ້ງ | 548 | 41 | 29 |
| 0503 | ເມິງ | 47 | 35 | 69 |
| 0504 | ຜາອຸດົມ | 316 | 47 | 24 |
| 0505 | ປາກທາ | 64 | 29 | 156 |
| ລວມ | | 1,213 | 159 | 1,240 |

ຮູບສະແດງທີ 16: ອັດຕາສ່ວນຂອງຫົວໜ່ວຍວິສາຫະກິດແບ່ງຕາມທີ່ຕັ້ງພູມສັນຖານ ປີ 2018




ຈາກຂໍ້ມູນຕາຕະລາງທີ 29 ແລະ ຮູບສະແດງທີ 23 ສະແດງໃຫ້ເຫັນວ່າ ຈຳນວນຫົວໜ່ວຍວິສາຫະກິດທັງໝົດ ຢູ່ພາຍໃນແຂວງ ບໍ່ແກ້ວ ມີຈານວນ 2,612 ຫົວໜ່ວຍ, ເຊິ່ງໃນນີ້ ຫົວໜ່ວຍທີ່ຕັ້ງຢູ່ ບ້ານເຂດທົ່ງພຽງ ຈຳນວນ 1,213 ຫົວໜ່ວຍ ກວມເອົາ 46.44 ສ່ວນຮ້ອຍ, ເຂດພູພຽງ ຈຳນວນ 1,240 ຫົວໜ່ວຍ ເທົ່າກັບ 47.47 ສ່ວນຮ້ອຍ, ແລະ ເຂດພູດອຍ 159 ຫົວໜ່ວຍ ກວມເອົາ 6.09 ສ່ວນຮ້ອຍ.

## 6.4 ເພດເຈົ້າຂອງຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ

ຕາຕະລາງທີ 29: ເຈົ້າຂອງຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານແບ່ງຕາມເພດ ແລະເມືອງ

| ລະຫັດເມືອງ | ຊື່ເມືອງ | ຈຳນວນເຈົ້າຂອງວິສາຫະກິດ ແລະ ຫ້າງຮ້ານ | | |
|---|---|---|---|---|
| | | ຊາຍ | ຍິງ | ລວມ |
| 0501 | ຫ້ວຍຊາຍ | 1,023 | 184 | 1,207 |
| 0502 | ຕົ້ນເຜີ້ງ | 324 | 294 | 618 |
| 0503 | ເມິງ | 105 | 46 | 151 |
| 0504 | ຜາອຸດົມ | 352 | 35 | 387 |
| 0505 | ປາກທາ | 225 | 24 | 249 |
| ລວມ | | 2,029 | 583 | 2,612 |

## 6.5 ທະບຽນ ແລະ ອາກອນຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ

ຕາຕະລາງທີ 30: ໃບທະບຽນ ແລະ ອາກອນ ຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ ແບ່ງຕາມເມືອງ

| ລະຫັດ ເມືອງ | ຊື່ເມືອງ | ໃບທະບຽນ ແລະ ອາກອນ | | | | ຈຳນວນ |
|---|---|---|---|---|---|---|
| | | ມີເລກ ທະບຽນບໍ່ມີ ອາກອນ | ມີເລກອາກອນ ບໍ່ມີເລກ ທະບຽນ | ມີເລກ ທະບຽນແລະ ມີເລກອາກອນ | ບໍ່ມີເລກທະບຽນ ແລະບໍ່ມີເລກ ອາກອນ | |
| 0501 | ຫ້ວຍຊາຍ | 283 | 61 | 622 | 241 | 1207 |
| 0502 | ຕົ້ນເຜີ້ງ | 1 | 36 | 472 | 109 | 618 |
| 0503 | ເມິງ | 0 | 1 | 98 | 52 | 151 |
| 0504 | ຜາອຸດົມ | 3 | 59 | 182 | 143 | 387 |
| 0505 | ປາກທາ | 0 | 0 | 0 | 249 | 249 |
| | **ລວມ** | **287** | **157** | **1374** | **794** | **2,612** |

ຕາຕະລາງທີ 31ຂັ້ນອະນຸມັດຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ ແບ່ງຕາມເມືອງ

| ລະຫັດ ເມືອງ | ຊື່ເມືອງ | ຈຳນວນຫົວໜ່ວຍມີໃບທະບຽນວິສາຫະກິດ | ຂັ້ນອະນຸມັດ | | |
|---|---|---|---|---|---|
| | | | ຂັ້ນສູນກາງ | ຂັ້ນແຂວງ | ຂັ້ນເມືອງ |
| 0501 | ຫ້ວຍຊາຍ | 1,207 | 0 | 0 | 1,207 |
| 0502 | ຕົ້ນເຜີ້ງ | 474 | 11 | 8 | 455 |
| 0503 | ເມິງ | 99 | 0 | 0 | 99 |
| 0504 | ຜາອຸດົມ | 185 | 0 | 15 | 170 |
| 0505 | ປາກທາ | * | * | * | * |
| ລວມ | | 1,965 | 11 | 23 | 1,931 |

ຕາຕະລາງທີ 32: ຂັ້ນຄຸ້ມຄອງອາກອນຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານທີ່ ແບ່ງຕາມເມືອງ

